# ປື້ມຄູ່ມື
# ການກໍານົດຂໍ້ເທັດຈິງ
# ໃນການດໍາເນີນຄະດີອາຍາ

## Handbook of Fact Finding in Criminal Procedure

2023

# ປຶ້ມຄູ່ມື

# ການກຳນົດຂໍ້ເທັດຈິງໃນການດຳເນີນຄະດີອາຍາ

# Handbook of Fact Finding in Criminal Procedure


**ໂດຍ ກຸ່ມພັດທະນາການສຶກສາ ແລະ ຝຶກອົບຮົມໃນຂົງເຂດຍຸຕິທຳ (ກຸ່ມຍ່ອຍອາຍາ)**

ໂຄງການສົ່ງເສີມການພັດທະນາ ແລະ ສ້າງຄວາມເຂັ້ມແຂງ ລັດທີ່ປົກຄອງດ້ວຍກົດໝາຍ

ໃນຂົງເຂດຍຸຕິທຳ

ດ້ວຍການຮ່ວມມື ລະຫວ່າງ ຄະນະນິຕິສາດ ແລະ ລັດຖະສາດ, ມະຫາວິທະຍາໄລແຫ່ງຊາດ,

ອົງການໄອຍະການປະຊາຊົນ, ສານປະຊາຊົນສູງສຸດ ແລະ ກະຊວງຍຸຕິທຳ

ກັບ ອົງການຮ່ວມມືສາກົນ ຍີ່ປຸ່ນ (JICA)



ປີ 2023

## ຄະນະຊີ້ນຳໂຄງການ

| | |
|---|---|
| ທ່ານ ສຈ. ປອ. ຮຸ່ງເພັດ ຈັນທະວົງ | ຮອງອະທິການບໍດີມະຫາວິທະຍາໄລແຫ່ງຊາດ |
| ທ່ານ ຄຳເພັດ ສິມວໍລະຈິດ | ຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ |
| ທ່ານ ບຸນຂວາງ ທະວີສັກ | ຮອງປະທານສານປະຊາຊົນສູງສຸດ |
| ທ່ານ ເກດສະໜາ ພົມມະຈັນ | ຮອງລັດຖະມົນຕີກະຊວງຍຸຕິທຳ |

## ຄະນະບໍລິຫານງານໂຄງການ

| | |
|---|---|
| ທ່ານ ຣສ. ປອ. ວຽງວິໄລ ທ່ຽງຈັນໄຊ | ຄະນະບໍດີ ຄະນະນິຕິສາດ ແລະ ລັດຖະສາດ,<br>ມະຫາວິທະຍາໄລແຫ່ງຊາດ |
| ທ່ານ ບົວລີ ເພັດມີໄຊ | ຫົວໜ້າກົມຕິດຕາມກວດກາ ການດຳເນີນຄະດີແພ່ງ,<br>ອົງການໄອຍະການປະຊາຊົນສູງສຸດ |
| ທ່ານ ຈັນທະລີ ດວງວິໄລ | ຜູ້ພິພາກສາອາວຸໂສ, ສານປະຊາຊົນສູງສຸດ |
| ທ່ານ ນະລົງລິດ ນໍລະສິງ | ຫົວໜ້າຫ້ອງການ, ກະຊວງຍຸຕິທຳ |

## ຄົ້ນຄວ້າ ແລະ ຮຽບຮຽງໂດຍ ກຸ່ມພັດທະນາການສຶກສາ ແລະ ຝຶກອົບຮົມໃນຂົງເຂດຍຸຕິທຳ (ກຸ່ມຍ່ອຍອາຍາ)

| | |
|---|---|
| ທ່ານ ຣສ. ປອ. ວຽງວິໄລ ທ່ຽງຈັນໄຊ | ຄະນະນິຕິສາດ ແລະ ລັດຖະສາດ,<br>ມະຫາວິທະຍາໄລແຫ່ງຊາດ |
| ທ່ານ ອຈ. ປທ. ນ. ວິໄລ ລັງກາວົງ | ຄະນະນິຕິສາດ ແລະ ລັດຖະສາດ,<br>ມະຫາວິທະຍາໄລແຫ່ງຊາດ |
| ທ່ານ ອຈ. ບຸນລ້ຽງ ວົງສຳພັນ | ຄະນະນິຕິສາດ ແລະ ລັດຖະສາດ,<br>ມະຫາວິທະຍາໄລແຫ່ງຊາດ |
| ທ່ານ ນ. ພອນເພັດ ອຸ່ນແກ້ວ | ອົງການໄອຍະການປະຊາຊົນສູງສຸດ |
| ທ່ານ ນ. ບົວຄຳ ປະດັບດີ | ອົງການໄອຍະການປະຊາຊົນສູງສຸດ |
| ທ່ານ ນ. ປີຍາ ພົນເສນາ | ອົງການໄອຍະການປະຊາຊົນສູງສຸດ |
| ທ່ານ ນ. ແສງສຸດາ ສີປະເສີດ | ອົງການໄອຍະການປະຊາຊົນສູງສຸດ |
| ທ່ານ ພຸດທະສອນ ທຳມະວົງ | ອົງການໄອຍະການປະຊາຊົນສູງສຸດ |

| | |
|---|---|
| ທ່ານ ທິບພະສອນ ລາດວົງໄຊ | ສານປະຊາຊົນສູງສຸດ |
| ທ່ານ ຈັນສຸກ ຄຳພູ | ສານປະຊາຊົນສູງສຸດ |
| ທ່ານ ນ. ອອນອານົງ ຫຼວງອາໄພ | ກະຊວງຍຸຕິທຳ |
| ທ່ານ ນ. ປາດຖະໜາ ບຸນເພັງ | ສະຖາບັນຍຸຕິທຳແຫ່ງຊາດ, ກະຊວງຍຸຕິທຳ |
| ທ່ານ ນ. ສີສະຫວາດ ມະນີວົງ | ສະຖາບັນຍຸຕິທຳແຫ່ງຊາດ, ກະຊວງຍຸຕິທຳ |
| ທ່ານ ນ. ມະນີຈັນ ພິລາພັນ | ສະພາທະນາຍຄວາມ |

**ນັກກົດໝາຍຜູ້ຊົງຄຸນວຸດທິ**

| | |
|---|---|
| ທ່ານ ສຈ. ດາວອນ ຫວ່າງວິຈິດ | ນັກກົດໝາຍຜູ້ຊົງຄຸນວຸດທິ |
| ທ່ານ ສຈ. ເກດ ກຽດຕິສັກ | ນັກກົດໝາຍຜູ້ຊົງຄຸນວຸດທິ |

**ຜູ້ຮ່ວມມີຄຳເຫັນຈາກຝ່າຍຍີ່ປຸ່ນ**

| | |
|---|---|
| Mr. HATOKO Masanori | Attorney at Law |
| Advisory Group Members | RTI, Ministry of Justice, Japan |
| Mr. HAYATO Yaoita | JICA Project Legal Expert |
| Mr. MAEDA Yoshiyuki | JICA Project Legal Expert |
| Mr. ITO Atsushi | JICA Project Legal Expert |
| Expert of ICD Professors | ICD, Ministry of Justice, Japan |

# ຄຳນຳ

ປື້ມຄູ່ມື ການກຳນົດຂໍ້ເທັດຈິງ ໃນການດຳເນີນຄະດີອາຍາເຫຼັ້ມນີ້ ມີຄວາມສຳຄັນ ແລະ ຈຳເປັນຫຼາຍ ສຳລັບຜູ້ທີ່ກຳລັງສຶກສາກົດໝາຍ, ວິຊາຊີບກົດໝາຍ, ທະນາຍຄວາມ, ໄອຍະການ, ຜູ້ພິພາກສາ ກໍຄື ນັກວິຊາການກົດໝາຍຂອງ ສປປ ລາວ ເນື່ອງຈາກວ່າຄວາມເຂົ້າໃຈຂອງພາກສ່ວນທີ່ກ່ຽວຂ້ອງຕໍ່ການກຳນົດ ຂໍ້ເທັດຈິງ ໃນການດຳເນີນຄະດີອາຍາໄລຍະຜ່ານມາ ເຫັນວ່າ ຍັງບໍ່ທັນມີ ວິທີການທີ່ຊັດເຈນ ແລະ ບໍ່ທັນເປັນ ເອກະພາບກັນເທົ່າທີ່ຄວນ. ສະນັ້ນ, ເພື່ອເຮັດໃຫ້ການກຳນົດຂໍ້ເທັດຈິງມີຄວາມຊັດເຈນ ແລະ ກ້າວໄປຫາ ຄວາມເປັນເອກະພາບກັນເທື່ອລະກ້າວ. ຄະນະນິຕິສາດ ແລະ ລັດຖະສາດ, ມະຫາວິທະຍາໄລແຫ່ງຊາດ, ອົງການໄອຍະການປະຊາຊົນສູງສຸດ, ສານປະຊາຊົນສູງສຸດ ແລະ ກະຊວງຍຸຕິທຳ ຈຶ່ງໄດ້ແຕ່ງຕັ້ງຄະນະ ຮັບຜິດຊອບຈາກພາກສ່ວນຂອງຕົນ ເປັນຄະນະຄົ້ນຄວ້າຮ່ວມກັບຊ່ຽວຊານ ຈາກປະເທດຍີ່ປຸ່ນ ເພື່ອຄົ້ນຄວ້າ ການກຳນົດຂໍ້ເທັດຈິງໃນການດຳເນີນຄະດີອາຍາ ເປັນກໍລະນີສຶກສາ ສ້າງວິທີຄິດຢ່າງເປັນລະບົບ ແລະ ສ້າງ ຄວາມເຂັ້ມແຂງ ໃຫ້ແກ່ບຸກຄະລາກອນໃນຂົງເຂດຍຸຕິທຳຂອງ ສປປ ລາວ.

ປື້ມຄູ່ມືເຫຼັ້ມນີ້ ປະກອບມີ ສີ່ ກໍລະນີສຶກສາ ຄື 1) ການຄາດຕະກຳ (ດ້ວຍການຈູດ) ທີ່ພິສູດຈາກຄຳ ໃຫ້ການຂອງຜູ້ເຫັນເຫດການ, 2) ການຂົ່ມຂືນທຳຊຳເລົາ ທີ່ພິສູດຈາກຄຳໃຫ້ການຂອງຜູ້ຖືກເສຍຫາຍ, 3) ການລັກຊັບ (ເຜັດ) ທີ່ພິສູດຈາກການຄອບຄອງຊັບທີ່ເປັນເປົ້າໝາຍຂອງການກະທຳຜິດ ແລະ 4) ການ ຄາດຕະກຳ ທີ່ພິສູດຄວາມເຈດຕະນາຈາກຂໍ້ເທັດຈິງທາງອ້ອມ. ກໍລະນີສຶກສາທີ່ກ່າວມານີ້ ມີຈຸດປະສົງ ເພື່ອນຳ ໃຊ້ສິດສອນ ແລະ ຝຶກອົບຮົມ ໃນສະຖາບັນການສຶກສາຂອງແຕ່ລະພາກສ່ວນ.

ຄະນະຄົ້ນຄວ້າຮ່ວມກັບຊ່ຽວຊານຍີ່ປຸ່ນ ໄດ້ກຳນົດແຕ່ລະກໍລະນີສຶກສາ ດ້ວຍວິທີການຕັ້ງຄຳຖາມ ເພື່ອ ກຳນົດຂໍ້ເທັດຈິງ ໂດຍອີງໃສ່ຫຼັກຖານທາງກົງ ແລະ ທາງອອ້ມທີ່ມີຢູ່ໃນ ທັງ 4 ກໍລະນີສຶກສາຂ້າງເທິງ.

ວິທີການຄົ້ນຄວ້າ ທາງກຸ່ມໄດ້ອ້າງອີງກົດໝາຍທີ່ກ່ຽວຂ້ອງຂອງ ສປປ ລາວ ໂດຍສະເພາະປະມວນ ກົດໝາຍອາຍາ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ຫຼັງຈາກນັ້ນ ກໍໄດ້ນຳເອົາຜົນການຄົ້ນຄວ້າໄປ ປຶກສາຫາລືນຳ ນັກກົດໝາຍຜູ້ຊົງຄຸນວຸດທິຂອງ ສປປ ລາວ, ກວດແກ້ຈາກຄະນະຊີ້ນຳໂຄງການ ແລະ ຄະນະ ບໍລິຫານງານໂຄງການ.

ເຖິງແນວໃດກໍຕາມ, ປື້ມຄູ່ມືເຫຼັ້ມນີ້ປາສະຈາກບໍ່ໄດ້ຂໍ້ຂາດຕົກບົກພ່ອງ ຫວັງຢ່າງຍິ່ງວ່າ ທ່ານຜູ້ອ່ານ, ນັກຮຽນຮູ້ປັນຍາຊົນ, ນັກຄົ້ນຄວ້າ ແລະ ຜູ້ທີ່ສົນໃຈ ຊ່ວຍຕຳນິຕິຊົມ ແລະ ໃຫ້ຄຳແນະນຳແກ່ຄະນະຄົ້ນຄວ້າ ເພື່ອຈະນຳໄປປັບປຸງປື້ມຄູ່ມືເຫຼັ້ມນີ້ ໃຫ້ມີເນື້ອໃນຄົບຖ້ວນ ແລະ ສົມບູນຍິ່ງຂຶ້ນໃນຕໍ່ໜ້າ.

ຂ້າພະເຈົ້າຕາງໜ້າໃຫ້ຄະນະຊີ້ນຳໂຄງການ ຂໍສະແດງຄວາມຂອບໃຈເປັນຢ່າງສູງ ມາຍັງນັກວິຊາການ ກົດໝາຍລາວ ແລະ ຊ່ຽວຊານກົດໝາຍ ປະເທດຍີ່ປຸ່ນ ທີ່ໄດ້ທຸ້ມເທສະຕິປັນຍາ, ເຫື່ອແຮງ ແລະ ໄດ້ສະຫຼະ ເວລາເຂົ້າຮ່ວມໃນການຄົ້ນຄວ້າ ເຮັດໃຫ້ປື້ມຄູ່ມືເຫຼັ້ມນີ້ໄດ້ຮັບຜົນສຳເລັດດ້ວຍດີ. ປື້ມຄູ່ມືເຫຼັ້ມນີ້ໄດ້ຮັບການ ສະໜັບສະໜູນດ້ານງົບປະມານຈາກອົງການໄຈກາ (JICA) ປະເທດຍີ່ປຸ່ນ ໂດຍຜ່ານໂຄງການສົ່ງເສີມການ ພັດທະນາ ແລະ ສ້າງຄວາມເຂັ້ມແຂງ ລັດທີ່ປົກຄອງດ້ວຍກົດໝາຍ ໃນຂົງເຂດຍຸຕິທຳ.

**ຄະນະຊີ້ນຳໂຄງການ**

ສຈ.ປອ ຮຸ່ງເພັດ ຈັນທະວົງ

# ສາລະບານ

**ກໍລະນີສຶກສາ 1: ການຄາດຕະກໍາ (ດ້ວຍການຈູດ) ທີ່ພິສູດຈາກຄໍາໃຫ້ການຂອງຜູ້ເຫັນເຫດການ ............ 1**
ກໍລະນີສຶກສາ ............ 2
**I.** ຫຼັກຖານທີ່ສໍາຄັນທີ່ສຸດ ............ 5
**II.** ຂໍ້ຄວນເອົາໃຈໃສ່ໃນການພິຈາລະນາຄວາມໜ້າເຊື່ອຖືຂອງຄໍາໃຫ້ການ ............ 6
**III.** ການພິຈາລະນາຄວາມໜ້າເຊື່ອຖືໄດ້ໃນຄໍາໃຫ້ການ ............ 9
**IV.** ການພິຈາລະນາວ່າມີຄວາມຜິດ ຫຼື ບໍ່ມີຄວາມຜິດ ............ 14
**V.** ປະເດັນທີ່ຄວນສືບສວນ-ສອບສວນເພີ່ມເຕີມ ............ 17
**ກໍລະນີສຶກສາ 2: ການຂົ່ມຂືນທໍາຊໍາເລົາ ທີ່ພິສູດຈາກຄໍາໃຫ້ການຂອງຜູ້ຖືກເສຍຫາຍ ............ 21**
ກໍລະນີສຶກສາ ............ 22
**I.** ຫຼັກຖານທີ່ສໍາຄັນທີ່ສຸດ ............ 25
**II.** ຂໍ້ຄວນເອົາໃຈໃສ່ໃນການພິຈາລະນາຄວາມໜ້າເຊື່ອຖືຂອງຄໍາໃຫ້ການ ............ 25
**III.** ການພິຈາລະນາຄວາມໜ້າເຊື່ອຖືໄດ້ໃນຄໍາໃຫ້ການ ............ 29
**IV.** ປະເດັນທີ່ຄວນສືບສວນ-ສອບສວນເພີ່ມເຕີມ ............ 32
**ກໍລະນີສຶກສາ 3: ການລັກຊັບ (ເຜັດ) ທີ່ພິສູດຈາກການຄອບຄອງຊັບທີ່ເປັນເປົ້າໝາຍຂອງການກະທໍາຜິດ . 35**
ກໍລະນີສຶກສາ ............ 36
**I.** ຫຼັກຖານທີ່ສໍາຄັນທີ່ສຸດ ............ 38
**II.** ການພິຈາລະນາວ່າມີຄວາມຜິດ ຫຼື ບໍ່ມີຄວາມຜິດ ............ 40
**III.** ຂໍ້ຄວນເອົາໃຈໃສ່ໃນການກໍານົດວ່າຜູ້ຖືກຫາແມ່ນຜູ້ກະທໍາຜິດ ............ 43
**IV.** ປະເດັນທີ່ຄວນສືບສວນ-ສອບສວນເພີ່ມເຕີມ ............ 46
**ກໍລະນີສຶກສາ 4: ການຄາດຕະກໍາ ທີ່ພິສູດຄວາມເຈດຕະນາຈາກຂໍ້ເທັດຈິງທາງອ້ອມ ............ 48**
ກໍລະນີສຶກສາ ............ 49
**I.** ຫຼັກຖານທີ່ສໍາຄັນທີ່ສຸດ ............ 52
**II.** ຂໍ້ຄວນເອົາໃຈໃສ່ໃນການກໍານົດວ່າມີເຈດຕະນາໃນການຄາດຕະກໍາ ຫຼື ບໍ່ ............ 53
**III.** ການພິຈາລະນາວ່າມີເຈດຕະນາ ຫຼື ບໍ່ມີເຈດຕະນາ ໃນການຄາດຕະກໍາ ............ 55
**IV.** ກໍລະນີທີ່ບໍ່ສາມາດກໍານົດໄດ້ວ່າ ມີເຈດຕະນາ ໃນການຄາດຕະກໍາ ............ 58
**V.** ປະເດັນທີ່ຄວນສືບສວນ-ສອບສວນເພີ່ມເຕີມ ............ 60
**ເອກະສານຊ້ອນທ້າຍ** ............ 61

**ກໍລະນີສຶກສາ I**

# ການຄາດຕະກຳ (ດ້ວຍການຈູດ)
# ທີ່ພິສູດຈາກຄຳໃຫ້ການຂອງຜູ້ເຫັນເຫດການ

# ຄະດີຄາດຕະກຳ (ດ້ວຍການຈູດ) ພິສູດຄຳໃຫ້ການຂອງຜູ້ເຫັນເຫດການ

**ກ** ຖືກຈັບຕົວໃນວັນທີ 5 ພຶດສະພາ 2019 ໃນຂໍ້ກ່າວຫາ ຈູດຫ້ອງພັກຂອງ **ຂ** ຈົນເຮັດໃຫ້ **ຂ** ຖືກໄຟໄໝ້ເສຍຊີວິດ ໃນເວລາປະມານ 2 ໂມງເຊົ້າ ຂອງວັນທີ 5 ກຸມພາ 2019 ທີ່ ນະຄອນຫຼວງວຽງຈັນ, ຢູ່ພາຍໃນຫ້ອງ 102 ຊັ້ນ 1 ຂອງວຽງຈັນອະພາດເມັ້ນ (ທີ່ພັກອາໄສຂອງ **ຂ**), ຊຶ່ງ ກ ໄດ້ທຳລາຍປະຕູ ແລ້ວເຂົ້າໄປໃນຫ້ອງ ແລະ ໃຊ້ນ້ຳມັນຖອກໃສ່ສິ້ນ ແລະ ໜັງສືພິມທີ່ມີຢູ່ໃນຫ້ອງ ຈາກນັ້ນກໍໄດ້ຈູດໄຟເຜົາ.

ຕໍ່ມາ, **ກ** ໄດ້ປະຕິເສດມາຕະຫຼອດວ່າຕົນບໍ່ແມ່ນຜູ້ກະທຳຜິດ, ແຕ່ຈາກຜົນຂອງການສືບສວນສອບສວນຂອງເຈົ້າໜ້າທີ່ຕຳຫຼວດ ແລະ ຜ່ານການຄົ້ນຄວ້າຂອງພະນັກງານນັກໄອຍະການ ຊຶ່ງມີຫຼັກຖານຢັ້ງຢືນວ່າ **ກ** ໄດ້ມີການກະທຳຜິດ. ດັ່ງນັ້ນ, ຫົວໜ້າອົງການໄອຍະການຈຶ່ງໄດ້ສັ່ງຟ້ອງ **ກ** ໃນຂໍ້ກ່າວຫາຄາດຕະກຳ ຕາມມາດຕາ 188 ຂອງປະມວນກົດໝາຍອາຍາ, ພ້ອມທັງສົ່ງສຳນວນຄະດີໃຫ້ສານພິຈາລະນາ.

<u>**ຫຼັກຖານທີ່ເຈົ້າໜ້າທີ່ຕຳຫຼວດ ແລະ ພະນັກງານໄອຍະການຮອບຮອມມາໄດ້ ປະກອບມີ:**</u>

① ການພົບເຫັນກັບໄຟ 1 ກັບ ແລະ ນ້ຳມັນຢູ່ເຮືອນຂອງ **ກ**;

② **ກ** ແລະ **ຂ** ຮູ້ຈັກກັນ, ໃນຊ່ວງຫຼັງ ທັງສອງມີບັນຫາເລື່ອງເງິນນຳກັນ;

③ ຄຳໃຫ້ການຂອງ **ຄ** ທີ່ບາງເທື່ອລາວກໍມານອນພັກຢູ່ຫ້ອງ 104 ຊຶ່ງເປັນເຮືອນຂອງໝູ່ລາວ (ເຮືອນຂອງ **ງ**) ທີ່ຕັ້ງຢູ່ທາງເບື້ອງຂວາມືຂອງເຮືອນ **ຂ**, ຊຶ່ງ **ຄ** ໄດ້ໃຫ້ການ ດັ່ງລຸ່ມນີ້:

<u>**ເນື້ອໃນຄຳໃຫ້ການຂອງ ຄ:**</u>

ຂ້ອຍໄດ້ໄປນອນຢູ່ຫ້ອງຂອງ **ງ** ທີ່ເປັນໝູ່ຂອງຂ້ອຍໃນຄືນວັນທີ 4 ກຸມພາ 2019, ຫຼັງຈາກທີ່ ຂ້ອຍ ແລະ **ງ** ໄດ້ຫຼັບແລ້ວ, ປະມານ 2:00 ໂມງເຊົ້າ ຂ້ອຍຮູ້ສຶກຢາກເຂົ້າຫ້ອງນ້ຳ ກໍເລີຍຮູ້ເມື່ອຂຶ້ນ. ແຕ່ຕອນນັ້ນ **ງ** ຍັງນອນຫຼັບຢູ່.

ໃນຂະນະທີ່ຂ້ອຍກັບມາຈາກຫ້ອງນ້ຳ, ຂ້ອຍໄດ້ຫຼຽວໄປເບິ່ງທາງຍ່າງ (ທາງນອກ) ໂດຍຜ່ານປະຕູປ່ອງຢ້ຽມແກ້ວທີ່ຕັ້ງຢູ່ຂ້າງປະຕູທາງເຂົ້າເຮືອນ ແລະ ໄດ້ເຫັນຜູ້ຊາຍແປກໜ້າກຳລັງຍ່າງຢູ່ທາງຍ່າງ ໂດຍຍ່າງກົງໄປຫາປະຕູທາງເຂົ້າອະພາດເມັ້ນ (ທາງທິດໃຕ້).

ຜູ້ຊາຍທີ່ເຫັນຜ່ານປະຕູປ່ອງຢ້ຽມ ໄດ້ຍ່າງພ້ອມທັງຍົກສອງມືຂຶ້ນສູງຮອດລະດັບຂອງຕາ. ຂ້ອຍຮູ້ສຶກແປກໃຈກັບຜູ້ຊາຍຄົນນັ້ນໜ້ອຍໜຶ່ງ ກັບການທີ່ລາວຍ່າງພ້ອມຍົກສອງມືຂຶ້ນ ໃນຕອນກາງເດິກ, ເມື່ອເບິ່ງການເຄື່ອນໄຫວຂອງຊາຍຄົນນັ້ນຜ່ານປະຕູປ່ອງຢ້ຽມແກ້ວແລ້ວ ເຫັນວ່າ ຊາຍຄົນດັ່ງກ່າວກໍຍ່າງກົງໄປຫາປະຕູດ້ວຍຄວາມໄວປົກກະຕິ ແລະ ລາວໄດ້ໃຊ້ແຂນສອກເບື້ອງຂວາໂດຍບໍ່ແມ່ນມື ເປີດປະຕູ. ຂ້ອຍຮູ້ສຶກແປກໃຈຕື່ມອີກວ່າ ເປັນຫຍັງລາວບໍ່ເອົາມືເປີດປະຕູ ເປັນຫຍັງຄືໃຊ້ແຂນສອກເບື້ອງຂວາເປີດ.

ຫຼັງຈາກທີ່ຊາຍຄົນນັ້ນອອກຈາກປະຕູໄປແລ້ວ, ຂ້ອຍກໍບໍ່ເຫັນລາວ, ຄິດວ່າລາວໜ້າຈະຂີ່ລົດໃຫຍ່ອອກໄປບ່ອນໃດບ່ອນໜຶ່ງ ເພາະວ່າຂ້ອຍເຫັນໄຟລົດ ແລະ ໄດ້ຍິນສຽງເປີດປະຕູ ແລະ ສຽງສະຕາດລົດ. ເນື່ອງຈາກ ຄິດ

ວ່າຊາຍຄົນນັ້ນໄປແລ້ວ ຂ້ອຍຈຶ່ງກັບເຂົ້າໄປນອນຢູ່ຫ້ອງທີ່ **ງ** ນອນຢູ່ ແຕ່ໃນຂະນະທີ່ກໍາລັງຈະນອນ, ຂ້ອຍໄດ້ກິ່ນຄວັນ ແລະ ໄດ້ຍິນສຽງ "ປະຈິ ປະຈິ" ຄືສຽງໄຟໄໝ້. ດັ່ງນັ້ນ, ຂ້ອຍຄິດວ່າເກີດໄຟໄໝ້ຂຶ້ນລະ ກໍເລີຍຟ້າວປຸກ **ງ** ຂຶ້ນມາ ແລະ ຟ້າວອອກຈາກອະພາດເມັ້ນໄປ.

ໃນຂະນະທີ່ ຂ້ອຍ ແລະ **ງ** ກໍາລັງອອກຈາກອະພາດເມັ້ນ ກໍສັງເກດເຫັນວ່າ ຫ້ອງທີ່ເກີດໄຟໄໝ້ນັ້ນ ແມ່ນຫ້ອງທີ່ຢູ່ທາງພາກເໜືອຂອງເຮືອນ **ງ** ຊຶ່ງແມ່ນຫ້ອງ 102.

ເນື່ອງຈາກວ່າ ປະຕູປ່ອງຢ້ຽມທີ່ຂ້ອຍເບິ່ງຜ່ານ ແລະ ເຫັນຊາຍຄົນດັ່ງກ່າວ ເປີດປະຕູບານນ້ອຍທີ່ຢູ່ຂ້າງປະຕູທາງເຂົ້າອາພາດເມັ້ນ ແລະ ຂະນະທີ່ຂ້ອຍເບິ່ງຊາຍຄົນນັ້ນ ຂ້ອຍກໍໄດ້ເອົາໂຕຕິດຝາໄວ້ໂດຍທັນທີ ເພື່ອບໍ່ໃຫ້ລາວເຫັນຂ້ອຍ, ຊຶ່ງຊາຍຄົນນັ້ນກໍບໍ່ໄດ້ມີທ່າທີວ່າເຫັນຂ້ອຍເບິ່ງຢູ່.

ໄລຍະເວລາທີ່ຂ້ອຍເບິ່ງຜູ້ຊາຍຄົນນັ້ນ ລະຫວ່າງທີ່ລາວຍ່າງຕາມທາງຍ່າງຈົນໄປຮອດປະຕູອະພາດເມັ້ນ ແລະ ໄຂປະຕູອອກຈາກພື້ນທີ່ຂອງອະພາດເມັ້ນ ກໍປະມານ 20 ວິນາທີ.

ໃນຕອນທີ່ຂ້ອຍເຫັນຊາຍຄົນນັ້ນ, ລາວມີສ່ວນສູງ ທີ່ສູງກວ່າຂ້ອຍໜ້ອຍໜຶ່ງ ປະມານ 170 ຊມ ຫາ 175 ຊມ, ຫຸ່ນທໍາມະດາ ຊິວ່າຕຸ້ຍກະບໍ່ຕຸ້ຍຊິວ່າຈ່ອຍກະບໍ່ຈ່ອຍ.

ຊາຍຄົນທີ່ຂ້ອຍເຫັນ ມີລັກສະນະຮູບໜ້າສີ່ຫຼ່ຽມ, ໃບໜ້າໃຫຍ່, ອາຍຸປະມານ 45 ປີ ຫາ 50 ປີ.

ຊາຍຄົນທີ່ຂ້ອຍເຫັນ ໃສ່ເສື້ອເຊີດແຂນຍາວສີດໍາ ແລະ ໂສ້ງຂາຍາວສີນໍ້າຕານ, ບໍ່ເຫັນເກີບລາວ, ບໍ່ເຫັນລາວໃສ່ໝວກ ມີຜົມສັ້ນ.

ຊາຍຄົນທີ່ຂ້ອຍເຫັນນັ້ນ ບໍ່ແມ່ນຄົນທີ່ຂ້ອຍຮູ້ຈັກ.

ໃນມື້ນີ້ (ວັນທີ 10 ພຶດສະພາ 2019) ທີ່ຫ້ອງການຕໍາຫຼວດນະຄອນຫຼວງວຽງຈັນ, ຂ້ອຍຖືກເຈົ້າໜ້າທີ່ສອບຖາມເອົາຄໍາໃຫ້ການກ່ຽວກັບຄະດີໄຟໄໝ້ວຽງຈັນອະພາດເມັ້ນ ວັນທີ 5 ກຸມພາ 2019 ແລະ ຂ້ອຍໄດ້ອະທິບາຍເຖິງລັກສະນະພິເສດຂອງຊາຍຄົນທີ່ຂ້ອຍເຫັນ ຕາມຂໍ້ມູນຂ້າງເທິງ.

ຫຼັງຈາກທີ່ໄດ້ອະທິບາຍຕາມຂໍ້ມູນຂ້າງເທິງແລ້ວ, ຂ້ອຍໄດ້ໄປອີກຫ້ອງໜຶ່ງພ້ອມກັບເຈົ້າໜ້າທີ່ຕໍາຫຼວດ, ຂ້ອຍເບິ່ງອອກຈາກຫ້ອງທີ່ຂ້ອຍຢູ່ ຜ່ານປະຕູປ່ອງຢ້ຽມທີ່ເປັນແກ້ວ ແລະ ໄດ້ເຫັນຜູ້ຊາຍ 3 ຄົນກໍາລັງນັ່ງຕໍ່ໜ້າເຈົ້າໜ້າທີ່.

ເນື່ອງຈາກເຈົ້າໜ້າທີ່ໄດ້ຖາມຂ້ອຍວ່າ ໃນຊາຍ 3 ຄົນທີ່ນັ່ງຢູ່ຕໍ່ໜ້າເຈົ້າໜ້າທີ່ນັ້ນ ມີບໍຜູ້ທີ່ເປັນຄົນດຽວກັນກັບຄົນທີ່ເຈົ້າເຫັນຈາກຫ້ອງ 104 ຂອງວຽງຈັນອະພາດເມັ້ນ ແລະ ເຫັນລາວຍ່າງຕາມທາງຍ່າງ ອອກຈາກປະຕູອະພາດເມັ້ນ ໃນເວລາ 2:00 ໂມງເຊົ້າ ຂອງ ວັນທີ 5 ກຸມພາ 2019. ຂ້ອຍຈຶ່ງຕອບວ່າ (ຄິດວ່າແມ່ນ **ກ**) ເພາະວ່າ ລາວມີໃບໜ້າ ແລະ ລັກສະນະຄ້າຍຄືກັນກັບຊາຍຄົນທີ່ຂ້ອຍເຫັນໃນເວລາ 2 ໂມງເຊົ້າ ຂອງວັນທີ 5 ກຸມພາ 2019.

# ຄຳຖາມ

1. ຖ້າຫາກຄົ້ນຄວ້າຕາມເນື້ອໃນຂໍ້ເທັດຈິງ ແລະ ຫຼັກຖານ ສະເພາະທີ່ມີຢູ່ໃນເນື້ອຄະດີຕົວຢ່າງ ນີ້ແລ້ວ, ໃນການພິຈາລະນາວ່າ **ກ** ແມ່ນເປັນຜູ້ກະທຳຜິດໃນຂໍ້ກ່າວຫາຄາດຕະກຳ ຫຼື ບໍ່ ນັ້ນ ຄິດວ່າ ຫຼັກຖານອັນໃດມີຄວາມສຳຄັນທີ່ສຸດ ?
2. ໃນການພິຈາລະນາຄວາມໜ້າເຊື່ອຖືຂອງຄຳໃຫ້ການ ຂອງຜູ້ເຫັນເຫດການ (ຕົວຢ່າງ ຄຳໃຫ້ການ ຂອງ **ຄ**) ນັ້ນ, ບັນຫາທີ່ຄວນເອົາໃຈໃສ່ແມ່ນຫຍັງ ?
3. ເມື່ອຄຳນຶ່ງເຖິງບັນຫາທີ່ຄວນເອົາໃຈໃສ່ ຕາມຂໍ້ 2 ຂ້າງເທິງນີ້ແລ້ວ, ຄິດວ່າ ຄຳໃຫ້ການຂອງ **ຄ** ໃນຄະດີນີ້ ສາມາດເຊື່ອຖືໄດ້ ຫຼື ບໍ່ ? ຈົ່ງອະທິບາຍທັງກໍລະນີທີ່ເຫັນວ່າເຊື່ອຖືໄດ້ ແລະ ບໍ່ເຊື່ອຖືໄດ້.
4. ຖ້າຫາກການຄົ້ນຄວ້າຕາມເນື້ອໃນຂໍ້ເທັດຈິງ ແລະ ຫຼັກຖານສະເພາະທີ່ມີຢູ່ໃນເນື້ອຄະດີ ຕົວຢ່າງ ນີ້ແລ້ວ ສາມາດພິຈາລະນາຕັດສິນວ່າ **ກ** ມີຄວາມຜິດໃນຂໍ້ກ່າວຫາຄາດຕະກຳໄດ້ ຫຼື ບໍ່ ? ຈົ່ງອະທິບາຍທັງກໍລະນີພິຈາລະນາຕັດສິນວ່າ **ກ** ມີຄວາມຜິດ ແລະ ກໍລະນີພິຈາລະນາຕັດສິນວ່າ **ກ** ບໍ່ມີຄວາມຜິດ.
5. ສຳລັບຄະດີນີ້ ມີປະເດັນທີ່ເຫັນວ່າ ຄວນສືບສວນ-ສອບສວນເພີ່ມເຕີມ ຫຼື ບໍ່ ຖ້າມີຈົ່ງອະທິບາຍປະເດັນດັ່ງກ່າວ ພ້ອມທັງໃຫ້ເຫດຜົນ.

**I. ຖ້າຫາກຄົ້ນຄວ້າຕາມເນື້ອໃນຂໍ້ເທັດຈິງ ແລະ ຫຼັກຖານ ສະເພາະທີ່ມີຢູ່ໃນເນື້ອຄະດີຕົວຢ່າງນີ້ແລ້ວ, ໃນການພິຈາລະນາວ່າ ກ ແມ່ນເປັນຜູ້ກະທຳຜິດໃນຂໍ້ກ່າວຫາຄາດຕະກຳ ຫລື ບໍ່ ນັ້ນ ຄິດວ່າ ຫຼັກຖານອັນໃດມີຄວາມສຳຄັນທີ່ສຸດ? ຈົ່ງອະທິບາຍພ້ອມທັງໃຫ້ເຫດຜົນດັ່ງກ່າວ ໂດຍ ວິເຄາະຕາມໂຄງປະກອບສ້າງຂອງຫຼັກຖານຕາມເນື້ອຄະດີຕົວຢ່າງນີ້.**

ເມື່ອຄົ້ນຄວ້າຕາມເນື້ອໃນຂໍ້ເທັດຈິງ ແລະ ຫຼັກຖານ ສະເພາະທີ່ມີຢູ່ໃນເນື້ອຄະດີຕົວຢ່າງນີ້ແລ້ວ ເຫັນວ່າ ຫຼັກຖານທີ່ມີໃນປັດຈຸບັນແມ່ນມີ:

1. **ການພົບເຫັນ ກັບໄຟ ແລະ ນ້ຳມັນ ທີ່ຢູ່ເຮືອນຂອງ ກ**

   ກັບໄຟ ແລະ ນ້ຳມັນ ທີ່ພົບເຫັນຢູ່ເຮືອນຂອງ **ກ** ນັ້ນ ອາດມີສ່ວນໃນການຄາດຄະເນໄດ້ວ່າ **ກ** ກ່ຽວຂ້ອງກັບການຈູດໄດ້, ແຕ່ເຖິງແນວໃດກໍຕາມ ເຮືອນທົ່ວໄປກໍອາດມີກັບໄຟ ແລະ ນ້ຳມັນ ເພື່ອນຳໃຊ້ທົ່ວໄປກໍໄດ້.

2. **ກ ກັບ ຂ ຮູ້ຈັກກັນ ແລະ ມີບັນຫາເລື່ອງເງິນ**

   ຂໍ້ເທັດຈິງນີ້ ອາດເປັນແຮງຈູງໃຈເຮັດໃຫ້ **ກ** ຄາດຕະກຳ **ຂ** ໄດ້, ແຕ່ການທີ່ມີບັນຫາເລື່ອງເງິນ ກໍເປັນເລື່ອງປົກກະຕິ ສຳລັບຄົນທີ່ມີສາຍພົວພັນທາງການເງິນກັນ.

3. **ຄຳໃຫ້ການຂອງ ຄ**

   ໃນເນື້ອໃນຄຳໃຫ້ການຂອງ **ຄ** ມີຫລາຍຈຸດທີ່ໄດ້ກ່າວເຖິງເຫດການໃນມື້ເກີດເຫດເຊັ່ນ: ໄດ້ເຫັນເຫດການ, ເຫັນຊາຍແປກໜ້າທີ່ມີພຶດຕິກຳໜ້າສົງໄສ ແລະ ມີໃບໜ້າ ພ້ອມທັງມີຄຸນລັກສະນະຄ້າຍຄືກັບ **ກ** ຕໍ່ເນື້ອໃນຄຳໃຫ້ການທີ່ກ່າວມາ ສາມາດຄາດຄະເນໄດ້ວ່າ ຜູ້ທີ່ **ຄ** ເຫັນນັ້ນແມ່ນ **ກ**.

ສະນັ້ນ, ເພື່ອເປັນການພິຈາລະນາວ່າຄຳໃຫ້ການຂອງ **ຄ** ເປັນຫຼັກຖານທາງກົງ ຫລື ທາງອ້ອມນັ້ນ ຈຶ່ງມີຄວາມຈຳເປັນໃນການທຳຄວາມເຂົ້າໃຈ ທິດສະດີກ່ຽວກັບ ຫຼັກຖານທາງກົງ ແລະ ຫຼັກຖານທາງອ້ອມ ດັ່ງນີ້:

- **ຫຼັກຖານທາງກົງ** ແມ່ນຫຼັກຖານໂດຍກົງ ທີ່ນຳມາພິສູດຂໍ້ເທັດຈິງໃດໜຶ່ງຂອງຄະດີທີ່ເຮົາຕ້ອງການພິສູດໄດ້ໂດຍກົງ, ຖ້າຫາກມີຫຼັກຖານທາງກົງມາພິສູດແລ້ວ ຂໍ້ເທັດຈິງດັ່ງກ່າວກໍ່ບໍ່ຈຳເປັນຈະຕ້ອງມີຂະບວນການສັນນິຖານຕື່ມອີກ ເຊັ່ນ: ໃນກໍລະນີທີ່ຕ້ອງການ ພິສູດວ່າ ຜູ້ກະທຳຜິດແມ່ນໃຜນັ້ນ ຖ້າຫາກມີຜູ້ເຫັນເຫດການການກະທຳຜິດໂດຍກົງ ຄຳໃຫ້ການຂອງບຸກ ຄົນດັ່ງກ່າວສາມາດ ເປັນຫຼັກຖານທາງກົງໄດ້.

__**ຕົວຢ່າງ:**__ ກໍລະນີການກະທຳຜິດໃນຂໍ້ກ່າວຫາຄາດຕະກຳ ຊຶ່ງເຮົາຢາກພິສູດຂໍ້ເທັດຈິງທີ່ວ່າ **B** ເປັນຜູ້ຄາດຕະກຳ **C** ແທ້ ຫຼື ບໍ່? ໃນເວລາ 13:00 ໂມງຂອງວັນທີ 30 ຕຸລາ ຢູ່ທີ່ຄິວລົດເມສາຍໃຕ້ **A** ເຫັນ **B** ໃຊ້ປືນສັ້ນ 59 ມມ ຍິງໃສ່ຫົວ **C** ຈຳນວນ 3 ລູກ ເປັນເຫດໃຫ້ **C** ຜູ້ຖືກເຄາະຮ້າຍເສຍຊີວິດຄາທີ່. ຄຳ

ໃຫ້ການຂອງ **A** ແມ່ນ ຫຼັກຖານທາງກົງ ເພາະຜູ້ກ່ຽວເປັນຜູ້ເຫັນເຫດການທີ່ເກີດຂຶ້ນ ແລະ ສາມາດນຳມາພິສູດຂໍ້ເທັດຈິງຂ້າງເທິງໄດ້ໂດຍກົງ ແລະ ຖ້າຫາກສາມາດພິສູດໄດ້ວ່າ ຄຳໃຫ້ການ **A** ສາມາດເຊື່ອຖືໄດ້ ກໍສະຫຼຸບໄດ້ວ່າ **B** ເປັນຜູ້ກະທຳຜິດ.

- **ຫຼັກຖານທາງອ້ອມ** ແມ່ນຫຼັກຖານທີ່ບໍ່ສາມາດພິສູດຂໍ້ເທັດຈິງທີ່ເປັນເປົ້າໝາຍຂອງການພິສູດໄດ້ໂດຍກົງ, ພິສູດໄດ້ພຽງແຕ່ຂໍ້ເທັດຈິງທາງອ້ອມ. ສະນັ້ນ, ການໃຊ້ຫຼັກຖານທາງອ້ອມ ຈຶ່ງມີຄວາມຈຳເປັນໃນການສັນນິຖານ.

**ຕົວຢ່າງ:** ກໍລະນີການກະທຳຜິດໃນຂໍ້ຫາຄາດຕະກຳ ຊຶ່ງເຮົາຢາກພິສູດຂໍ້ເທັດຈິງທີ່ວ່າ **B** ເປັນຜູ້ຄາດຕະກຳ **C** ແທ້ ຫຼື ບໍ່? ໃນເວລາ 16:30 ໂມງ ຂອງວັນທີ 25 ພະຈິກ 2010 ຢູ່ດ້ານຫຼັງຂອງຫ້ອງປ່ຽນເຄື່ອງນຸ່ງຂອງສະໜາມກິລາເຕະບານແຫ່ງຊາດ, **A** ເຫັນ **B** ກຳປືນສັ້ນ 59 ມມ ຍ່າງວົນວຽນ ໄປມາຢູ່ໃກ້ຊາກສົບຂອງ **C** ຊຶ່ງເສຍຊີວິດໂດຍລູກປືນເຂົ້າກະໂຫຼກຫົວດ້ານຫຼັງເບື້ອງ ຊ້າຍແລ້ວຊອດອອກທາງໜ້າຜາກເບື້ອງຂວາ. ຈາກເຫດການດັ່ງກ່າວ ຈຶ່ງເວົ້າໄດ້ວ່າ **A** ບໍ່ໄດ້ເຫັນ **B** ຍິງ **C** ໂດຍກົງ ພຽງແຕ່ເຫັນເຫດການທາງອ້ອມ. ສະນັ້ນ, ຕໍ່ປະເດັນທີ່ວ່າ **B** ເປັນຜູ້ກະທຳຜິດທີ່ໃຊ້ປືນຍິງ **C** ຫຼື ບໍ່ ນັ້ນ ຄຳໃຫ້ການຂອງ **A** ເປັນພຽງຫຼັກຖານທາງອ້ອມ ສາມາດພິສູດໄດ້ພຽງແຕ່ຂໍ້ເທັດຈິງທາງອ້ອມບໍ່ສາມາດພິສູດໄດ້ໂດຍກົງວ່າ **B** ເປັນຜູ້ກະທຳຜິດ ຫລື ບໍ່. ແນວໃດກໍຕາມ ໄດ້ເຫັນ **B** ຖືປືນຢູ່ບໍລິເວນທີ່ **C** ເສຍຊີວິດ ຍ້ອນຖືກຍິງ ຂໍ້ເທັດຈິງທາງອ້ອມທີ່ສາມາດເຊື່ອມໂຍງໄປຫາການສັນນິຖານວ່າ **B** ເປັນຜູ້ກະທຳຜິດໄດ້. ເຖິງວ່າເຮົາຈະສາມາດພິສູດຄວາມໜ້າເຊື່ອຖືຂອງຄຳໃຫ້ການຂອງ **A** ໄດ້ ແຕ່ກໍຍັງບໍ່ທັນສາມາດສະຫຼຸບໄດ້ວ່າ **B** ເປັນຜູ້ກະທຳຜິດ.

**ຜ່ານການວິເຄາະບັນດາຫຼັກຖານທຽບກັບທິດສະດີທີ່ກ່າວມາຂ້າງເທິງແລ້ວເຫັນວ່າ:** ໃນບັນດາຫຼັກຖານທີ່ເຮົາມີຢູ່ໃນຄະດີນີ້ ແມ່ນບໍ່ມີຫຼັກຖານທາງກົງ ທີ່ສາມາດນຳມາພິສູດວ່າ **ກ** ເປັນຜູ້ກະທຳຜິດໃນຂໍ້ກ່າວຫາຄາດຕະກຳໄດ້ໂດຍກົງ, ມີພຽງແຕ່ຫຼັກຖານທາງອ້ອມທີ່ຈະນຳມາພິສູດ ໂດຍສະເພາະແມ່ນ ຄຳໃຫ້ການຂອງ **ຄ**. ເຖິງວ່າ ຄຳໃຫ້ການຂອງ **ຄ** ເປັນພຽງຫຼັກຖານທາງອ້ອມ ແຕ່ກໍເປັນຄຳໃຫ້ການບອກເລົ່າເຫດການທີ່ໄດ້ເຫັນເຫດການ, ເຫັນຊາຍແປກໜ້າທີ່ມີພຶດຕິກຳໜ້າສົງໄສ ແລະ ມີໃບໜ້າ ພ້ອມທັງຄຸນລັກສະນະຄ້າຍຄືກັບ **ກ**, ເພາະສະນັ້ນ, ຄຳໃຫ້ການຂອງ **ຄ** ແມ່ນຄຳໃຫ້ການທີ່ສຳຄັນ ທີ່ສາມາດພາໃຫ້ສັນນິຖານໄດ້ວ່າ **ກ** ເປັນຜູ້ຄາດຕະກຳ **ຂ** ຫຼື ບໍ່. ສະນັ້ນ, ຫຼັກຖານ ແລະ ເນື້ອໃນຄຳໃຫ້ການຂອງ **ຄ** ຈຶ່ງເປັນຫຼັກຖານທີ່ສຳຄັນ ທີ່ຈະໃຊ້ເຂົ້າໃນການພິຈາລະນາວ່າ **ກ** ເປັນຜູ້ກະທຳຜິດ ຫຼື ບໍ່.

## II. ໃນການພິຈາລະນາຄວາມໜ້າເຊື່ອຖືຂອງຄຳໃຫ້ການ ຂອງຜູ້ເຫັນເຫດການ (ຕົວຢ່າງ ຄຳໃຫ້ການຂອງ ຄ) ນັ້ນ, ບັນຫາທີ່ຄວນເອົາໃຈໃສ່ແມ່ນຫຍັງ ?

ການໃຊ້ຄຳໃຫ້ການ ມາເປັນຫຼັກຖານ ໃນການພິຈາລະນາຄະດີ ກ່ອນອື່ນຈະຕ້ອງໄດ້ພິສູດຄວາມໜ້າເຊື່ອຖືຂອງຄຳໃຫ້ການກ່ອນ ຍ້ອນວ່າ: ຄຳໃຫ້ການໃດທີ່ເຊື່ອຖືບໍ່ໄດ້ ຄຳໃຫ້ການນັ້ນຈະບໍ່ເປັນພື້ນຖານ

ໃນການກຳນົດຂໍ້ເທັດຈິງ. ນອກຈາກນີ້, ຫຼັກຖານທີ່ເປັນຄຳໃຫ້ການຂອງບຸກຄົນ ແມ່ນມີຄຸນລັກສະນະຕ່າງກັບຫຼັກຖານທີ່ເປັນວັດຖຸ. ຄຳໃຫ້ການ (ຄຳເວົ້າ) ຂອງບຸກຄົນນັ້ນ ສາມາດປ່ຽນແປງໄດ້ຕະຫຼອດເວລາ ແລະ ສາມາດມີຂໍ້ຜິດພາດຈາກຄວາມເປັນຈິງໄດ້ ເປັນຕົ້ນ: ຂະບວນການຮັບຮູ້, ຄວາມສາມາດຈື່ຈຳ ແລະ ການບອກເລົ່າ. ສະນັ້ນ, ເພື່ອພິຈາລະນາວ່າ ຄຳໃຫ້ການສາມາດເຊື່ອຖືໄດ້ ຫຼື ບໍ່ ຈະຕ້ອງໄດ້ອີງໃສ່ຂໍ້ທີ່ຄວນເອົາໃຈໃສ່ຕ່າງໆ ດັ່ງລຸ່ມນີ້:

**1) ເງື່ອນໄຂຂອງການເຫັນເຫດການ**

1.1) **ເງື່ອນໄຂທາງອັດຕະວິໄສ :**

ໝາຍເຖິງປັດໄຈພາຍໃນຂອງຜູ້ເຫັນເຫດການ ເຊັ່ນ: ລະດັບຄວາມສາມາດໃນການຈື່ຈຳ, ລະດັບສາຍຕາ, ລະດັບສະຕິ ແລະ ສະພາບຮ່າງກາຍຂອງຜູ້ເຫັນເຫດການ. ໂດຍທຳມະຊາດແລ້ວຄົນເຮົາຖ້າເຫັນໃນສິ່ງທີ່ຜິດປົກກະຕິແມ່ນຈະມີຄວາມຕັ້ງໃຈໃນການເບິ່ງຫຼາຍກວ່າ, ຖ້າຕັ້ງໃຈເບິ່ງແລ້ວ ກໍ່ຈະສາມາດຈົດຈຳເຫດການໄດ້ດີກວ່າ ໂດຍບໍ່ໄດ້ຕັ້ງໃຈເບິ່ງ.

1.2) **ເງື່ອນໄຂທາງພາວະວິໄສ:**

ໝາຍເຖິງປັດໄຈພາຍນອກຕ່າງໆເຊັ່ນ: ໄລຍະຫ່າງຂອງການເບິ່ງເຫັນ, ໄລຍະເວລາຂອງການເຫັນເຫດການ, ລະດັບແສງສະຫວ່າງ, ສິ່ງກຳບັງ, ສະພາບແວດລ້ອມພາຍນອກອື່ນໆຢູ່ສະຖານທີ່ເກີດເຫດ ໃນເວລາທີ່ເກີດເຫດ.

ເພື່ອໃຫ້ສາມາດພິຈາລະນາ ໄດ້ຢ່າງຖືກຕ້ອງກ່ຽວກັບສະຕິ ແລະ ສະພາບການຈື່ຈຳຊຶ່ງຈຳເປັນຕ້ອງພິຈາລະນາ ຢ່າງຮອບຄອບທັງສອງເງື່ອນໄຂ ດ້ານອັດຕະວິໄສ ແລະ ດ້ານພາວະວິໄສ.

**2) ສາຍພົວພັນລະຫວ່າງຜູ້ໃຫ້ການ ກັບ ຜູ້ຖືກສົງໄສ**

ຜູ້ໃຫ້ການ ແລະ ຜູ້ຖືກສົງໄສ ມີສາຍພົວພັນທາງດ້ານຜົນປະໂຫຍດ ຊຶ່ງຈະເປັນແຮງຈູງໃຈເຮັດໃຫ້ບຸກຄົນໃດ ສາມາດໃຫ້ການເທັດໂດຍເຈດຕະນາໄດ້ ຫຼື ບໍ່. ສາຍພົວພັນລະຫວ່າງບຸກຄົນທີ່ກ່ຽວຂ້ອງໃນຄະດີແມ່ນມີຄວາມສຳຄັນ ແລະ ມີຜົນຕໍ່ຮູບຄະດີ ເຊັ່ນ: ກໍລະນີທັງສອງຝ່າຍຮູ້ຈັກກັນມາກ່ອນ, ແຕ່ທັງສອງ ແມ່ນມີຄວາມຂັດແຍ່ງກັນມາຕະຫລອດ. ສະນັ້ນ, ຜູ້ໃຫ້ການຈຶ່ງສ້າງແຮງຈູງໃຈ ເພື່ອເຮັດໃຫ້ຜູ້ຖືກ ສົງໄສມີຄວາມຜິດ. ອີກຢ່າງໜຶ່ງ ຖ້າກໍລະນີທັງສອງຝ່າຍບໍ່ຮູ້ຈັກກັນມາກ່ອນ ກໍເປັນໄປໄດ້ຍາກ ທີ່ຈະສ້າງ ເລື່ອງເອົາຜິດຜູ້ທີ່ຕົນບໍ່ຮູ້ຈັກ.

**3) ຄຸນລັກສະນະ ແລະ ຈຸດພິເສດສະເພາະຂອງຜູ້ໃຫ້ການ:**

ປະຫວັດຄວາມເປັນມາຂອງຜູ້ໃຫ້ການເປັນແນວໃດ? ເປັນຄົນມີບຸກຄະລິກ, ນິດໄສໃຈຄໍເປັນແນວໃດ? ຖ້າຜູ້ໃຫ້ການຫາກເປັນຄົນມັກຕົວະ, ມັກສ້າງເລື່ອງໃສ່ຄວາມຜູ້ອື່ນ ກໍອາດເປັນໄປໄດ້ທີ່ຜູ້ກ່ຽວຈະສ້າງເລື່ອງຕົວະຂຶ້ນມາໄດ້. ເຖິງຢ່າງໃດກໍຕາມ ການທີ່ມີນິດໄສຂີ້ຕົວະ ກໍອາດຈະບໍ່ໄດ້ຕັດສິນ

ວ່າຜູ້ກ່ຽວຈະຕົວະສະເໝີໄປ. ສະນັ້ນ, ຈຶ່ງຈຳເປັນຕ້ອງໄດ້ສັງເກດດ້ານອື່ນຕື່ມເຊັ່ນ: ພຶດຕິກຳ ແລະ ການສະແດງອອກຂອງຜູ້ໃຫ້ການ.

4) **ຄຳໃຫ້ການສອດຄ່ອງກັບຫຼັກຖານດ້ານພາວະວິໄສ ຫຼື ເນື້ອໃນຄຳໃຫ້ການຂອງບຸກຄົນອື່ນ ຫຼື ບໍ່:**

ເນື້ອໃນຂອງຄຳໃຫ້ການຈະຕ້ອງມີຄວາມສອດຄ່ອງກັບຫຼັກຖານທາງດ້ານພາວະວິໄສອື່ນ ຫຼື ສອດຄ່ອງກັບຄຳໃຫ້ການຂອງບຸກຄົນອື່ນນຳ, ແຕ່ສິ່ງທີ່ຄວນເອົາໃຈໃສ່ກໍຄື, ການທີ່ບໍ່ມີຫຼັກຖານພາວະວິໄສມາສະໜັບສະໜູນຄຳໃຫ້ການນັ້ນ, ກໍບໍ່ຖືວ່າຄຳໃຫ້ການມີຄວາມໜ້າເຊື່ອຖືໜ້ອຍລົງສະເໝີໄປ ເພາະບາງເຫດການ ກໍເປັນໄປໄດ້ທີ່ຈະບໍ່ມີຫຼັກຖານວັດຖຸອັນໃດຫຼົງເຫຼືອເລີຍ. ພ້ອມກັນນັ້ນ, ກໍລະນີທີ່ຄຳໃຫ້ການຂອງຜູ້ເຫັນເຫດການ ຫາກຂັດແຍ່ງກັບຄຳໃຫ້ການອື່ນ, ກໍຕ້ອງໄດ້ຊັ່ງຊາເບິ່ງວ່າຄຳໃຫ້ການຂອງບຸກຄົນໃດທີ່ມີຄວາມໜ້າເຊື່ອຖືທີ່ສຸດ.

5) **ເນື້ອໃນຄຳໃຫ້ການມີຄວາມເປັນທຳມະຊາດ, ສົມເຫດສົມຜົນ, ລົງເລິກລາຍລະອຽດ, ສອດຄ່ອງກັນ ຫຼື ບໍ່ ?**

ເນື້ອໃນຂອງຄຳໃຫ້ການຈຳເປັນຈະຕ້ອງໄດ້ພິຈາລະນາກ່ຽວກັບຄວາມເປັນທຳມະຊາດ, ສົມເຫດສົມຜົນ, ການລົງລາຍລະອຽດ ແລະ ສອດຄ່ອງກັນ ຫຼື ບໍ່.

**<u>ຕົວຢ່າງ:</u>** ພິຈາລະນາຄຳໃຫ້ການຂອງຜູ້ເຫັນເຫດການໃນຄະດີອຸບປະຕິເຫດ ໄດ້ໃຫ້ການວ່າໃນວັນທີ 7 ກໍລະກົດ 2022 ຕົນໄດ້ເຫັນລົດຕຳຄົນຍ່າງຢູ່ແຄມທາງຍ່າງ. ແຕ່ຄຳໃຫ້ການໃນວັນທີ 10 ກໍລະກົດ 2022 ພັດໄດ້ໃຫ້ການວ່າໃນຂະນະເວລາເກີດເຫດລົດຕຳນັ້ນຕົນກຳລັງກົ້ມລົງພິມເລກ ເມື່ອໄດ້ຍິນສຽງຄົນຮ້ອງກໍເລີຍງວກໜ້າມາ ແລ້ວເຫັນຜູ້ເຄາະຮ້າຍນອນມູບຢູ່ກັບພື້ນ. ສະນັ້ນ, ຈຶ່ງເຫັນວ່າຄຳໃຫ້ການຂອງຜູ້ເຫັນເຫດການຈຳນວນ 2 ຄັ້ງນັ້ນ ແມ່ນບໍ່ສອດຄ່ອງກັນ.

ໃນກໍລະນີຖ້າຫາກເນື້ອໃນຂອງຄຳໃຫ້ການນັ້ນແມ່ນຄວາມຈິງ, ສອດຄ່ອງກັນກັບການຈື່ຈຳແລ້ວ ເນື້ອໃນດັ່ງກ່າວນັ້ນຈະມີຄວາມເປັນທຳມະຊາດ ບໍ່ຂັດກັນກັບຫຼັກການທາງດ້ານວິທະຍາສາດ, ບໍ່ຂັດກັນກັບສະພາວະທີ່ເປັນປົກກະຕິ ແລະ ສົມເຫດສົມຜົນ.

**<u>ຕົວຢ່າງ:</u>** ພິຈາລະນາຄຳໃຫ້ການຂອງຜູ້ເຫັນເຫດການໃນຄະດີອຸບປະຕິເຫດ. **C** ຜູ້ເຫັນເຫດການໄດ້ໃຫ້ການວ່າ ຕົນໄດ້ເຫັນລົດຕຳ **B** ທີ່ກຳລັງຍ່າງຂ້າມທາງໄປ ແຕ່ໃນຄວາມເປັນຈິງແລ້ວຝາກທາງເບື້ອງນັ້ນ ບໍ່ມີທາງຍ່າງ ແລະ ເປັນກຳແພງ ເຊິ່ງເປັນໄປໄດ້ຍາກທີ່ຄົນຈະຂ້າມທາງໄປຈຸດນັ້ນ. ສະນັ້ນ ຄຳໃຫ້ການຂອງ **C** ຈຶ່ງບໍ່ສົມເຫດສົມຜົນ ແລະ ບໍ່ເປັນທຳມະຊາດ.

ນອກຈາກນີ້, ໃນກໍລະນີທີ່ຜູ້ໃຫ້ການຫາກໄດ້ໃຫ້ການກ່ຽວກັບຂໍ້ເທັດຈິງທີ່ຕົນໄດ້ພົບພໍ້ໂດຍອີງໃສ່ການຈື່ຈຳຂອງຕົນແລ້ວ ເນື້ອໃນຄຳໃຫ້ການດັ່ງກ່າວຈະສາມາດລົງເລິກລາຍລະອຽດໄດ້, ສິ່ງທີ່ໄດ້ເວົ້າກ່ອນ ຫຼື ຫຼັງ ແມ່ນມີຄວາມສອດຄ່ອງກັນດີ.

**ຕົວຢ່າງ:** ຄຳໃຫ້ການຂອງຜູ້ເຫັນເຫດການໃນຄະດີລັກຊັບ **A** ຜູ້ເຫັນເຫດການໄດ້ໃຫ້ການວ່າ ໃນເວລາ 18:30 ນາທີ ໄດ້ເຫັນຄົນປີນຂຶ້ນເຮືອນທາງດ້ານຫຼັງຂອງເຮືອນ ຊຶ່ງຊາຍຄົນດັ່ງກ່າວມີລັກສະນະສູງປະມານ 1,60 ແມັດ, ອາຍຸປະມານ 30 ປີ, ນຸ່ງເສື້ອ ແລະ ໂສ້ງສີຟ້າແກ່, ໃສ່ໝວກແກັບສີດຳ. ສະນັ້ນ, ຄຳໃຫ້ການຂອງ **A** ແມ່ນສາມາດລົງລາຍລະອຽດໄດ້.

**6) ລັກສະນະທ່າທາງຂອງຜູ້ໃຫ້ການໃນເວລາໃຫ້ການ:**

ໃນການເອົາຄຳໃຫ້ການປະເດັນສຳຄັນ ບໍ່ແມ່ນພຽງແຕ່ເບິ່ງລັກສະນະພາຍນອກເທົ່ານັ້ນ ແຕ່ຍັງຈະຕ້ອງໄດ້ເບິ່ງເນື້ອໃນຄຳໃຫ້ການ ແລະ ພິຈາລະນາລັກສະນະທ່າທີຂອງຜູ້ໃຫ້ການ ເພາະມີຜົນຕໍ່ຄວາມໜ້າເຊື່ອຖືຂອງຄຳໃຫ້ການ ເຊັ່ນ: ລັກສະນະທ່າທີຂອງການໃຫ້ການເປັນແນວໃດ ເປັນທຳມະຊາດບໍ່, ມີຄວາມໝັ້ນໃຈເກີນໄປບໍ່, ຄວາມຈິງໃຈໃນການເລົ່າເຫດການ ຫຼື ບໍ່.

**7) ເງື່ອນໄຂຂອງການຊີ້ຕົວ**

ເງື່ອນໄຂຂອງການຊີ້ຕົວ ຈຳເປັນຕ້ອງພິຈາລະນາເບິ່ງວ່າສອດຄ່ອງກັບການດຳເນີນການຊີ້ຕົວທີ່ກຳນົດໄວ້ໃນມາດຕາ 120 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ຫຼື ບໍ່ ແລະ ມີຄວາມຈຳເປັນຕ້ອງໄດ້ເບິ່ງພາບລວມຂອງການຊີ້ຕົວ ວ່າມີການຊັກນຳຈູງໃຈຈາກເຈົ້າໜ້າທີ່ ຫຼື ບໍ່. ຕົວຢ່າງ: ການຊີ້ຕົວແມ່ນປະຕິບັດຖືກຕ້ອງຕາມກົດໝາຍ, ແຕ່ມີການແນະນຳຈາກເຈົ້າໜ້າທີ່ໂດຍການຈັດຕຳແໜ່ງຈຸດຢືນ ຫຼື ຈຸດນັ່ງ, ເຄື່ອງນຸ່ງ, ຮູບປະພັນໃບໜ້າຂອງຜູ້ຖືກຊີ້ຕົວໃຫ້ມີລັກສະນະໂດດເດັ່ນເພື່ອໃຫ້ຜູ້ຊີ້ຕົວເລືອກເອົາ.

ນອກຈາກນີ້, ກໍມີບາງກໍລະນີທີ່ຈຳເປັນຈະຕ້ອງພິຈາລະນາເນື້ອໃນຂອງຄຳໃຫ້ການ ວ່າມີການຊັກນຳຈູງໃຈຈາກເຈົ້າໜ້າທີ່ໃນການຊີ້ຕົວນັ້ນ ຫຼື ບໍ່. ຕົວຢ່າງ: ໃນກໍລະນີທີ່ຜູ້ຊີ້ຕົວ ຫາກໃຊ້ຄຳເວົ້າທີ່ມີລັກສະນະບໍ່ຈະແຈ້ງ ເຊັ່ນວ່າ “ຄິດວ່າແມ່ນຜູ້ນີ້”, ກໍລະນີນີ້ມີຄວາມເປັນໄປໄດ້ທີ່ຜູ້ກ່ຽວອາດຈະບໍ່ໄດ້ຖືກຊັກນຳຈູງໃຈຈາກເຈົ້າໜ້າທີ່.

**III. ເມື່ອຄຳນຶງເຖິງບັນຫາທີ່ຄວນເອົາໃຈໃສ່ ຕາມຂໍ້ II ຂ້າງເທິງນີ້ແລ້ວ, ຄິດວ່າ ຄຳໃຫ້ການຂອງ ຄ ໃນຄະດີນີ້ສາມາດເຊື່ອຖືໄດ້ ຫລື ບໍ່? ຈົ່ງອະທິບາຍທັງກໍລະນີທີ່ເຫັນວ່າເຊື່ອຖືໄດ້ ແລະ ບໍ່ເຊື່ອຖືໄດ້.**

❖ **ກໍລະນີທີ່ເຫັນວ່າເຊື່ອຖືໄດ້:**

**1) ສະພາບການເບິ່ງເຫັນເຫດການ**: ປະກອບມີ 2 ເງື່ອນໄຂ ຄື:

**1.1) ເງື່ອນໄຂທາງອັດຕະວິໄສ :**

ເຫດການແມ່ນເກີດຂຶ້ນໃນເວລາກາງຄືນ ແລະ ມີຊາຍແປກໜ້າທີ່ມີພຶດຕິກຳຜິດປົກກະຕິໜ້າສົງໄສ, **ຄ** ຈຶ່ງໄດ້ເອົາຕົວຕິດຝາໄວ້ ເພື່ອບໍ່ໃຫ້ຜູ້ຊາຍຄົນດັ່ງກ່າວເຫັນຕົນ. ອີກປະການໜຶ່ງໄລຍະເວລາທີ່ເກີດເຫດ ກັບໄລຍະເວລາທີ່ໃຫ້ການ ແມ່ນໄດ້ຜ່ານມາເປັນເວລາ 3 ເດືອນແລ້ວ, ແຕ່ຍ້ອນເຫດການທີ່ **ຄ** ເຫັນແມ່ນເຫດການໃຫຍ່ ທີ່ບໍ່ແມ່ນເລື່ອງທີ່ຈະເກີດຂຶ້ນໄດ້ງ່າຍໆ ຊຶ່ງ

ໂດຍປົກກະຕິແລ້ວ ຄົນທົ່ວໄປກໍຈະລືມໄດ້ຍາກ, ຈຶ່ງເຮັດໃຫ້ລາວສາມາດຈື່ຈຳໄດ້ດີ, ເນື່ອງຈາກວ່າ ເຫດການດັ່ງກ່າວບໍ່ແມ່ນເຫດການທີ່ເກີດຂຶ້ນແບບທົ່ວໄປ. ສະນັ້ນ, ຄົນເຮົາຈະມີຄວາມລະມັດລະວັງໃນການເບິ່ງ ແລະ ສາມາດຈື່ຈຳໄດ້ ຈຶ່ງສາມາດເວົ້າໄດ້ວ່າໃນກໍລະນີສຶກສາຂອງເຮົາ **ຄ** ແມ່ນມີສະຕິໃນການເບິ່ງເຫັນ ແລະ ສາມາດຈື່ຈຳໄດ້ດີ.

**1.2) ເງື່ອນໄຂທາງພາວະວິໄສ:**

ໃນເຫດການກໍລະນີສຶກສານີ້ ສຳລັບໄລຍະຫ່າງຜູ້ເຫັນເຫດການ ແລະ ຊາຍແປກໜ້າ ຍັງບໍ່ທັນຈະແຈ້ງ, ແຕ່ອີງຕາມຄຳໃຫ້ການຂອງ **ຄ** ທີ່ໄດ້ເວົ້າວ່າ ລາວເບິ່ງເຫັນຊາຍແປກໜ້າຄົນນັ້ນຜ່ານປະຕູແກ້ວ ໂດຍເອົາຕົວຕິດຝາ ເພື່ອບໍ່ໃຫ້ຊາຍຄົນນັ້ນເຫັນ. ຖ້າຫາກວ່າຄຳໃຫ້ການຂອງ **ຄ** ແມ່ນຂໍ້ເທັດຈິງແລ້ວ ເຮົາສາມາດຄາດຄະເນໄດ້ວ່າ ໄລຍະຫ່າງລະຫວ່າງ **ຄ** ຜູ້ເຫັນເຫດການ ແລະ ຊາຍຄົນດັ່ງກ່າວ ເປັນໄລຍະຫ່າງທີ່ສາມາດແນມເຫັນກັນໄດ້ໂດຍບໍ່ມີສິ່ງກີດຂວາງໃດໆ.

ສະນັ້ນ, ອີງຕາມເງື່ອນໄຂທາງດ້ານພາວະວິໄສ ແລະ ເງື່ອນໄຂທາງດ້ານອັດຕະວິໄສແລ້ວສາມາດສະຫຼຸບໄດ້ວ່າ **ຄ** ມີສະພາບການເບິ່ງເຫັນທີ່ດີ ເນື່ອງຈາກວ່າໄລຍະຫ່າງຂອງການເບິ່ງເຫັນແມ່ນບໍ່ໄກ ແລະ ບໍ່ມີສິ່ງກີດຂວາງໃດໆ ພ້ອມດຽວກັນນັ້ນ **ຄ** ກໍມີສະຕິໃນການເບິ່ງເຫັນ ແລະ ສາມາດຈື່ຈຳເຫດການໄດ້ດີ.

**2) ສາຍພົວພັນລະຫວ່າງຜູ້ໃຫ້ການ ກັບຜູ້ກ່ຽວຂ້ອງກັບຄະດີ:**

**ກ** ແລະ **ຄ** ບໍ່ໄດ້ຮູ້ຈັກກັນມາກ່ອນ ຊຶ່ງເປັນໄປໄດ້ຍາກທີ່ **ຄ** ຈະໃຫ້ການເທັດ ເພື່ອໃສ່ຮ້າຍ **ກ**.

**3) ຄຸນລັກສະນະ, ຈຸດພິເສດ ສະເພາະຂອງຜູ້ໃຫ້ການ**

**ຄ** ບໍ່ໄດ້ມີຈຸດພິເສດຜິດປົກກະຕິ, ບໍ່ມີທ່າທາງວ່າຈະເປັນຄົນຂີ້ຕົວະ ສ້າງເລື່ອງ ເພາະບໍ່ມີແຮງຈູງໃຈໃດທີ່ຈະເຮັດໃຫ້ **ຄ** ສ້າງເລື່ອງຂຶ້ນມາເພື່ອໃສ່ຮ້າຍ **ກ.**

ໂດຍອີງໃສ່ຂໍ້ຄວນເອົາໃຈໃສ່ທີ 2 ແລະ 3 ເຫັນວ່າມີຄວາມສອດຄ່ອງກັນ ຄື: **ກ** ແລະ **ຄ** ບໍ່ມີສາຍພົວພັນໃດໆຕໍ່ກັນ ແລະ **ຄ** ກໍບໍ່ມີທ່າທີວ່າຈະເປັນຄົນຂີ້ຕົວະ. ສະນັ້ນ, **ຄ** ກໍບໍ່ມີເຫດຜົນຫຍັງທີ່ຈະຕ້ອງສ້າງເລື່ອງຂີ້ຕົວະເພື່ອໃສ່ຮ້າຍ **ກ.**

**4) ຄຳໃຫ້ການສອດຄ່ອງກັບຫຼັກຖານພາວະວິໄສ ຫຼື ຄຳໃຫ້ການອື່ນ ຫລື ບໍ່?**

ເຖິງວ່າ ຈະຍັງບໍ່ມີຂໍ້ມູນ ຫຼື ຫຼັກຖານອື່ນ ມາສະໜັບສະໜູນ ຫຼື ມາປຽບທຽບຄຳໃຫ້ການຂອງ **ຄ** ກໍຕາມ ແຕ່ບໍ່ໄດ້ໝາຍຄວາມວ່າຄຳໃຫ້ການຂອງ **ຄ** ຈະບໍ່ສາມາດເຊື່ອຖືໄດ້ເລີຍ.

**5) ເນື້ອໃນຄຳໃຫ້ການມີຄວາມເປັນທຳມະຊາດ, ສົມເຫດສົມຜົນ, ລົງເລິກລາຍລະອຽດ, ສອດຄ່ອງກັນ ຫຼື ບໍ່ ?**

- **ການປະເມີນພາບລວມຂອງຄຳໃຫ້ການ**

  ເນື້ອໃນຂອງຄຳໃຫ້ການ: **ຄ** ໄດ້ໄປພັກຢູ່ ອາພາດເມັ້ນຂອງ **ງ** ພໍດີ **ຄ** ຮູ້ເມື່ອຂຶ້ນມາຕອນເດິກ ແລ້ວເຫັນຜູ້ຊາຍແປກໜ້າຢູ່ໃນອາພາດເມັ້ນ ທັນທີທີ່ຜູ້ຊາຍແປກໜ້າອອກໄປ **ຄ** ກໍໄດ້ຍິນສຽງ ໄຟໄໝ້ ແລະ ມີຄວັນອອກມາ.

  ສະນັ້ນ, ອີງຕາມຄຳໃຫ້ການຂອງ **ຄ** ກ່ຽວກັບເຫດການທີ່ເກີດຂຶ້ນເຫັນວ່າ ບໍ່ມີຈຸດໃດທີ່ວ່າບໍ່ ເປັນທຳມະຊາດ.

- **ການປະເມີນສະເພາະຈຸດຂອງເນື້ອໃນຄຳໃຫ້ການ**

  **1. ເນື້ອໃນຄຳໃຫ້ການ:**

  ລາວໄດ້ໃຊ້ແຂນສອກເບື້ອງຂວາບໍ່ແມ່ນມື ເປີດປະຕູ ຂ້ອຍຮູ້ສຶກແປກໃຈຕື່ມອີກວ່າ ເປັນຫຍັງລາວບໍ່ເອົາມືເປີດປະຕູ ເປັນຫຍັງຈຶ່ງໃຊ້ແຂນສອກ ເບື້ອງຂວາເປີດ. ອີງຕາມຄຳ ໃຫ້ການດັ່ງກ່າວເຫັນວ່າ **ຄ** ໃຫ້ການລົງເລິກລາຍລະອຽດໄດ້ ແລະ ສາມາດສັນນິຖານ ໄດ້ວ່າລາວຢູ່ໃນເຫດການຕົວຈິງ.

  **2. ເນື້ອໃນຄຳໃຫ້ການ:**

  ຫຼັງຈາກທີ່ຊາຍຄົນນັ້ນອອກຈາກປະຕູໄປແລ້ວ, ຂ້ອຍກໍບໍ່ເຫັນລາວ, ຄິດວ່າລາວ ໜ້າຈະຂີ່ລົດໃຫຍ່ອອກໄປບ່ອນໃດບ່ອນໜຶ່ງ ເພາະວ່າຂ້ອຍເຫັນໄຟລົດ ແລະ ໄດ້ຍິນ ສຽງເປີດປະຕູ ແລະ ສຽງສະຕາດລົດ. ເນື່ອງຈາກ ຄິດວ່າຊາຍຄົນນັ້ນໄປແລ້ວ ຂ້ອຍຈຶ່ງ ກັບເຂົ້າໄປນອນຢູ່ຫ້ອງທີ່ **ງ** ນອນຢູ່ ແຕ່ໃນຂະນະທີ່ກຳລັງຈະນອນ, ຂ້ອຍໄດ້ກິ່ນຄວັນ ແລະ ໄດ້ຍິນສຽງ "ປະຈິ ປະຈິ" ຄືສຽງໄຟໄໝ້. ດັ່ງນັ້ນ, ຂ້ອຍຄິດວ່າເກີດໄຟໄໝ້ຂຶ້ນ ກໍ ເລີຍຟ້າວປຸກ **ງ** ຂຶ້ນມາ ແລະ ຟ້າວອອກຈາກອະພາດເມັ້ນໄປ. ອີງຕາມເນື້ອໃນຄຳ ໃຫ້ການເຫັນວ່າ **ຄ** ໃຫ້ການໃນສິ່ງທີ່ຕົນເອງເຫັນກໍວ່າເຫັນ ບໍ່ເຫັນກໍວ່າບໍ່ເຫັນ ແຕ່ໃນ ຄຳໃຫ້ການທີ່ **ຄ** ບໍ່ເຫັນນັ້ນ ລາວສາມາດອະທິບາຍໄດ້ຢ່າງສົມເຫດສົມຜົນ.

  **3. ເນື້ອໃນຄຳໃຫ້ການ**

  ໃນຕອນທີ່ຂ້ອຍເຫັນຊາຍຄົນນັ້ນ, ລາວມີສ່ວນສູງ ທີ່ສູງກວ່າຂ້ອຍໜ້ອຍໜຶ່ງ ປະມານ 170 ຊມ ຫາ 175 ຊມ, ຫຸ່ນທຳມະດາ ຊິວ່າຕຸ້ຍກະບໍ່ຕຸ້ຍຊິວ່າຈ່ອຍກະບໍ່ຈອຍ. ຊາຍຄົນທີ່ຂ້ອຍເຫັນ ມີລັກສະນະຮູບໜ້າສີ່ຫຼ່ຽມ, ໃບໜ້າໃຫຍ່, ອາຍຸປະມານ 45 ປີ ຫາ 50 ປີ. ອີງຕາມເນື້ອໃນຄຳໃຫ້ການເຫັນວ່າ **ຄ** ສາມາດໃຫ້ລາຍລະອຽດກ່ຽວກັບຜູ້ ຊາຍແປກໜ້າຄົນນັ້ນໄດ້.

ສະນັ້ນ, ຈຶ່ງເຫັນວ່າບັນດາເນື້ອໃນຄຳໃຫ້ການຂອງ **ຄ** ແມ່ນມີຄວາມເປັນທຳມະຊາດ, ສົມເຫດສົມຜົນ ແລະ ສາມາດລົງເລິກລາຍລະອຽດໄດ້.

**6) ລັກສະນະທ່າທາງຂອງຜູ້ໃຫ້ການໃນເວລາໃຫ້ການ:**

ຈາກຄຳໃຫ້ການຂອງ **ຄ** ທີ່ວ່າ "ຫຼັງຈາກຊາຍຄົນນັ້ນອອກຈາກປະຕູໄປແລ້ວ, ຂ້ອຍກໍບໍ່ເຫັນລາວເລີຍຄິດວ່າລາວໜ້າຈະຂີ່ລົດໃຫຍ່ອອກໄປບ່ອນໃດບ່ອນໜຶ່ງ ເພາະວ່າຂ້ອຍເຫັນໄຟລົດ ແລະ ໄດ້ຍິນສຽງເປີດປະຕູ ແລະ ສຽງສະຕາດລົດ" ສະແດງໃຫ້ເຫັນວ່າ **ຄ** ມີຄວາມຈິງໃຈໃນການເລົ່າເຫດການເພາະເລົ່າ ສະເພາະເຫດການທີ່ຕົນເອງເຫັນ, ສ່ວນຂອບເຂດທີ່ບໍ່ເຫັນກໍບອກວ່າບໍ່ເຫັນ ແລະ ການໃຫ້ການທີ່ມີລັກສະນະໂຕ້ຖຽງກໍບໍ່ມີ.

**7) ເງື່ອນໄຂຂອງການຊີ້ຕົວ**

ການຊີ້ຕົວ ໄດ້ປະຕິບັດຖືກຕ້ອງຕາມມາດຕາ 120 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ແລະ ບໍ່ມີການຊັກນຳຈູງໃຈຈາກເຈົ້າໜ້າທີ່ ເນື່ອງຈາກວ່າ **ຄ** ໃຊ້ຄຳເວົ້າທີ່ວ່າ "ຄິດວ່າ ແມ່ນ **ກ**" ໃນການຊີ້ຕົວນັ້ນ ກໍສະແດງວ່າ ເປັນຄຳເວົ້າທີ່ເປັນທຳມະຊາດ ໂດຍບໍ່ມີການຊັກນຳຈູງໃຈຈາກເຈົ້າໜ້າທີ່ ຈຶ່ງເວົ້າຕາມຄວາມຄິດຂອງຕົນເອງ.

**<u>ສະຫຼຸບ:</u>**

ຜ່ານການພິຈາລະນາຄຳໃຫ້ການຂອງ **ຄ** ໂດຍອີງໃສ່ປະເດັນທີ່ຄວນເອົາໃຈໃສ່ 7 ຂໍ້ຂ້າງເທິງນີ້ ສາມາດສັງລວມໄດ້ວ່າ: ສະພາບການເບິ່ງເຫັນດີ, ພ້ອມກັນນັ້ນ **ຄ** ກໍບໍ່ໄດ້ຮູ້ຈັກ **ກ** ມາກ່ອນ ບໍ່ເຄີຍມີສາຍພົວພັນທາງດ້ານຜົນປະໂຫຍດຮ່ວມກັນ ຈຶ່ງບໍ່ມີແຮງຈູງໃຈຫຍັງທີ່ຈະສ້າງເລື່ອງຂຶ້ນມາເພື່ອຕົວະ, ນອກຈາກນັ້ນ ການໃຫ້ການກໍມີຄວາມເປັນທຳມະຊາດ, ສົມເຫດສົມຜົນ, ສາມາດລົງເລິກລາຍລະອຽດໄດ້, ທັດສະນະທ່າທີກໍບໍ່ມີອາການຜິດປົກກະຕິຫຍັງ, ເວລາຊີ້ຕົວກໍບໍ່ໄດ້ມີການຊັກນຳຈາກເຈົ້າໜ້າທີ່ແຕ່ປະການໃດ. ສະນັ້ນ, ເຖິງວ່າ ຈະບໍ່ມີຫຼັກຖານອື່ນມາສະໜັບສະໜູນຄຳໃຫ້ການຂອງ **ຄ** ກໍຕາມ, ແຕ່ເມື່ອພິຈາລະນາໂດຍລວມແລ້ວ ສາມາດສະຫຼຸບໄດ້ວ່າ ຄຳໃຫ້ການຂອງ **ຄ** ແມ່ນສາມາດເຊື່ອຖືໄດ້.

ເຖິງວ່າ ເຮົາຈະສາມາດພິສູດໄດ້ວ່າ ຄຳໃຫ້ການຂອງ **ຄ** ແມ່ນສາມາດໜ້າເຊື່ອຖືໄດ້ກໍຕາມ, ແຕ່ກໍຍັງບໍ່ທັນສາມາດສະຫຼຸບໄດ້ວ່າ **ກ** ເປັນຜູ້ກະທຳຜິດໄດ້ເທື່ອ, ເຮົາພຽງແຕ່ສາມາດກຳນົດເຫດການຂໍ້ເທັດຈິງໄດ້ຄື: ໃນມື້ເກີດເຫດ ມີຊາຍແປກໜ້າທີ່ມີພຶດຕິກຳຜິດປົກກະຕິໜ້າສົງໄສ ຢູ່ສະຖານທີ່ເກີດເຫດ ຊຶ່ງມີຮູບຮ່າງ, ລັກສະນະທ່າທີຄ້າຍຄືກັນກັບ **ກ**.

❖ <u>ກໍລະນີທີ່ເຫັນວ່າຄຳໃຫ້ການບໍ່ສາມາດເຊື່ອຖືໄດ້:</u>

**1) ສະພາບການເບິ່ງເຫັນເຫດການ:**

1. ເນື່ອງຈາກ **ກ** ຫາກໍຕື່ນນອນອາດຈະຍັງມີອາການງ້ວງນອນ ຈຶ່ງມີຄວາມເປັນໄປໄດ້ວ່າສະຕິໃນການເບິ່ງເຫັນເຫດການອາດຈະບໍ່ດີປານໃດ.
2. ເນື່ອງຈາກເວລາທີ່ເກີດເຫດເປັນເວລາກາງຄືນ ແລະ ເວລາການເບິ່ງເຫັນແມ່ນມີພຽງ 20 ວິນາທີ ຊຶ່ງກໍມີຄວາມເປັນໄປໄດ້ຍາກທີ່ຈະເຫັນເຫດການໄດ້ດີຈະແຈ້ງປານນັ້ນ.

ສະນັ້ນ, ເມື່ອອີງຕາມເງື່ອນໄຂທັງ 2 ຢ່າງແລ້ວ ຈຶ່ງບໍ່ສາມາດເວົ້າໄດ້ວ່າ **ຄ** ຢູ່ໃນສະພາບການທີ່ເຫັນເຫດການໄດ້ດີ.

**2) ສາຍພົວພັນລະຫວ່າງຜູ້ໃຫ້ການ ກັບຜູ້ກ່ຽວຂ້ອງກັບຄະດີ:**

ເຖິງວ່າ **ກ** ແລະ **ຄ** ຈະບໍ່ຮູ້ກັນມາກ່ອນກໍຕາມ ແລະ ເປັນໄປໄດ້ຍາກທີ່ **ຄ** ຈະສ້າງເລື່ອງເທັດໃສ່ຮ້າຍ **ກ**, ແຕ່ກໍຍັງມີຄວາມເປັນໄປໄດ້ທີ່ **ຄ** ຈະເບິ່ງຜິດວ່າເປັນ **ກ** ຊຶ່ງອາດມີຄວາມຜິດພາດໃນການຈື່ຈຳ.

**3) ຄຸນລັກສະນະ, ຈຸດພິເສດ ສະເພາະຂອງຜູ້ໃຫ້ການ:**

ເຖິງວ່າ **ຄ** ບໍ່ມີທ່າທາງເປັນຄົນຂີ້ຕົວະກໍຕາມ, ແຕ່ກໍມີຄວາມເປັນໄປໄດ້ທີ່ **ຄ** ອາດຈະເບິ່ງຜິດວ່າແມ່ນ **ກ** ແລະ ບາງທີ່ກໍອາດມີຄວາມຜິດພາດໃນການຈື່ຈຳ.

**4) ຄຳໃຫ້ການສອດຄ່ອງກັບຫຼັກຖານພາວະວິໄສ ຫຼື ຄຳໃຫ້ການອື່ນ ຫລື ບໍ່?**

ບໍ່ມີຫຼັກຖານສຳຄັນອື່ນ ທີ່ຈະມາຢັ້ງຢືນຄວາມຖືກຕ້ອງສອດຄ່ອງ ຂອງຄຳໃຫ້ການຂອງ **ຄ** ໄດ້.

**5) ເນື້ອໃນຄຳໃຫ້ການມີຄວາມເປັນທຳມະຊາດ, ສົມເຫດສົມຜົນ, ລົງເລິກລາຍລະອຽດ, ສອດຄ່ອງກັນ ຫຼື ບໍ່ ?**

ຈາກຄຳໃຫ້ການຂອງ **ຄ** ທີ່ວ່າ: "ໄລຍະເວລາທີ່ຂ້ອຍເບິ່ງຜູ້ຊາຍຄົນນັ້ນ ລະຫວ່າງທີ່ລາວຍ່າງຕາມທາງຍ່າງ ຈົນໄປຮອດປະຕູອະພາດເມັ້ນ ແລະ ໄຂປະຕູອອກຈາກພື້ນທີ່ຂອງອະພາດເມັ້ນ ກໍປະມານ 20 ວິນາທີ", ເມື່ອວິເຄາະແລ້ວເຫັນວ່າ ເຫດການເກີດຂຶ້ນໃນເວລາກາງຄືນ ແນ່ນອນໃນສະພາບການທີ່ມີຄວາມມືດ ແລະ ໃນໄລຍະເວລາ ພຽງ 20 ວິນາທີ ກໍ່ມີຄວາມເປັນໄປໄດ້ຍາກທີ່ຈະສາມາດເກັບກຳລາຍລະອຽດຂອງຊາຍແປກໜ້າໄດ້ດີປານນັ້ນ ໂດຍສະເພາະການບອກເລົ່າກ່ຽວກັບຮູບຮ່າງ, ໜ້າຕາ, ອາຍຸ ແລະ ເສື້ອຜ້າ ຂອງຊາຍແປກໜ້າ ທີ່ຜູ້ກ່ຽວເຫັນໃນເຫດການ ຊຶ່ງອາດຈະເປັນການຄາດເດົາ ແລະ ຈິນຕະນາການຂອງຜູ້ກ່ຽວເອງ. ສະນັ້ນ, ຄຳໃຫ້ການຂອງ **ຄ** ຈຶ່ງບໍ່ເປັນ ທຳມະຊາດ ແລະ ບໍ່ສົມເຫດສົມຜົນ.

**6) ລັກສະນະທ່າທາງຂອງຜູ້ໃຫ້ການໃນເວລາໃຫ້ການ**

ເຖິງວ່າ ລັກສະນະທ່າທາງຂອງ **ຄ** ຈະບໍ່ມີຫຍັງຜິດປົກກະຕິ ແລະ **ຄ** ເອງກໍຈິງໃຈເລົ່າເຫດການກໍຕາມ, ແຕ່ກໍ່ຍັງບໍ່ທັນມີຫຼັກຖານໃດທີ່ໜັກແໜ້ນພໍຈະມາຢັ້ງຢືນຄວາມໜ້າເຊື່ອຖືຂອງຄຳໃຫ້ການຂອງ **ຄ** ໄດ້.

**7) ເງື່ອນໄຂການຊີ້ຕົວ:**

ເຖິງວ່າ ການປະຕິບັດການຊີ້ຕົວແມ່ນຖືກຕ້ອງຕາມກົດໝາຍ ມາດຕາ 120 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ໂດຍບໍ່ມີການຊັກນຳຈູງໃຈຈາກເຈົ້າໜ້າທີ່ກໍຕາມ, ແຕ່ **ຄ** ກໍຍັງບໍ່ມີຄວາມໝັ້ນໃຈໃນການໃຫ້ການ ເປັນຕົ້ນຍັງໃຊ້ຄຳວ່າ “ຄິດວ່າ ແມ່ນ **ກ**” ນັ້ນ ຊຶ່ງເປັນຄຳເວົ້າທີ່ບໍ່ມີຄວາມຊັດເຈນ ແລະ ບົ່ງຊີ້ວ່າ **ກ** ແມ່ນຄົນດຽວກັບຜູ້ທີ່ຕົນເຫັນໃນມື້ເກີດເຫດ ຈຶ່ງຍັງບໍ່ທັນສາມາດເຊື່ອຖືຄຳໃຫ້ການຂອງ **ຄ** ໄດ້.

**<u>ສະຫຼຸບ:</u>**

ຜ່ານການພິຈາລະນາຄຳໃຫ້ການຂອງ **ຄ** ໂດຍອີງໃສ່ປະເດັນທີ່ຄວນເອົາໃຈໃສ່ 7 ຂໍ້ຂ້າງເທິງນີ້ເຫັນວ່າຄຳໃຫ້ການຂອງ **ຄ** ຍັງບໍ່ສາມາດເຊື່ອຖືໄດ້ ເນື່ອງຈາກຍັງບໍ່ມີຫຼັກຖານໃດ ມາສະໜັບສະໜູນຄຳໃຫ້ການຂອງ **ຄ** ພ້ອມນີ້ຍັງມີປະເດັນທີ່ຍັງບໍ່ທັນຈະແຈ້ງ ແລະ ໜ້າສົງໄສ ເຊັ່ນ: ສະພາບການເບິ່ງເຫັນເຫດການໃນໄລຍະເວລາສັ້ນໆພຽງ 20 ວິນາທີ **ຄ** ຈະສາມາດເລົ່າເຫດການໄດ້ຢ່າງລະອຽດປານນີ້, ຜູ້ກ່ຽວອາດເລົ່າເຫດການຕາມການຈິນຕະນາການ ແລະ ການຄາດເດົາຂອງຕົນເອງກໍ່ເປັນໄປໄດ້, ອີກປະການໜຶ່ງ **ຄ** ເອງກໍບໍ່ມີລັກສະນະໝັ້ນໃຈໃນການຊີ້ຕົວປານໃດ. ສະນັ້ນ, ຄຳໃຫ້ການຂອງ **ຄ** ຈຶ່ງບໍ່ສາມາດເຊື່ອຖືໄດ້ ຈຳເປັນຈະຕ້ອງໄດ້ຄົ້ນຄວ້າ ພິຈາລະນາລະອຽດເພີ່ມເຕີມ.

**IV. ຖ້າຫາກການຄົ້ນຄວ້າຕາມເນື້ອໃນຂໍ້ເທັດຈິງ ແລະ ຫຼັກຖານສະເພາະທີ່ມີຢູ່ໃນເນື້ອຄະດີ ຕົວຢ່າງນີ້ແລ້ວ ສາມາດພິຈາລະນາຕັດສິນວ່າ ກ ມີຄວາມຜິດໃນຂໍ້ກ່າວຫາຄາດຕະກຳໄດ້ ຫຼື ບໍ່? ຈົ່ງອະທິບາຍທັງກໍລະນີພິຈາລະນາຕັດສິນວ່າ ກ ມີຄວາມຜິດ ແລະ ກໍລະນີພິຈາລະນາຕັດສິນວ່າ ກ ບໍ່ມີຄວາມຜິດ.**

❖ <u>ທັດສະນະທີ່ເຫັນວ່າ ກ ມີຄວາມຜິດໃນຂໍ້ກ່າວຫາຄາດຕະກຳ:</u>

ຜ່ານການວິເຄາະບັນດາຫຼັກຖານທີ່ມີຢູ່ **ກ** ຈະມີຄວາມຜິດໃນຂໍ້ຫາຈູດຄາດຕະກຳ ຖ້າເຮົາສາມາດພິສູດໄດ້ວ່າ: 1) ຄຳໃຫ້ການຂອງ **ຄ** ສາມາດເຊື່ອຖືໄດ້ ບວກກັບການພິສູດຄຳໃຫ້ການ ແລະ ຫຼັກຖານອື່ນໆຫາກພິສູດໄດ້ວ່າ 2) ຊາຍແປກໜ້າແມ່ນຜູ້ຈູດຄາດຕະກຳ ແລະ 3) ຊາຍແປກໜ້ານັ້ນແມ່ນຜູ້ດຽວກັນກັບ **ກ** ຈຶ່ງກຳນົດຂໍ້ເທັດຈິງໄດ້ວ່າ **ກ** ແມ່ນຜູ້ກະທຳຜິດ.

1. ຜ່ານການພິຈາລະນາຄຳໃຫ້ການຂອງ **ຄ** ແລ້ວ ສາມາດສັງລວມໄດ້ວ່າ: ສະພາບການເບິ່ງເຫັນດີ, ພ້ອມກັນນັ້ນ **ຄ** ກໍບໍ່ໄດ້ຮູ້ຈັກ **ກ** ມາກ່ອນ ບໍ່ເຄີຍມີສາຍພົວພັນທາງດ້ານຜົນປະໂຫຍດຮ່ວມກັນຈຶ່ງບໍ່ມີແຮງຈູງໃຈຫຍັງທີ່ຈະສ້າງເລື່ອງຂຶ້ນມາເພື່ອຕົວະ, ນອກຈາກນັ້ນ ການໃຫ້ການກໍມີຄວາມ

ເປັນທຳມະຊາດ, ສົມເຫດສົມຜົນ, ສາມາດລົງເລິກລາຍລະອຽດໄດ້, ທັດສະນະທ່າທີກໍບໍ່ມີອາການຜິດປົກກະຕິຫຍັງ, ເວລາຊີ້ຕົວກໍບໍ່ໄດ້ມີການຊັກນຳຈູງໃຈຈາກເຈົ້າໜ້າທີ່ແຕ່ປະການໃດ. ສະນັ້ນ, ເຖິງຈະບໍ່ມີຫຼັກຖານອື່ນມາສະໜັບສະໜູນຄຳໃຫ້ການຂອງ **ຄ** ກໍຕາມ, ແຕ່ເມື່ອພິຈາລະນາໂດຍລວມແລ້ວ ສາມາດສະຫຼຸບໄດ້ວ່າ ຄຳໃຫ້ການຂອງ **ຄ** ສາມາດເຊື່ອຖືໄດ້.

ສະນັ້ນ, ເຖິງວ່າ ເຮົາຈະສາມາດພິສູດໄດ້ວ່າ ຄຳໃຫ້ການຂອງ **ຄ** ສາມາດໜ້າເຊື່ອຖືໄດ້ກໍຕາມ ແຕ່ກໍຍັງບໍ່ທັນສາມາດສະຫຼຸບໄດ້ວ່າ **ກ** ເປັນຜູ້ກະທຳຜິດໄດ້ເທື່ອ, ພຽງແຕ່ສາມາດກຳນົດເຫດການຂໍ້ເທັດຈິງໄດ້ຄື: ໃນມື້ເກີດເຫດ ມີຊາຍແປກໜ້າທີ່ມີພຶດຕິກຳຜິດປົກກະຕິໜ້າສົງໄສ ຢູ່ສະຖານທີ່ເກີດເຫດ ຊຶ່ງມີຮູບຮ່າງ, ລັກສະນະທ່າທີຄ້າຍຄືກັນກັບ **ກ**.

2. ເຖິງວ່າ **ຄ** ຈະບໍ່ໄດ້ເຫັນເຫດການ ການຈູດໂດຍກົງ ແລະ ບໍ່ສາມາດພິສູດໄດ້ໂດຍກົງວ່າ ຜູ້ຊາຍແປກໜ້າແມ່ນຜູ້ດຽວກັນກັບຜູ້ຈູດຄາດຕະກຳກໍຕາມ, ແຕ່ຈາກສະຖານະການ ໃນເວລາທີ່ເກີດເຫດນັ້ນ ເປັນເວລາກາງເດິກ ຕາມປົກກະຕິແລ້ວຄົນທົ່ວໄປຈະບໍ່ມາຍ່າງເລາະກາງເດິກແບບນັ້ນ, ເວລາທີ່ເກີດເຫດກໍມີພຽງແຕ່ຊາຍຄົນນັ້ນທີ່ຢູ່ໃນເຫດການ ແລະ ຜູ້ກ່ຽວກໍຍັງມີລັກສະນະທ່າທີທີ່ຜິດປົກກະຕິອີກ, ເມື່ອຊາຍແປກໜ້າຍ່າງຫວິດອອກໄປ ກໍມີໄຟລຸກໄໝ້ຂຶ້ນທັນທີ.

   ສະນັ້ນ, ເມື່ອພິຈາລະນາສະພາບການໂດຍລວມແລ້ວ ຈຶ່ງສາມາດ ກຳນົດຂໍ້ເທັດຈິງໄດ້ຄື: ຊາຍແປກໜ້າທີ່ເຫັນໃນເຫດການນັ້ນ ແມ່ນຜູ້ຈູດຄາດຕະກຳ.

3. ເຖິງວ່າ ຈະສາມາດກຳນົດຂໍ້ເທັດຈິງໄດ້ວ່າ ຊາຍແປກໜ້າທີ່ເຫັນໃນເຫດການແມ່ນຜູ້ຈູດຄາດຕະກຳກໍ່ຕາມ ແຕ່ຍັງບໍ່ທັນສາມາດພິຈາລະນາໄດ້ວ່າ **ກ** ແມ່ນຜູ້ກະທຳຜິດໄດ້ ຈຶ່ງມີຄວາມຈຳເປັນຈະຕ້ອງໄດ້ພິສູດອີກວ່າ ຊາຍແປກໜ້າຄົນນັ້ນແມ່ນຜູ້ດຽວກັນກັບ **ກ** ຫຼື ບໍ່. ຜ່ານການຊີ້ຕົວຂອງ **ຄ** ໂດຍທີ່ບໍ່ໄດ້ຖືກບັງຄັບ ຫຼື ຊັກນຳຈາກເຈົ້າໜ້າທີ່, **ຄ** ກໍບອກວ່າ ຄິດວ່າແມ່ນ **ກ** ເພາະ **ກ** ມີໃບໜ້າ ແລະ ລັກສະນະຄ້າຍຄືກັນກັບຊາຍຄົນທີ່ລາວເຫັນໃນເວລາ 2 ໂມງເຊົ້າຂອງວັນທີ 5 ກຸມພາ 2019. ນອກຈາກນີ້ ການພົບເຫັນກັບໄຟ ແລະ ນ້ຳມັນຢູ່ເຮືອນ **ກ** ກໍເປັນອີກຫຼັກຖານໜຶ່ງທີ່ສາມາດເຊື່ອມໂຍງໄປຫາການຈູດໄດ້ ແລະ ການທີ່ **ກ** ແລະ **ຂ** ມີບັນຫາເລື່ອງເງິນນຳກັນນັ້ນກໍອາດເປັນແຮງຈູງໃຈໜຶ່ງທີ່ເຮັດໃຫ້ **ກ** ລົງມືຄາດຕະກຳ **ຂ** ໄດ້.

   ສະນັ້ນ, ຈຶ່ງສາມາດກຳນົດຂໍ້ເທັດຈິງໄດ້ວ່າ ຜູ້ຊາຍແປກໜ້າທີ່ **ຄ** ເຫັນໃນເຫດການນັ້ນແມ່ນຜູ້ຈູດຄາດຕະກຳ ແລະ ຜູ້ຊາຍແປກໜ້າຄົນນັ້ນກໍແມ່ນຜູ້ດຽວກັນກັບ **ກ**.

   ຜ່ານການວິເຄາະຄຳໃຫ້ການຂອງ **ຄ** ແລະ ບັນດາຫຼັກຖານອື່ນທີ່ມີຢູ່ທັງໝົດ ເຮົາສາມາດພິສູດໄດ້ວ່າ: ຄຳໃຫ້ການຂອງ **ຄ** ສາມາດເຊື່ອຖືໄດ້, ຊາຍແປກໜ້າແມ່ນເປັນຜູ້ຈູດຄາດຕະກຳ ແລະ ຊາຍແປກໜ້ານັ້ນກໍ່ແມ່ນ **ກ**. ສະນັ້ນ, ເຮົາຈຶ່ງກຳນົດຂໍ້ເທັດຈິງໄດ້ວ່າ **ກ** ແມ່ນຜູ້ກຳທຳຜິດໃນຂໍ້ກ່າວຫາຄາດຕະກຳ.

❖ <u>ທັດສະນະທີ່ເຫັນວ່າ ກ ບໍ່ມີຄວາມຜິດໃນຂໍ້ກ່າວຫາຄາດຕະກຳ:</u>

ຜ່ານການຄົ້ນຄວ້າຕາມເນື້ອໃນຂໍ້ເທັດຈິງ ແລະ ຫຼັກຖານສະເພາະທີ່ມີຢູ່ໃນກໍລະນີສຶກສາ ເຮົາສາມາດພິຈາລະນາໄດ້ວ່າ **ກ** ບໍ່ມີຄວາມຜິດໃນຂໍ້ຫາຈູດຄາດຕະກຳໃນ 3 ກໍລະນີ ຄື:

1. ຄຳໃຫ້ການຂອງ **ຄ** ບໍ່ສາມາດເຊື່ອຖືໄດ້ ແລະ ນອກຈາກຄຳໃຫ້ການແລ້ວ ກໍ່ບໍ່ມີຫຼັກຖານອື່ນມາຢັ້ງຢືນໄດ້ວ່າ **ກ** ມີຄວາມຜິດ.

   ຜ່ານການພິຈາລະນາຄຳໃຫ້ການຂອງ **ຄ** ເຫັນວ່າ ຍັງບໍ່ສາມາດເຊື່ອຖືໄດ້ ເນື່ອງຈາກຍັງບໍ່ມີຫຼັກຖານໃດມາສະໜັບສະໜູນຄຳໃຫ້ການຂອງ **ຄ** ພ້ອມນີ້ຍັງມີປະເດັນທີ່ຍັງບໍ່ທັນຈະແຈ້ງ ແລະ ໜ້າສົງໄສ ເຊັ່ນ: ສະພາບການເບິ່ງເຫັນເຫດການໃນໄລຍະເວລາສັ້ນໆພຽງ 20 ວິນາທີ **ຄ** ຈະສາມາດເລົ່າເຫດການໄດ້ຢ່າງລະອຽດປານນີ້, ຜູ້ກ່ຽວອາດເລົ່າເຫດການຕາມການຈິນຕະນາການ ແລະ ການຄາດເດົາຂອງຕົນເອງກໍເປັນໄປໄດ້, ອີກປະການໜຶ່ງ **ຄ** ເອງກໍບໍ່ມີລັກສະນະໝັ້ນໃຈໃນການຊີ້ຕົວປານໃດ. ສະນັ້ນ, ຄຳໃຫ້ການຂອງ **ຄ** ຈຶ່ງບໍ່ສາມາດເຊື່ອຖືໄດ້ ແລະ ບໍ່ສາມາດກຳນົດຂໍ້ເທັດຈິງຈາກຄຳໃຫ້ການຂອງ **ຄ** ໄດ້.

   ນອກຈາກຄຳໃຫ້ການຂອງ **ຄ** ແລ້ວ ຫຼັກຖານອື່ນໆເຊັ່ນ: ຂໍ້ຂັດແຍ່ງທາງດ້ານການເງິນລະຫວ່າງ ກ ແລະ ຂ, ກັບໄຟ ແລະ ຖັງນ້ຳມັນ ທີ່ພົບເຫັນຢູ່ເຮືອນຂອງ **ກ** ນັ້ນ ເຖິງວ່າ ຈະມີຜົນຕໍ່ການພິຈາລະນາຂໍ້ເທັດຈິງວ່າ **ກ** ເປັນຜູ້ກະທຳຜິດ ແຕ່ກໍຍັງບໍ່ທັນໜັກແໜ້ນພຽງພໍ ທີ່ຈະເອົາຜິດ **ກ** ໄດ້ ເພາະຂໍ້ຂັດແຍ່ງກໍອາດຈະບໍ່ຮ້າຍແຮງເຖິງຂັ້ນຈະເປັນແຮງຈູງໃຈໃນການຄາດຕະກຳໄດ້, ສ່ວນນ້ຳມັນ ແລະ ກັບໄຟ ກໍເປັນສິ່ງທີ່ບຸກຄົນທົ່ວໄປມີໄວ້ເພື່ອຈຸດປະສົງໃນການນຳໃຊ້ທົ່ວໄປ ຈຶ່ງບໍ່ມີຫຼັກຖານອື່ນໃດ ທີ່ຈະມາພິສູດໄດ້ວ່າ **ກ** ເປັນຜູ້ກະທຳຜິດ.

   ເມື່ອຄຳໃຫ້ການຂອງ **ຄ** ບໍ່ສາມາດເຊື່ອຖືໄດ້ ກໍບໍ່ສາມາດກຳນົດຂໍ້ເທັດຈິງຈາກຄຳໃຫ້ການຂອງ **ຄ** ແລະ ຫຼັກຖານອື່ນໆທີ່ມີຢູ່ກໍຍັງບໍ່ທັນໜັກແໜ້ນພໍທີ່ຈະສາມາດເອົາຜິດ **ກ**. ສະນັ້ນ ຈຶ່ງຍັງບໍ່ທັນສາມາດພິສູດໄດ້ວ່າ **ກ** ເປັນຜູ້ກະທຳຜິດໃນຂໍ້ກ່າວຫາຄາດຕະກຳໄດ້.

2. ຄຳໃຫ້ການຂອງ **ຄ** ສາມາດເຊື່ອຖືໄດ້ ແຕ່ຍັງບໍ່ທັນສາມາດພິສູດໄດ້ວ່າ ຊາຍແປກໜ້າທີ່ **ຄ** ເຫັນໃນສະຖານທີ່ເກີດເຫດນັ້ນ ແມ່ນຜູ້ຈູດຄາດຕະກຳ:

   ເຖິງວ່າ ຈະພິສູດໄດ້ວ່າ ຄຳໃຫ້ການຂອງ **ຄ** ສາມາດເຊື່ອຖືໄດ້ກໍ່ຕາມ, ແຕ່ຄຳໃຫ້ການຂອງ **ຄ** ກໍເປັນພຽງຫຼັກຖານທາງອ້ອມ ທີ່ບໍ່ສາມາດນຳມາພິສູດໂດຍກົງໄດ້ວ່າ ຊາຍແປກໜ້າແມ່ນຜູ້ຈູດຄາດ ຕະກຳ. ເນື່ອງຈາກວ່າ **ຄ** ບໍ່ແມ່ນຜູ້ອາໄສປະຈຳຢູ່ອາພາດເມັ້ນແຫ່ງນັ້ນ, ພຽງແຕ່ມານອນນຳ **ງ** ອາດຈະບໍ່ຮູ້ສະພາບການເຂົ້າ-ອອກ ໄດ້ດີເທົ່າທີ່ຄວນ ແລະ ໄລຍະເວລາທີ່ເຫັນເຫດການພາຍໃນ 20 ວິນາທີນັ້ນ ກໍເປັນຊ່ວງໄລຍະເວລາພຽງສັ້ນໆ, **ຄ** ອາດຈະບໍ່ທັນເຫັນເຫດການກ່ອນໜ້ານັ້ນວ່າເກີດຫຍັງຂຶ້ນ ແລະ ມີໃຜແດ່, ຈຶ່ງບໍ່ສາມາດເວົ້າໄດ້ວ່າ ນອກຈາກຊາຍແປກໜ້າຄົນນັ້ນແລ້ວ ຈະບໍ່ມີບຸກຄົນອື່ນເລີຍທີ່ຈະຈູດ ຫຼື ອາດຈະເປັນການຂ້າຕົວເອງ ເພາະຄວາມກົດດັນຈາກການມີບັນຫາ

ເລື່ອງເງິນ ຊຶ່ງອາດຈະເຮັດໃຫ້ຜູ້ກ່ຽວຄິດສັ້ນກໍເປັນໄປໄດ້. ນອກຈາກນັ້ນ ການທີ່ເຫັນຊາຍແປກໜ້າຄົນນັ້ນໃນສະຖານທີ່ເກີດເຫດໃນເວລາໃກ້ຄຽງ ແລະ ມີລັກສະນະຜິດປົກກະຕິ ທີ່ຍົກແຂນຂຶ້ນພຽງເອິກ ກໍບໍ່ໄດ້ ໝາຍຄວາມວ່າລາວຖືຖັງນໍ້າມັນ ຫຼື ອຸປະກອນອັນອື່ນທີ່ໃຊ້ໃນການຈູດ ແລະ ນອກຈາກຄໍາໃຫ້ການຂອງ ຄ ແລ້ວ, ກໍບໍ່ມີຫຼັກຖານອື່ນໆ ທີ່ຈະມາສະໜັບສະໜູນວ່າ ຊາຍແປກໜ້າຄົນນັ້ນແມ່ນຜູ້ຈູດ.

ໂດຍອີງຕາມການກໍານົດຂໍ້ເທັດຈິງຂ້າງເທິງນີ້ ພຽງແຕ່ຄໍາໃຫ້ການຂອງ ຄ ແມ່ນຍັງບໍ່ທັນສາມາດພິສູດໄດ້ວ່າ ຜູ້ຊາຍແປກໜ້າທີ່ **ຄ** ເຫັນແມ່ນຜູ້ຈູດຄາດຕະກໍາ. ນອກຈາກນີ້ ກໍບໍ່ມີຫຼັກຖານອື່ນໆ ທີ່ຈະມາພິສູດວ່າຊາຍແປກໜ້າຄົນນັ້ນ ເປັນຜູ້ຈູດ ແລະ ກໍບໍ່ມີລັກຖານໃດມາພິສູດວ່າ **ກ** ເປັນຜູ້ກະທໍາຜິດ. ສະນັ້ນ, ເມື່ອບໍ່ສາມາດພິສູດໄດ້ວ່າ ຊາຍແແປກໜ້າທີ່ຢູ່ໃນເຫດການແມ່ນຜູ້ຈູດ ກໍບໍ່ຈໍາເປັນຕ້ອງພິສູດອີກວ່າ **ກ** ແມ່ນຊາຍແປກໜ້າ ແລະ ຖືວ່າ **ກ** ບໍ່ມີຄວາມຜິດໃນຂໍ້ກ່າວຫາຄາດຕະກໍາ.

3. ຄໍາໃຫ້ການຂອງ **ຄ** ເຊື່ອຖືໄດ້ ແລະ ພິສູດໄດ້ວ່າຊາຍແປກໜ້າທີ່ຢູ່ໃນເຫດການເປັນຜູ້ຈູດ ແຕ່ກໍຍັງບໍ່ທັນສາມາດກໍານົດໄດ້ວ່າ ຊາຍແປກໜ້າທີ່ຢູ່ໃນເຫດການນັ້ນແມ່ນ **ກ**:

   ເຖິງວ່າ ຄໍາໃຫ້ການຂອງ **ຄ** ຈະສາມາດເຊື່ອຖືໄດ້ ແລະ ພິສູດໄດ້ວ່າ ຊາຍແປກໜ້າທີ່ຢູ່ໃນເຫດການຄົນນັ້ນແມ່ນຜູ້ດຽວກັບຜູ້ຈູດຄາດຕະກໍາກໍຕາມ, ແຕ່ກໍຍັງບໍ່ທັນສາມາດກໍານົດໄດ້ວ່າຊາຍແປກໜ້າຜູ້ນັ້ນແມ່ນ **ກ** ຫຼື ບໍ່ ເພາະວ່າໃນເວລາຊີ້ຕົວ **ຄ** ເອງກໍມີລັກສະນະບໍ່ໝັ້ນໃຈ ສະແດງອອກຢູ່ບ່ອນວ່າ: **ຄ** ໃຊ້ຄໍາເວົ້າ "ຄິດວ່າແມ່ນ **ກ**" ເພາະຄ້າຍຄືກັບຜູ້ທີ່ເຫັນໃນເຫດການ ຊຶ່ງອີງຕາມຂໍ້ເທັດຈິງດັ່ງກ່າວ ສາມາດກໍານົດໄດ້ພຽງແຕ່ວ່າ **ກ** ຄ້າຍຄືກັນກັບຜູ້ຊາຍແປກໜ້າເທົ່ານັ້ນ, ແຕ່ຍັງບໍ່ສາມາດກໍານົດໄດ້ວ່າ **ກ** ແມ່ນຜູ້ຊາຍແປກໜ້າໄດ້ເທື່ອ. ນອກຈາກຄໍາໃຫ້ການຂອງ **ຄ** ແລ້ວ ກໍບໍ່ມີຫຼັກຖານອື່ນທີ່ໜັກແໜ້ນພຽງພໍເພື່ອມາສະໜັບສະໜູນວ່າ **ກ** ແມ່ນຊາຍແປກໜ້າທີ່ຢູ່ໃນເຫດການໄດ້. ນອກຈາກນີ້, ຫຼັກຖານອື່ນໆທີ່ຈະມາພິສູດໄດ້ວ່າ **ກ** ແມ່ນຜູ້ດຽວກັນກັບຜູ້ກະທໍາຜິດກໍຍັງບໍ່ທັນມີ. ສະນັ້ນ, ອີງຕາມການກໍານົດຂໍ້ເທັດຈິງຂ້າງເທິງຈຶ່ງບໍ່ສາມາດພິສູດໄດ້ວ່າ **ກ** ແມ່ນຜູ້ດຽວກັນກັບຜູ້ກະທໍາຜິດ.

## V. ສໍາລັບຄະດີນີ້ ມີປະເດັນທີ່ເຫັນວ່າ ຄວນສືບສວນ-ສອບສວນເພີ່ມເຕີມ ຫຼື ບໍ່ ຖ້າມີຈົ່ງອະທິບາຍປະເດັນດັ່ງກ່າວ ພ້ອມທັງໃຫ້ເຫດຜົນ

ເພື່ອເຮັດໃຫ້ພິຈະລະນາໄດ້ວ່າ **ກ** ມີຄວາມຜິດໃນຂໍ້ກ່າວຫາຄາດຕະກໍາໄດ້ ຫຼື ບໍ່ ນັ້ນ ຈໍາເປັນຈະຕ້ອງໄດ້ສືບສວນ-ສອບສວນ ເພີ່ມເຕີມຄື: 1) ຫຼັກຖານອື່ນໆ ທີ່ຕິດພັນກັບຄວາມໜ້າເຊື່ອຖືໄດ້ ໃນຄໍາໃຫ້ການຂອງ **ຄ** ແລະ 2) ຫຼັກຖານອື່ນທີ່ຕິດພັນກັບການພິສູດວ່າ **ກ** ແມ່ນຊາຍແປກໜ້າທີ່ຢູ່ໃນເຫດການ ແລະ ເປັນຜູ້ຈູດຄາດຕະກໍາ.

❖ **ສິ່ງທີ່ຄວນສືບສວນສອບສວນເພີ່ມເຕີມເພື່ອເຮັດໃຫ້ຄຳໃຫ້ການສາມາດເຊື່ອຖືໄດ້:**

**1) ສະພາບຂອງການເບິ່ງເຫັນເຫດການ**

**1.1) ເງື່ອນໄຂທາງອັດຕະວິໄສ :**

- ໃຫ້ທ່ານໝໍວັດແທກສາຍຕາຂອງ **ຄ** ເພື່ອຢັ້ງຢືນທາງການແພດໃນຄວາມສາມາດເບິ່ງເຫັນຂອງ **ຄ** ວ່າມີສາຍຕາດີໃນລະດັບໃດ.
- ທົດສອບສະພາບການເບິ່ງເຫັນຂອງ **ຄ** ຄືນ (ອັດຕະວິໄສ) ໂດຍການຈຳລອງເຫດການທີ່ເກີດຂຶ້ນໃນສະຖານທີ່, ສະພາບແວດລ້ອມ ແລະ ເວລາດຽວກັນ ກັບມື້ເກີດເຫດ ເພື່ອພິສູດວ່າ **ຄ** ຈະຍັງສາມາດເບິ່ງເຫັນ ແລະ ຈື່ຈຳລາຍລະອຽດຂອງບຸກຄົນໄດ້ດີຄືເກົ່າ ຫຼື ບໍ່. ຖ້າ **ຄ** ຍັງສາມາດເບິ່ງເຫັນ ແລະ ຈົດຈຳລາຍລະອຽດຂອງບຸກຄົນໄດ້ດີ ກໍສະແດງວ່າ ສະພາບການເບິ່ງເຫັນ ແລະ ຄວາມຈື່ຈຳຂອງ **ຄ** ແມ່ນສາມາດເຊື່ອຖືໄດ້.

1.2) **ເງື່ອນໄຂທາງພາວະວິໄສ:**

- ຈຳລອງເຫດການຄືນ ເພື່ອພິສູດເບິ່ງສະພາບເຫດການ, ລະດັບແສງສະຫວ່າງ, ໄລຍະຫ່າງ ແລະ ສິ່ງກີດຂວາງ ໂດຍໃຫ້ບຸກຄົນອື່ນໄປຢືນຢູ່ຈຸດທີ່ **ຄ** ຢູ່ໃນມື້ນັ້ນ ແລະ ໃນຊ່ວງເວລາໃກ້ຄຽງກັນ ວ່າບຸກຄົນອື່ນຈະສາມາດເບິ່ງເຫັນແຈ້ງຄືກັນກັບ **ຄ** ໃຫ້ການບໍ່.

**2) ສາຍພົວພັນລະຫວ່າງຜູ້ໃຫ້ການ ກັບ ບຸກຄົນອື່ນທີ່ກ່ຽວຂ້ອງກັບຄະດີ**

ຊອກຫາສາຍພົວພັນລະຫວ່າງ **ຄ** ແລະ **ຂ** ຕື່ມ ວ່າເຄີຍຮູ້ຈັກກັນມາກ່ອນ ຫຼື ບໍ່, ເຄີຍມີຂໍ້ຂັດແຍ່ງກັນບໍ່, ຖ້າຮູ້ຈັກກັນມາກ່ອນ **ຄ** ອາດຈະຄິດວ່າແມ່ນ **ກ** ຍ້ອນຮູ້ວ່າ **ກ** ແລະ **ຂ** ມີບັນຫາເລື່ອງເງິນກັນ. ແຕ່ຖ້າທັງສອງບໍ່ຮູ້ຈັກກັນມາກ່ອນແທ້ ກໍຈະຕັດປະເດັນດັ່ງກ່າວອອກໄດ້. ເພື່ອສືບສວນປະເດັນນີ້ ສາມາດເອົາຄຳໃຫ້ການຈາກ **ງ**, ຈາກໝູ່ຄູ່ ແລະ ຄົນໃນຄອບຄົວຕື່ມ.

**3) ຄຸນລັກສະນະ ແລະ ຈຸດພິເສດສະເພາະຂອງຜູ້ໃຫ້ການ**

ເນື່ອງຈາກຍັງບໍ່ທັນຮູ້ໄດ້ເລິກເຊິ່ງວ່ານິດໄສໃຈຄໍ ຫຼື ບຸກຄະລິກຂອງ **ຄ** ເປັນຄົນແນວໃດ, ຈຶ່ງຈຳເປັນຕ້ອງໄດ້ເອົາຄຳໃຫ້ການຈາກ **ງ** ແລະ ຄົນໃນຄອບຄົວຂອງ **ຄ** ວ່າ **ຄ** ເປັນຄົນແນວໃດ, ມີນິດໄສຂີ້ຕົວະ ຫຼື ມັກສ້າງເລື່ອງໃສ່ຜູ້ອື່ນບໍ່.

**4) ຄຳໃຫ້ການສອດຄ່ອງກັບຫຼັກຖານດ້ານພາວະວິໄສ ຫຼື ເນື້ອໃນຄຳໃຫ້ການຂອງບຸກຄົນອື່ນ ຫຼື ບໍ່:**

- ກວດສອບສະພາບແວດລ້ອມໃກ້ຄຽງສະຖານທີ່ເກີດເຫດຕື່ມ ວ່າບໍລິເວນໜ້າທາງເຂົ້າອາພາດເມັ້ນນັ້ນ ມີກ້ອງວົງຈອນປິດບໍ່ ເພື່ອຕິດຕາມລົດຄັນທີ່ຊາຍແປກໜ້າຂັບອອກໄປ ຕາມການໃຫ້ການຂອງ **ຄ**, ຖ້າມີ ນອກຈາກຈະໃຊ້ຢັ້ງຢືນຄຳໃຫ້ການແລ້ວ ກໍຍັງສາມາດໃຊ້ເປັນຫຼັກຖານເພື່ອນຳຫາວ່າເຈົ້າຂອງລົດຄັນນັ້ນແມ່ນໃຜໄດ້ອີກ.

- ເນື່ອງຈາກ **ຄ** ໄດ້ໃຫ້ການວ່າ ໄດ້ຍິນສຽງຕິດຈັກລົດໃຫຍ່ອອກໄປ ຈຶ່ງຈຳເປັນຈະຕ້ອງໄດ້ພິສູດຖ້າ **ກ** ມີລົດໃຫຍ່ແທ້ ກໍຍັງຕ້ອງໄດ້ພິສູດວ່າແມ່ນຄັນດຽວທີ່ໃຊ້ໃນມື້ເກີດເຫດ ຫຼື ບໍ່, ສຽງຕິດຈັກລົດຄ້າຍຄືກັນບໍ່, ຖ້າກວດສອບວ່າມີກ້ອງວົງຈອນປິດບໍລິເວນອ້ອມຂ້າງ ສາມາດເຫັນລົດຄັນດັ່ງກ່າວຂີ່ອອກຈາກສະຖານທີ່ເກີດເຫດຍິ່ງເຮັດໃຫ້ຫຼັກຖານໜັກແໜ້ນຂຶ້ນຕື່ມ.
- ເອົາຄຳໃຫ້ການເພີ່ມເຕີມຈາກ **ງ** (ເຈົ້າຂອງຫ້ອງທີ **ຄ** ຢູ່ໃນຄືນນັ້ນ) ແລະ ບຸກຄົນອື່ນທີ່ອາໄສຢູ່ໃນອາພາດເມັ້ນດຽວກັນ ກ່ຽວກັບຂໍ້ມູນສະພາບການໃນມື້ເກີດເຫດຕື່ມ ວ່າຄຳໃຫ້ການຂອງ **ງ** ຈະກົງກັບ **ຄ** ຫຼື ບໍ່, ຖ້າກົງກັນກໍຈະເພີ່ມຄວາມໜ້າເຊື່ອຖືຂອງຄຳໃຫ້ການຕື່ມອີກ.

**5) ລັກສະນະທ່າທີ່ໃນເວລາໃຫ້ການ**

ເອົາຂໍ້ມູນເພີ່ມເຕີມຈາກເຈົ້າໜ້າທີ່ ກ່ຽວກັບທ່າທີຂອງ **ຄ** ໃນເວລາໃຫ້ການກັບຜູ້ທີ່ເອົາຄຳໃຫ້ການຂອງ **ຄ** ໃນມື້ນັ້ນ.

❖ **ສິ່ງທີ່ຄວນສືບສວນ-ສອບສວນເພີ່ມເຕີມ ກ່ຽວກັບຫຼັກຖານອື່ນທີ່ຕິດພັນກັບພິສູດວ່າ ກ ແມ່ນຊາຍແປກໜ້າທີ່ຢູ່ໃນເຫດການ ແລະ ເປັນຜູ້ຈູດຄາດຕະກຳ**

- ຈາກການທີ່ **ກ** ປະຕິເສດຂໍ້ກ່າວຫານັ້ນ **ກ** ໄດ້ໃຫ້ເຫດຜົນແນວໃດເພື່ອອ້າງວ່າຕົນເອງບໍ່ແມ່ນຜູ້ກໍ່ເຫດ, ຖ້າຫາກວ່າ **ກ** ມີຫຼັກຖານ ຫຼື ພະຍານ ມາຢັ້ງຢືນວ່າ ຕົນເອງບໍ່ໄດ້ຢູ່ໃນເຫດການມື້ນັ້ນ ກໍຖືວ່າ **ກ** ບໍ່ແມ່ນຜູ້ກະທຳຜິດ; ແຕ່ເຖິງວ່າ  ກ ບໍ່ມີຫຼັກຖານ ຫຼື ພະຍານອື່ນຮູ້ເຫັນ ມາຢັ້ງຢືນຄຳໃຫ້ການ ກໍຍັງບໍ່ທັນສາມາດຢັ້ງຢືນໄດ້ວ່າ **ກ** ຈະເປັນຜູ້ກະທຳຜິດ, ເວັ້ນເສຍແຕ່ວ່າ ມີຫຼັກຖານອື່ນທີ່ຂັດກັບຄຳໃຫ້ການຂອງ **ກ** ກໍສະແດງວ່າ **ກ** ໃຫ້ການເທັດ. ເຖິງຢ່າງໃດກໍ່ຕາມການທີ່ **ກ** ໃຫ້ການເທັດກໍ່ຍັງບໍ່ທັນເປັນອັນຢັ້ງຢືນໄດ້ວ່າ **ກ** ເປັນຜູ້ກະທຳຜິດແທ້ຈິງ ຍັງຕ້ອງໄດ້ພິຈາລະນາອີກວ່າ ເຫດຜົນທີ່ໃຫ້ການເທັດຍ້ອນຫຍັງອີກ. ສະນັ້ນ, ຖ້າຫາກ **ກ** ປະຕິເສດວ່າ ບໍ່ໄດ້ຢູ່ສະຖານທີ່ເກີດເຫດ ແຕ່ຢູ່ບ່ອນອື່ນ ກໍຈຳເປັນຈະຕ້ອງໄດ້ລົງສະຖານທີ່ນັ້ນເພື່ອເກັບກຳຂໍ້ມູນຫຼັກຖານຕ່າງໆເປັນຕົ້ນວ່າມີກ້ອງວົງຈອນປິດບໍ່, ມີຜູ້ພົບເຫັນບໍ່ ແລະ ເອົາຄຳໃຫ້ການກັບພະຍານແວດລ້ອມອື່ນ.
- ຈະຕ້ອງໄດ້ສືບສວນປະຫວັດຂອງ **ກ** ຕື່ມວ່າເປັນແນວໃດ, ເປັນຄົນອາລົມຮ້ອນ, ໃຈດຳ, ມັກໃຊ້ຄວາມຮຸນແຮງບໍ່, ເຄີຍທຳການໃດທີ່ມີລັກສະນະຮ້າຍແຮງມາກ່ອນບໍ່ ໂດຍການສອບຖາມຄົນອ້ອມຂ້າງ ເປັນຕົ້ນແມ່ນຄົນໃນຄອບຄົວ, ໝູ່ເພື່ອນຍາດຕິພີ່ນ້ອງ ທີ່ເຄີຍໃກ້ຊິດກັບຜູ້ກ່ຽວ. ຖ້າຜູ້ກ່ຽວເຄີຍມີປະຫວັດກໍ່ເຫດລັກສະນະດັ່ງກ່າວມາກ່ອນ ກໍມີຄວາມເປັນໄປໄດ້ສູງທີ່ຈະກໍ່ເຫດອີກ ຫຼື ຖ້າບໍ່ເຄີຍມີປະຫວັດບໍ່ດີມາກ່ອນ ກໍຈະຕ້ອງໄດ້ເບິ່ງແຮງຈູງໃຈອື່ນທີ່ພາໃຫ້ກໍ່ເຫດຕື່ມ.

- ລະດັບຄວາມຮຸນແຮງຂອງຂໍ້ຂັດແຍ່ງ ລະຫວ່າງ **ກ** ແລະ **ຂ** ພໍຈະເປັນແຮງຈູງໃຈໃຫ້ລົງມື ຄາດຕະກຳໄດ້ ຫຼື ບໍ່ (ມູນຄ່າຂໍ້ຂັດແຍ່ງທາງດ້ານການເງິນເທົ່າໃດ, ໃຜເປັນໜີ້ໃຜ, ຜິດກັນມາ ແລ້ວຈັກຄັ້ງ, **ກ** ເຄີຍຂົ່ມຂູ່ທີ່ຈະຂ້າ **ຂ** ມາກ່ອນບໍ່, ນອກຈາກເລື່ອງເງິນ ມີບັນຫາອື່ນອີກບໍ່) ຊຶ່ງສາມາດສອບສວນໄດ້ຈາກພະຍານແວດລ້ອມອື່ນທີ່ໃກ້ຊິດກັບທັງສອງ.
- ການພົບເຫັນນ້ຳມັນ ແລະ ກັບໄຟ ສາມາດເຊື່ອງໂຍງກັບການຈູດໄດ້ບໍ່?
- **ກ** ມີນ້ຳມັນຢູ່ບ້ານແຕ່ດົນປານໃດ? ຊື້ມາແຕ່ໃສ? ຊື້ມາປະລິມານເທົ່າໃດ? ຈຸດປະສົງມີໄວ້ເຮັດ ຫຍັງ? ມື້ພົບເຫັນມີປະລິມານເທົ່າໃດ? ຊຶ່ງສາມາດເອົາຄຳໃຫ້ການເພີ່ມເຕີມຈາກ **ກ** ແລະ ຄອບຄົວທີ່ອາໄສຢູ່ເຮືອນຫຼັງດຽວກັນກັບ **ກ** ວ່າສອດຄ່ອງກັນ ຫຼື ບໍ່.
- ນ້ຳມັນທີ່ພົບຢູ່ເຮືອນ **ກ** ແມ່ນຊະນິດດຽວກັນກັບທີ່ໃຊ້ຈູດບໍ່ ໂດຍຕ້ອງໄດ້ມີການຊັນນະສູດ ນ້ຳມັນທີ່ຢູ່ເຮືອນຂອງ **ກ** ວ່າແມ່ນຊະນິດດຽວກັນກັບທີ່ພົບເຫັນໃນສະຖານທີ່ເກີດເຫດ ຫຼື ບໍ່.
- ຖ້າ **ກ** ບໍ່ສາມາດຊີ້ແຈງໄດ້ຢ່າງສົມເຫດສົມຜົນ ຕໍ່ການມີນ້ຳມັນໄວ້ໃນຄອບຄອງ ແລະ ສາມາດພິສູດໄດ້ວ່າ ນ້ຳມັນຢູ່ເຮືອນ **ກ** ແມ່ນຊະນິດດຽວກັນກັບທີ່ໃຊ້ໃນການຈູດ ກໍມີຄວາມ ເປັນໄປໄດ້ສູງທີ່ **ກ** ຈະເປັນຜູ້ກະທຳຜິດ.

***ໝາຍເຫດ:*** *ຜົນການຄົ້ນຄວ້າໃນກໍລະນີສຶກສານີ້ ບໍ່ໄດ້ຈຳກັດເນື້ອໃນພຽງແຕ່ເທົ່ານີ້ ຜູ້ທີ່ຈະນຳໃຊ້ເຂົ້າ ໃນການຮຽນ-ການສອນ, ການຝຶກອົບຮົມ ແລະ ການຄົ້ນຄວ້າວິໄຈ ສາມາດໝູນໃຊ້ໄດ້ ຕາມຄວາມເໝາະສົມ ຂອງແຕ່ລະຂົງເຂດ.*

ຄຳຖາມ ແລະ ກໍລະນີສຶກສາ II

# ການຂົ່ມຂືນທຳຊຳເລົາ
# ທີ່ພິສູດຈາກຄຳໃຫ້ການຂອງຜູ້ຖືກເສຍຫາຍ

## ກໍລະນີສຶກສາ ການຂົ່ມຂືນທຳຊຳເລົາ ທີ່ພິສູດຈາກຄຳໃຫ້ການຂອງຜູ້ຖືກເສຍຫາຍ

**ກ** ຖືກຈັບຕົວໃນວັນທີ 20 ກຸມພາ 2019, ເນື່ອງຈາກວ່າ ໃນເວລາປະມານ 21:00 ໂມງ ຂອງວັນທີ 5 ກຸມພາ 2019, **ກ** ໄດ້ໃຊ້ຄວາມຮຸນແຮງ ແລະ ຂົ່ມຂູ່ **ຂ** ທີ່ກຳລັງຍ່າງຢູ່ທາງຍ່າງຕໍ່ໜ້າສວນນ້ຳພຸ ຫຼັງຈາກນັ້ນ **ກ** ໄດ້ພາຕົວ **ຂ** ໄປສວນສາທາລະນະແຄມຂອງ ທີ່ຢູ່ຫ່າງຈາກສວນນ້ຳພຸປະມານ 200 ແມັດ ຊຶ່ງເປັນສະຖານທີ່ ທີ່ບໍ່ມີຄົນ ແລະ ແສງສະຫວ່າງ, ຈາກນັ້ນ ກໍໄດ້ມີເພດສຳພັນກັບ **ຂ** ໂດຍບໍ່ໄດ້ຮັບການຍິນຍອມຈາກ **ຂ**.

ຕໍ່ມາ, **ກ** ຍອມຮັບວ່າມີເພດສຳພັນຕາມຂໍ້ມູນທີ່ກ່າວມາຂ້າງເທິງແທ້ ແຕ່ລາວໄດ້ກ່າວອ້າງມາຕະຫຼອດວ່າ ຕົນໄດ້ຈ່າຍເງິນ ແລະ ໄດ້ຮັບການຍິນຍອມຈາກ **ຂ** ແລ້ວ ຈຶ່ງໄດ້ມີເພດສຳພັນກັບ **ຂ**. ແຕ່ຈາກຜົນຂອງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ຕຳຫຼວດ ແລະ ຜ່ານການຄົ້ນຄວ້າ ຂອງພະນັກງານໄອຍະການ ຊຶ່ງມີຫຼັກຖານຢັ້ງຢືນວ່າ **ກ** ໄດ້ມີການກະທຳຜິດ, ດັ່ງນັ້ນ ຫົວໜ້າອົງການໄອຍະການ ຈຶ່ງໄດ້ສັ່ງຟ້ອງ **ກ** ໃນຂໍ້ກ່າວຫາການຂົ່ມຂືນທຳຊຳເລົາ ຕາມມາດຕາ 248 ຂອງປະມວນກົດໝາຍອາຍາ, ພ້ອມທັງສົ່ງສຳນວນຄະດີໃຫ້ສານພິຈາລະນາ.

**<u>ຫຼັກຖານທີ່ເຈົ້າໜ້າທີ່ຕຳຫຼວດ ແລະ ພະນັກງານໄອຍະການຮອບຮອມມາໄດ້ ປະກອບມີ:</u>**

① ກ່ອນເກີດຄະດີນີ້ **ກ** ແລະ **ຂ** ບໍ່ໄດ້ຮູ້ຈັກກັນມາກ່ອນ;

② ໃນຕອນທີ່ເກີດຄະດີ **ຂ** ມີຄູ່ໝັ້ນທີ່ພໍ່ແມ່ທັງສອງຝ່າຍຕົກລົງເຫັນດີນຳກັນແລ້ວ;

③ ຫຼັງຈາກເກີດຄະດີຂຶ້ນ ໃນວັນທີ 12 ກຸມພາ 2019, **ຂ** ແລະ ພໍ່ແມ່ຂອງລາວໄດ້ພາກັນໄປຫ້ອງການຕຳຫຼວດ ເພື່ອຮ້ອງຟ້ອງເຖິງຄວາມເສຍຫາຍ ແລະ ໄດ້ໃຫ້ການດັ່ງລຸ່ມນີ້:

**<u>ເນື້ອໃນຄຳໃຫ້ການຂອງ ຂ:</u>**

- ໃນເວລາ 14:00 ໂມງ ຫາ 21:30 ນາທີ ຂອງວັນທີ 5 ກຸມພາ 2019, ຂ້ອຍກຳລັງເຮັດວຽກຢູ່ຮ້ານອາຫານແຫ່ງໜຶ່ງໃກ້ກັບສວນນ້ຳພຸ. ຫຼັງຈາກເລີກວຽກແລ້ວ, ຂ້ອຍໄດ້ປ່ຽນເຄື່ອງ ແລະ ອອກຈາກຮ້ານໄປເພື່ອຈະກັບບ້ານ, ຂ້ອຍໄດ້ຍ່າງຄົນດຽວຕາມທາງຍ່າງ ໄປຫາບ່ອນຈອດລົດໃຫຍ່ຢູ່ຕໍ່ໜ້າສວນນ້ຳພຸ.
- ໃນຕອນທີ່ຂ້ອຍຍ່າງໄປຄົນດຽວ ໄດ້ມີຊາຍແປກໜ້າຄົນໜຶ່ງ **(ກ)** ມາຈາກດ້ານຫຼັງເອົາວັດຖຸທີ່ຄ້າຍຄືກັນກັບມີດຈີ້ໃສ່ຫຼັງຂອງຂ້ອຍ ແລ້ວເວົ້າສຽງຄ່ອຍໆວ່າ (ຖ້າສົ່ງສຽງແຮງ ຈະຂ້າຖິ້ມ, ໃຫ້ຍ່າງຕາມກູມາ).

- ຂ້ອຍຮູ້ສຶກຢ້ານຫຼາຍ ເລີຍຍ່າງຕາມຊາຍຄົນນັ້ນໄປສວນສາທາລະນະແຄມຂອງ. ໃນຂະນະທີ່ຍ່າງໄປຫາສວນສາທາລະນະແຄມຂອງ ຊາຍຄົນນັ້ນໄດ້ເອົາມີດໄວ້ໃນກະເປົາ ຍ່າງຂ້າງກັບຂ້ອຍເຮັດຄືເປັນຄູ່ຮັກກັນ.
- ຫຼັງຈາກໄປຮອດສວນສາທາລະນະແຄມຂອງແລ້ວ, ຊາຍຄົນດັ່ງກ່າວກໍໄດ້ພາໄປກ້ອງຕົ້ນໄມ້ບ່ອນບໍ່ມີໄຟສ່ອງມາ ແລະ ບໍ່ມີຄົນ, ລາວໄດ້ປິດປາກຂ້ອຍໄວ້ ແລະ ເວົ້າອີກເທື່ອໜຶ່ງວ່າ (ຖ້າສົ່ງສຽງຈະຂ້າຖິ້ມ) ຫຼັງຈາກນັ້ນກໍໃຫ້ຂ້ອຍນອນລົງເທິງຫຍ້າ. ຊາຍຄົນນັ້ນ ໄດ້ບັງຄັບໃຫ້ຂາຂ້ອຍຕິດເຂົ້າກັນ ແລະ ເວົ້າວ່າ (ຖ້າບໍ່ຟັງຄວາມລາວເວົ້າ ຈະຂ້າຖິ້ມ) ພ້ອມທັງໃຊ້ກຳລັງແຮງຈັບບີແຄ່ງທັງສອງຂ້າງຍະອອກ ແລ້ວກໍບັງຄັບແກ້ໂສ້ງຊ້ອນໃນຂ້ອຍອອກ. ໃນຕອນນັ້ນ, ຊາຍດັ່ງກ່າວໄດ້ໃຊ້ກຳລັງແຮງດຶງໂສ້ງຊ້ອນໃນຂ້ອຍຈົນຂາດ.
- ຈາກນັ້ນ ລາວກໍຖອດໂສ້ງອອກເອົາອະໄວຍະວະເພດຂອງລາວທັ່ງເຂົ້າໄປໃນອະໄວຍະວະເພດຂ້ອຍ ແລະ ກໍບັງຄັບມີເພດສຳພັນນຳ.
- ຂ້ອຍບໍ່ໄດ້ມີຄວາມຄິດທີ່ຈະມີເພດສຳພັນນຳຊາຍຄົນນັ້ນເລີຍ ແຕ່ເນື່ອງຈາກວ່າຂ້ອຍຢ້ານລາວທຳຮ້າຍຂ້ອຍກໍເລີຍບໍ່ກ້າຮ້ອງ ແລະ ກໍມິດຢູ່ຈົນກວ່າລາວສຳເລັດລັ່ງອາສຸຈິອອກມາ.
- ຫຼັງຈາກທີ່ລາວສຳເລັດແລ້ວ, ລາວກໍນຸ່ງໂສ້ງພ້ອມທັງເວົ້າວ່າ (ຖ້າເອົາເລື່ອງມື້ນີ້ໄປບອກຄົນອື່ນ ຫຼື ຕຳຫຼວດ ຈະຂ້າຖິ້ມ) ຫຼັງຈາກນັ້ນລາວກໍແລ່ນອອກໄປຈາກສະຖານທີ່ດັ່ງກ່າວ.
- ຂ້ອຍຮູ້ສຶກຊ໋ອກຕົກໃຈຫຼາຍຈົນເຮັດຫຍັງບໍ່ໄດ້ເປັນໄລຍະເວລາໜຶ່ງ ຫຼັງຈາກນັ້ນໜ້ອຍໜຶ່ງຂ້ອຍກໍໃສ່ເຄື່ອງແລ້ວກໍໄປບ່ອນຈອດລົດເພື່ອຈະກັບບ້ານ. ເນື່ອງຈາກໂສ້ງຊ້ອນໃນຂອງຂ້ອຍຖືກຊາຍຄົນນັ້ນເຮັດຂາດຈົນບໍ່ສາມາດໃສ່ຄືນໄດ້ ກໍເລີຍຖິ້ມລົງຖັງຂີ້ເຫຍື້ອໃນລະຫວ່າງທາງມາບ່ອນຈອດລົດ. ໃນເວລາຍ່າງມາ ຂ້ອຍຮູ້ສຶກເຈັບບີແຄ່ງຫຼຽວໄປເບິ່ງບ່ອນທີ່ຊາຍຄົນນັ້ນໃຊ້ກຳລັງແຮງຈັບ ກໍເຫັນວ່າມີເລືອດຊ້ຳໃນຢູ່. ຫຼັງຈາກນັ້ນ ເວລາ 23:00 ໂມງ ຂ້ອຍກໍໄດ້ຂີ່ລົດກັບບ້ານ.
- ໃນເວລາຮອດບ້ານ ແມ່ຂອງຂ້ອຍເປັນຫ່ວງວ່າຂ້ອຍກັບບ້ານຊ້າແທ້ ລາວກໍຍັງບໍ່ນອນ, ແຕ່ເນື່ອງຈາກວ່າຂ້ອຍບໍ່ຢາກໃຫ້ພໍ່ແມ່ຮູ້ ຂ້ອຍກໍເລີຍອະທິບາຍວ່າ (ໄປກິນເຂົ້າກັບໝູ່ມາ ເລີຍກັບມາຊ້າ) ແລະ ກໍເຂົ້າຫ້ອງໄປນອນທັນທີ.
- ຫຼັງຈາກນັ້ນ ເນື່ອງຈາກກິລິຍາທ່າທາງຂອງຂ້ອຍບໍ່ຄືປົກກະຕິ, ພໍ່ແມ່ກະຖາມຫຼາຍຄັ້ງວ່າເກີດຫຍັງຂຶ້ນກັບຂ້ອຍບໍ່ ແລະ ໃນວັນທີ 12 ກຸມພາ 2019 ຂ້ອຍກໍເຜີຍຄວາມລັບອອກມາວ່າຖືກຂົ່ມຂືນທຳຊຳເລົາ, ຫຼັງຈາກນັ້ນ ກໍໄປຫ້ອງການຕຳຫຼວດກັບພໍ່ແມ່ ອະທິບາຍສະພາບການຖືກຂົ່ມຂືນທຳຊຳເລົາໃຫ້ເຈົ້າໜ້າທີ່ຕຳຫຼວດ ແລະ ໄດ້ຮ້ອງຟ້ອງ **ກ.**

## ຄຳຖາມ

1. ຖ້າຫາກຄົ້ນຄວ້າຕາມເນື້ອໃນຂໍ້ເທັດຈິງ ແລະ ຫຼັກຖານ ສະເພາະທີ່ມີຢູ່ໃນເນື້ອຄະດີຕົວຢ່າງນີ້ແລ້ວ, ໃນການພິຈາລະນາ ວ່າ **ກ** ໄດ້ຂົ່ມຂືນທຳຊຳເລົາ **ຂ** ຫຼື ບໍ່ນັ້ນ, ຫຼັກຖານອັນໃດທີ່ເຫັນວ່າມີຄວາມສຳຄັນທີ່ສຸດ ? ຈົ່ງອະທິບາຍ ພ້ອມທັງວິເຄາະເບິ່ງວ່າ ຫຼັກຖານທີ່ມີໃນຄະດີຕົວຢ່າງນີ້ ເປັນການພິສູດຂໍ້ເທັດຈິງດ້ວຍຫຼັກຖານທາງກົງ ຫຼື ດ້ວຍຫຼັກຖານທາງອ້ອມ.
2. ໃນການພິຈາລະນາຄວາມໜ້າເຊື່ອຖືຄຳໃຫ້ການຂອງຜູ້ຖືກເຄາະຮ້າຍນັ້ນ, ປະເດັນທີ່ຄວນເອົາໃຈໃສ່ແມ່ນຫຍັງ ? ຈົ່ງອະທິບາຍ ພ້ອມທັງໃຫ້ເຫດຜົນວ່າ ເປັນຫຍັງຈຶ່ງຕ້ອງເອົາໃຈໃສ່ໃນປະເດັນ ດັ່ງກ່າວ.
3. ຜ່ານການຄົ້ນຄວ້າກ່ຽວກັບ ປະເດັນທີ່ຄວນເອົາໃຈໃສ່ ຕາມຂໍ້ 2 ຂ້າງເທິງນີ້ແລ້ວ, ເຫັນວ່າຄຳໃຫ້ການຂອງ **ຂ** ໃນຄະດີຕົວຢ່າງນີ້ໜ້າເຊື່ອຖື ຫຼື ບໍ່ ? ຈົ່ງອະທິບາຍ ທັງກໍລະນີທີ່ເຫັນວ່າໜ້າເຊື່ອຖື ແລະ ເຫັນວ່າບໍ່ໜ້າເຊື່ອຖື.
4. ສຳລັບຄະດີນີ້ມີປະເດັນໃດທີ່ເຫັນວ່າ ຄວນມີການສືບສວນ-ສອບສວນເພີ່ມເຕີມ ຫຼື ບໍ່ ? ຖ້າມີ, ຈົ່ງອະທິບາຍປະເດັນດັ່ງກ່າວພ້ອມທັງໃຫ້ເຫດຜົນ.

**I. ຖ້າຫາກຄົ້ນຄວ້າຕາມເນື້ອໃນຂໍ້ເທັດຈິງ ແລະ ຫຼັກຖານ ສະເພາະທີ່ມີຢູ່ໃນເນື້ອຄະດີຕົວຢ່າງນີ້ແລ້ວ, ໃນການພິຈາລະນາວ່າ ກ ໄດ້ຂົ່ມຂືນທຳຊຳເລົາ ຂ ຫຼື ບໍ່ ນັ້ນ, ຫຼັກຖານອັນໃດທີ່ເຫັນວ່າມີຄວາມສຳຄັນທີ່ສຸດ? ຈົ່ງອະທິບາຍ ພ້ອມທັງວິເຄາະເບິ່ງວ່າ ຫຼັກຖານທີ່ມີໃນຄະດີຕົວຢ່າງນີ້ ເປັນການພິສູດຂໍ້ເທັດຈິງດ້ວຍຫຼັກຖານທາງກົງ ຫຼື ດ້ວຍຫຼັກຖານທາງອ້ອມ.**

ໃນກໍລະນີສຶກສານີ້ **ຂ** (ຜູ້ຖືກເສຍຫາຍ) ໄດ້ໃຫ້ການວ່າຕົນເອງຖືກ **ກ** ຂົ່ມຂືນທຳຊຳເລົາ, ແຕ່ກົງກັນຂ້າມ **ກ** ພັດໃຫ້ການວ່າ ບໍ່ໄດ້ຂົ່ມຂືນທຳຊຳເລົາ ແຕ່ເປັນການສົມຍອມ, ເມື່ອເປັນເຊັ່ນນັ້ນ ຂໍ້ເທັດຈິງທີ່ຕ້ອງໄດ້ພິສູດກໍຄື **ກ** ໄດ້ຂົ່ມຂືນທຳຊຳເລົາ **ຂ** ຫຼື ບໍ່.

ດັ່ງນັ້ນ, ຄຳໃຫ້ການຂອງ **ຂ** ຈຶ່ງເປັນຫຼັກຖານທາງກົງ ທີ່ມີຄວາມສຳຄັນ ແລະ ຈຳເປັນຕ້ອງໄດ້ພິສູດ ຊຶ່ງຈຸດທີ່ຈະພິສູດກໍຄື ຖືກຂົ່ມຂືນທຳຊຳເລົາ ຫຼື ບໍ່, ເນື່ອງຈາກວ່າ ຖ້າສາມາດພິສູດຄຳໃຫ້ການດັ່ງກ່າວສາມາດເຊື່ອຖືໄດ້ ກໍຈະຮູ້ໄດ້ວ່າ **ຂ** ຖືກຂົ່ມຂືນທຳຊຳເລົາ ຫຼື ບໍ່, ໃນກໍລະນີສຶກສານີ້ ມີຫຼັກຖານທາງກົງທີ່ຕ້ອງໄດ້ພິສູດຄືຄຳໃຫ້ການຂອງ **ຂ** ວ່າມີຄວາມໜ້າເຊື່ອຖືໄດ້ ຫຼື ບໍ່, ຊຶ່ງບໍ່ຈຳເປັນຕ້ອງຊອກຫາຫຼັກຖານທາງອ້ອມເພື່ອມາພິສູດກໍໄດ້.

**II. ໃນການພິຈາລະນາຄວາມໜ້າເຊື່ອຖືຄຳໃຫ້ການຂອງຜູ້ຖືກເຄາະຮ້າຍນັ້ນ, ປະເດັນທີ່ຄວນເອົາໃຈໃສ່ແມ່ນຫຍັງ? ຈົ່ງອະທິບາຍ ພ້ອມທັງໃຫ້ເຫດຜົນວ່າ ເປັນຫຍັງຈຶ່ງຕ້ອງເອົາໃຈ ໃສ່ໃນປະເດັນ ດັ່ງກ່າວ**

ຖ້າພິສູດໄດ້ວ່າຄຳໃຫ້ການຂອງ **ຂ** ແມ່ນຄວາມຈິງ ມີຄວາມໜ້າເຊື່ອຖືໄດ້ ກໍຖືວ່າເປັນການຂົ່ມຂືນທຳຊຳເລົາ ບໍ່ແມ່ນການສົມຍອມຕາມການກ່າວອ້າງຂອງ **ກ**, ຖ້າບໍ່ສາມາດພິສູດຄວາມໜ້າເຊື່ອຖືໄດ້ຂອງຄຳໃຫ້ການ ກໍຈະບໍ່ສາມາດນຳມາໃຊ້ເປັນຫຼັກຖານໃນການກຳນົດຄວາມຜິດຂອງ ກ ໄດ້.

ເຫດຜົນທີ່ຕ້ອງພິສູດຄວາມໜ້າເຊື່ອຖືຂອງຄຳໃຫ້ການນັ້ນ ກໍເນື່ອງຈາກວ່າ: ຖ້າຫາກສາມາດພິສູດຄຳໃຫ້ການ ຂອງ **ຂ** ວ່າໜ້າເຊື່ອຖືໄດ້ ກໍສາມາດພິສູດໄດ້ວ່າແມ່ນການຂົ່ມຂືນທຳຊຳເລົາໄດ້ໂດຍກົງ. ສະນັ້ນ, ຄຳໃຫ້ການຂອງ **ຂ** ຈຶ່ງເປັນຫຼັກຖານທາງກົງທີ່ຈະພິສູດຂໍ້ເທັດຈິງທີ່ວ່າ **ຂ** ຖືກຂົ່ມຂືນທຳຊຳເລົາ ຫຼື ບໍ່.

ຄຳໃຫ້ການເປັນຄຳເວົ້າຂອງບຸກຄົນ ຊຶ່ງອາດມີການປ່ຽນແປງຕະຫຼອດ, ການປ່ຽນແປງຄຳເວົ້າຂອງຄົນອາດມາຈາກການຕົວະ, ການຫຼົງລືມຍ້ອນປະເວລາໄປໄລຍະໜຶ່ງ ຫຼື ການສື່ສານບໍ່ຊັດເຈນເຮັດໃຫ້ຜູ້ຟັງເຂົ້າໃຈເປັນຢ່າງອື່ນ. ດັ່ງນັ້ນ, ຈະຕ້ອງພິສູດຄຳໃຫ້ການຂອງຜູ້ຖືກເຄາະຮ້າຍ ວ່າມີຄວາມໜ້າເຊື່ອຖືລະດັບໃດໃນການພິຈາລະນາຄວາມໜ້າເຊື່ອຖືຄຳໃຫ້ການຂອງຜູ້ຖືກເຄາະຮ້າຍ ຕ້ອງຊອກຫຼັກຖານມາຢັ້ງຢືນ, ຊອກຮູ້ປະຫວັດຂອງຜູ້ໃຫ້ການ (ຜູ້ຖືກເຄາະຮ້າຍ), ສາຍພົວພັນທາງດ້ານຜົນປະໂຫຍດ ລະຫວ່າງ ຜູ້ຖືກເຄາະຮ້າຍ ແລະ ຜູ້ຖືກຫາ ຫຼື ລະຫວ່າງ ຜູ້ຖືກເຄາະຮ້າຍ ກັບ ບຸກຄົນທີສາມ, ພິຈາລະນາເນື້ອໃນຄຳໃຫ້ການ, ລັກສະນະຂອງ

ການໃຫ້ການເປັນທຳມະຊາດບໍ່ ສົມເຫດສົມຜົນ ເປັນຮູບປະທຳ ແລະ ສົມຈິງ ຫຼື ບໍ່, ວິທີການໃຫ້ການ ແລະ ຄວາມເປັນມາຂອງການແຈ້ງຄວາມ ຊຶ່ງມີເນື້ອໃນລະອຽດດັ່ງນີ້:

**1. ການຊອກຫາຫຼັກຖານມາຢັ້ງຢືນ**

ການຊອກຫາຫຼັກຖານມາຢັ້ງຢືນ ແມ່ນເພື່ອສະໜັບສະໜູນຄວາມໜ້າເຊື່ອຖືຄຳໃຫ້ການຂອງຜູ້ຖືກເຄາະຮ້າຍ ແຕ່ຫຼັກຖານທີ່ຈະນຳມາສະໜັບສະໜູນນັ້ນ ບໍ່ພຽງແຕ່ແມ່ນຫຼັກຖານທາງດ້ານວັດຖຸ ຫຼື ຫຼັກຖານທາງດ້ານພາວະວິໄສເທົ່ານັ້ນ. ນອກຈາກນັ້ນ, ກໍຍັງມີຫຼັກຖານທາງດ້ານບຸກຄົນກໍຄືຄຳໃຫ້ການຂອງບຸກຄົນທີສາມ ກໍສາມາດນຳມາສະໜັບສະໜູນໄດ້ເຊັ່ນດຽວກັນ.

ຖ້າຄຳໃຫ້ການຂອງຜູ້ຖືກເຄາະຮ້າຍສອດຄ່ອງກັບຫຼັກຖານທາງດ້ານພາວະວິໄສ ກໍຈະເຮັດໃຫ້ມີຄວາມໜັກ ແໜ້ນ ແລະ ເຊື່ອຖືໄດ້. ແຕ່ກົງກັນຂ້າມ ຖ້າຄຳໃຫ້ການຂອງຜູ້ຖືກເຄາະຮ້າຍບໍ່ສອດຄ່ອງກັບຫຼັກຖານທາງດ້ານພາວະວິໄສ ກໍຈະເຮັດໃຫ້ຄວາມໜ້າເຊື່ອຖືຫຼຸດລົງ. ສະນັ້ນ, ຈຶ່ງຕ້ອງໄດ້ພິຈາລະນາຄຳໃຫ້ການຂອງຜູ້ຖືກເຄາະຮ້າຍ ກັບຫຼັກຖານທາງດ້ານພາວະວິໄສ ວ່າກົງກັນ ຫຼື ບໍ່.

ໃນກໍລະນີທີ່ບໍ່ພົບເຫັນຫຼັກຖານທາງດ້ານພາວະວິໄສທີ່ມີເຫດຜົນສົມເຫດສົມຜົນ ກໍບໍ່ເປັນເງື່ອນໄຂທີ່ຈະບໍ່ເຊື່ອຖື ຄຳໃຫ້ການຂອງຜູ້ຖືກເຄາະຮ້າຍ ພຽງແຕ່ວ່າຈະເຮັດໃຫ້ຄວາມໜ້າເຊື່ອຖືໃນຄຳໃຫ້ການດັ່ງກ່າວມີແນວໂນ້ມຫຼຸດລົງ ຕົວຢ່າງ: ໃນກໍລະນີທີ່ໄລຍະເວລາຈາກຕອນທີ່ເຫດເກີດຂຶ້ນ ຫາຕອນເຈົ້າໜ້າທີ່ໄປຮອດສະຖານທີ່ເກີດເຫດຜ່ານໄປດົນ ແລະ ສະຖານທີ່ເກີດເຫດດັ່ງກ່າວກໍເປັນສວນສາທາລະນະ ຊຶ່ງມີຄົນຜ່ານໄປມາຫຼາຍ ຈຶ່ງເຮັດໃຫ້ບໍ່ພົບເຫັນຫຼັກຖານ ເນື່ອງຈາກວ່າອາດມີບຸກຄົນໃດໜຶ່ງເກັບເອົາໄປ ຫຼື ມີເຫດສະພາບເອົາຂີ້ເຫຍື້ອໄປຖິ້ມແລ້ວ. ໃນກໍລະນີນີ້ ເຖິງວ່າ ຫຼັກຖານຈະບໍ່ຖືກພົບເຫັນກໍຕາມ ແຕ່ບໍ່ເປັນເງື່ອນໄຂທີ່ຈະບໍ່ເຊື່ອຖືໄດ້ໃນຄຳໃຫ້ການ. ສະນັ້ນ, ການພົບ ຫຼື ບໍ່ພົບຫຼັກຖານທາງດ້ານພາວະວິໄສ ເປັນພຽງແຕ່ເງື່ອນໄຂໜຶ່ງທີ່ສາມາດພິຈາລະນາລະດັບຄວາມໜ້າເຊື່ອຖື ຂອງຄຳໃຫ້ການໄດ້ເທົ່ານັ້ນ.

ນອກຈາກການຊອກຫາຫຼັກຖານທາງດ້ານພາວະວິໄສແລ້ວ ກໍຈຳເປັນຕ້ອງຊອກຫາຫຼັກຖານອື່ນອີກເພື່ອມາສະໜັບສະໜູນ ແລະ ຫຼັກຖານທີ່ມາສະໜັບສະໜູນຄວາມໜ້າເຊື່ອຖື ຂອງຄຳໃຫ້ການກໍຄື "ພຶດຕິກຳ" ຂອງຜູ້ຖືກເສຍຫາຍຫຼັງຈາກເກີດເຫດເປັນແນວໃດ ຊຶ່ງສາມາດຮູ້ໄດ້ຈາກຄຳໃຫ້ການຂອງຄົນໃກ້ໂຕ ຫຼື ຜູ້ເຫັນເຫດການ ຫຼື ບຸກຄົນທີສາມ ວ່າໄດ້ໃຫ້ການສອດຄ່ອງກັບຜູ້ຖືກເຄາະຮ້າຍ ຫຼື ບໍ່, ຖ້າສອດຄ່ອງກໍຈະເຮັດໃຫ້ຄຳໃຫ້ການ ຂອງຜູ້ຖືກເຄາະຮ້າຍເຊື່ອຖືໄດ້ໃນລະດັບສູງ. ແຕ່ເນື່ອງຈາກວ່າ ຄຳໃຫ້ການຂອງຜູ້ເຫັນເຫດການ ຫຼື ບຸກຄົນ ອື່ນກໍແມ່ນຄຳເວົ້າຂອງບຸກຄົນ ເຮົາກໍຕ້ອງໄດ້ພິສູດຫາຄວາມໜ້າເຊື່ອຖືເຊັ່ນດຽວກັນ.

**2. ປະຫວັດຂອງຜູ້ໃຫ້ການ (ຜູ້ຖືກເຄາະຮ້າຍ)**

ການຊອກຮູ້ປະຫວັດຂອງຜູ້ຖືກເຄາະຮ້າຍ ເປັນອົງປະກອບໜຶ່ງ ເພື່ອພິຈາລະນາວ່າ ຜູ້ກ່ຽວໃຫ້ການຜ່ານມາຈິງ ຫຼື ບໍ່ຈິງ ເພາະປະຫວັດກໍຖືເປັນຫຼັກຖານໜຶ່ງທີ່ສຳຄັນ ທີ່ຈະຊ່ວຍສະໜັບສະໜູນ ຄຳໃຫ້ການຂອງຜູ້

ຖືກເຄາະຮ້າຍ ວ່າເຊື່ອຖືໄດ້ ຫຼື ເຊື່ອຖືບໍ່ໄດ້. ສະນັ້ນໃນການຊອກຫາຂໍ້ເທັດຈິງຈຸດນີ້ ແມ່ນຈະຕ້ອງໄດ້ມາໂດຍການສືບຫາຈາກຄົນໃກ້ຊິດ ບໍ່ວ່າຈະເປັນ ພໍ່, ແມ່, ເອື້ອຍ, ອ້າຍ, ນ້ອງ, ໝູ່ທີ່ສະໜິດ, ໝູ່ເຮັດວຽກນຳກັນ, ຫົວໜ້າ, ເພື່ອນບ້ານ ແລະ ບຸກຄົນອື່ນໆ ທີ່ຮູ້ຈັກດີກັບຜູ້ຖືກເຄາະຮ້າຍ ໂດຍການຊອກຮູ້ທາງດ້ານນິໄສ, ດ້ານບຸກຄະລິກກະພາບ, ພຶດຕິກຳຂອງຜູ້ຖືກເຄາະຮ້າຍ ວ່າເປັນຄົນແນວໃດເປັນຄົນມັກຫຼິ້ນມັກທ່ຽວບໍ່, ໃຊ້ຈ່າຍເງິນຟູມເຟືອຍບໍ່, ມີພຶດຕິກຳກ່ຽວກັບການທ່ຽວກັບຜູ້ຊາຍບໍ່, ຜູ້ກ່ຽວເຄີຍມີປະຫວັດໄປນອນນຳຜູ້ຊາຍເພື່ອຫາເງິນບໍ່, ມັກດື່ມເຫຼົ້າບໍ່,  ຊຸມແຊວນຳໝູ່ບໍ່ ຫຼື ວ່າເປັນຄົນສຸພາບຮຽບຮ້ອຍ, ມີຈິດໃຈດີ, ເລີກວຽກແລ້ວກັບບ້ານກົງເວລາ.

**3. ສາຍພົວພັນທາງດ້ານຜົນປະໂຫຍດ**

ຕາມຫຼັກການພື້ນຖານແລ້ວ ເຮົາຈະພິຈາລະນາຄວາມໜ້າເຊື່ອຖືຂອງຄຳໃຫ້ການ ເຮົາກໍຕ້ອງໄດ້ເບິ່ງສາຍພົວພັນທາງດ້ານຜົນປະໂຫຍດ ເຊັ່ນ: ຜູ້ຖືກເຄາະຮ້າຍ ກັບ ຜູ້ຖືກຫາ ຮູ້ຈັກກັນມາກ່ອນບໍ່, ມີການຜິດຖຽງກັນ ຫຼື ມີຂໍ້ຂັດແຍ່ງກັນມາກ່ອນບໍ່. ເນື່ອງຈາກວ່າ ຖ້າຫາກຜູ້ຖືກຫາ ແລະ ຜູ້ຖືກເຄາະຮ້າຍມີສາຍພົວພັນຜົນປະໂຫຍດຮ່ວມກັນມາກ່ອນແລ້ວ ມີຄວາມເປັນໄປໄດ້ທີ່ຝ່າຍໃດຝ່າຍໜຶ່ງຈິງໃຈໃຫ້ການເທັດ ເພື່ອເອົາຜິດກັບອີກຝ່າຍໜຶ່ງ.

**4. ເນື້ອໃນຄຳໃຫ້ການ ມີຄວາມເປັນທຳມະຊາດ, ສົມເຫດສົມຜົນ, ລົງເລິກລາຍລະອຽດ, ສອດຄ່ອງກັນ ຫຼື ບໍ່ ?**

ເນື້ອໃນຂອງຄຳໃຫ້ການ ຈຳເປັນຈະຕ້ອງໄດ້ພິຈາລະນາກ່ຽວກັບຄວາມເປັນທຳມະຊາດ, ສົມເຫດສົມຜົນ, ການລົງເລິກລາຍລະອຽດ ແລະ ສອດຄ່ອງກັນ ຫຼື ບໍ່.

ຖ້າຫາກເນື້ອໃນຂອງຄຳໃຫ້ການນັ້ນແມ່ນຄວາມຈິງ, ສອດຄ່ອງກັນກັບການຈື່ຈຳແລ້ວ ເນື້ອໃນດັ່ງກ່າວນັ້ນຈະມີຄວາມເປັນທຳມະຊາດ ບໍ່ຂັດກັບຫຼັກການທາງດ້ານວິທະຍາສາດ, ບໍ່ຂັດກັບສະພາວະທີ່ເປັນປົກກະຕິ ແລະ ສົມເຫດສົມຜົນ.

<u>**ຕົວຢ່າງ:**</u> ຜູ້ຖືກເສຍຫາຍໃນຄະດີຂົ່ມຂືນທຳຊຳເລົາໄດ້ໃຫ້ການວ່າ: **A** ໄດ້ ເອົາມືເບື້ອງໜຶ່ງອຸ້ມຕົນຂຶ້ນຂັ້ນໃດ, ອີກເບື້ອງໜຶ່ງກໍໄດ້ແກະມືຂອງຕົນທີ່ດຶງເສົາໄວ້ ແລະ ໃນເວລາດຽວກັນນັ້ນກໍໄດ້ເອົາອີກມືໜຶ່ງມາອັດປາກຂອງຕົນ. ອີງຕາມເນື້ອໃນຂອງຄຳໃຫ້ການແລ້ວເຫັນວ່າ **A** ໄດ້ໃຊ້ 3 ມືໃນເວລາດຽວກັນ ຊຶ່ງເຫັນວ່າເນື້ອໃນຂອງຄຳໃຫ້ການດັ່ງກ່າວ ບໍ່ເປັນທຳມະຊາດ ບໍ່ສົມເຫດສົມຜົນ.

ນອກຈາກນີ້, ໃນກໍລະນີທີ່ຜູ້ໃຫ້ການ ຫາກໄດ້ໃຫ້ການກ່ຽວກັບຂໍ້ເທັດຈິງທີ່ຕົນໄດ້ປະສົບພົບພໍ້ໂດຍອີງໃສ່ການຈື່ຈຳຂອງຕົນແລ້ວ ເນື້ອໃນຄຳໃຫ້ການດັ່ງກ່າວຈະສາມາດລົງເລິກລາຍລະອຽດໄດ້, ສິ່ງທີ່ໄດ້ເວົ້າກ່ອນ ຫຼື ຫຼັງ ມີຄວາມສອດຄ່ອງກັນດີ.

**ຕົວຢ່າງ:** ຄໍາໃຫ້ການຂອງຜູ້ຖືກເສຍຫາຍໃນຄະດີປຸ້ນຊັບ: ຂ້ອຍໄດ້ອອກຈາກຮ້ານບັນເທີງ ເວລາ ປະມານ 00:30 ໂມງ , ໂດຍຂັບລົດໃຫຍ່ກັບບ້ານ ແລະ ເມື່ອຮອດໜ້າບ້ານ ກໍໄດ້ລົງຈາກລົດເພື່ອມາໄຂປະຕູຮົ້ວ ທັນໃດນັ້ນກໍໄດ້ມີຊາຍແປກໜ້າ 2 ຄົນ ໄດ້ຂີ່ລົດຈັກມາຈອດດ້ານຫຼັງລົດຂ້ອຍ ແລະ ໄດ້ມີຜູ້ 1 ຍ່າງມາຫາຂ້ອຍ ຊຶ່ງລາວມີຮູບຮ່າງຈ່ອຍສູງ, ນຸ່ງເສື້ອໜັງສີດໍາ, ໂສ້ງຍີນສີຟ້າ, ໃສ່ໝວກກັນນ໋ອກສີດໍາ ແລະ ໄດ້ເວົ້າວ່າ: "ປົດສາຍຄໍມາໃຫ້ກູດຽວນີ້ຖ້າບໍ່ຢາກຕາຍ" ຂ້ອຍໄດ້ຂັດຂືນ ແລະ ບໍ່ຍອມປົດສາຍຄໍໃຫ້, ຊາຍດັ່ງກ່າວກໍໄດ້ດຶງສາຍຄໍຂ້ອຍຢ່າງແຮງຈົນເຮັດໃຫ້ຂ້ອຍລົ້ມລົງ ແລ້ວຊາຍດັ່ງກ່າວກໍໄດ້ແລ່ນກັບໄປຫາລົດຈັກເພື່ອເອົາຕົວຫຼົບໜີ. ຫຼັງຈາກນັ້ນ, ຂ້ອຍກໍໄດ້ແລ່ນນໍາລົດຈັກຄັນດັ່ງກ່າວ ແຕ່ຕໍ່ມາຂ້ອຍກໍໄດ້ຍິນສຽງປືນດັງຂຶ້ນ, ຂ້ອຍໄດ້ລົ້ມລົງ ແລະ ຂ້ອຍກໍຮູ້ສຶກເຈັບຢູ່ທີ່ຂາເບື້ອງຊ້າຍ ຈຶ່ງຮູ້ວ່າຕົນເອງຖືກຍິງ. ອີງຕາມຄໍາໃຫ້ການດັ່ງກ່າວເຫັນວ່າ: ຜູ້ໃຫ້ການໄດ້ໃຫ້ການລົງເລິກລະອຽດເຖິງຮູບຮ່າງລັກສະນະ, ພຶດຕິກໍາ ແລະ ຄໍາເວົ້າຂອງຜູ້ກໍ່ເຫດໃນເວລາກໍ່ເຫດ.

**ຕົວຢ່າງ:** ພິຈາລະຄໍາໃຫ້ການຂອງຜູ້ຖືກເສຍຫາຍໃນຄະດີອຸບປະຕິເຫດ ຜູ້ຖືກເສຍຫາຍໄດ້ໃຫ້ການ ໃນວັນທີ 7 ກໍລະກົດ 2022 ວ່າຕົນໄດ້ຢືນຢູ່ແຄມທາງທີ່ບໍ່ມີຟຸດບາດເພື່ອຈະຂ້າມໄປຫາອີກຟາກທາງໜຶ່ງ ພໍດີມີລົດຈັກທີ່ຂັບມາດ້ວຍຄວາມໄວສູງມາຕໍາເອົາທາງຂ້າງຂອງຕົນ. ຕໍ່ມາຜູ້ຖືກເສຍຫາຍໄດ້ໃຫ້ການໃນຄັ້ງວັນທີ 5 ສິງຫາ 2022 ວ່າຕົນກໍາລັງຈະຍ່າງຂ້າມທາງ ພໍດີມີສຽງໂທລະສັບດັງຕົນຈຶ່ງໄດ້ຈັບເອົາໂທລະສັບຢູ່ໃນກະເປົາ ເພື່ອມາກົດເບິ່ງ ພໍດີໄດ້ມີລົດຈັກມາຕໍາເອົາຕົນ. ສະນັ້ນ, ຈຶ່ງເຫັນວ່າຄໍາໃຫ້ການຂອງຜູ້ເສຍຫາຍ ຈໍານວນ 2 ຄັ້ງນັ້ນ ແມ່ນບໍ່ສອດຄ່ອງກັນ.

### 5. ລັກສະນະທ່າທາງຂອງຜູ້ໃຫ້ການໃນເວລາໃຫ້ການ

ໃນການເອົາຄໍາໃຫ້ການປະເດັນສໍາຄັນ ບໍ່ແມ່ນພຽງແຕ່ເບິ່ງລັກສະນະພາຍນອກເທົ່ານັ້ນ, ແຕ່ຍັງຕ້ອງເບິ່ງເນື້ອໃນຄໍາໃຫ້ການ ແລະ ພິຈາລະນາທ່າທີຂອງຜູ້ໃຫ້ການ ຈໍາເປັນຕ້ອງໄດ້ເບິ່ງລັກສະນະທ່າທີຂອງຜູ້ໃຫ້ການ ເພາະມີຜົນຕໍ່ຄວາມໜ້າເຊື່ອຖືຂອງຄໍາໃຫ້ການ ເຊັ່ນ: ລັກສະນະທ່າທີຂອງການໃຫ້ການເປັນແນວໃດ ເປັນທໍາມະຊາດບໍ່, ມີຄວາມໝັ້ນໃຈເກີນໄປບໍ່, ຄວາມຈິງໃຈໃນການເລົ່າເຫດການ ຫຼື ບໍ່.

### 6. ຄວາມເປັນມາຂອງການແຈ້ງຄວາມ

ການແຈ້ງຄວາມມີ 3 ຢ່າງຄື: ປະເພດຂອງຄະດີ, ໄລຍະເວລາ ແລະ ເຫດຜົນຂອງການແຈ້ງຄວາມລ່າຊ້າ. ໂດຍທົ່ວໄປແລ້ວພາຍຫຼັງເກີດເຫດ ຜູ້ຖືກເຄາະຮ້າຍຈະໄປແຈ້ງຄວາມໃນທັນທີທັນໃດ ນີ້ກໍຖືເປັນເລື່ອງປົກກະຕິ. ແຕ່ໃນບາງກໍລະນີ ຜູ້ຖືກເຄາະຮ້າຍອາດຈະຍັງມີຄວາມຕົກໃຈ, ກັງວົນ ຫຼື ຍັງບໍ່

ຮູ້ຂັ້ນຕອນໃນການໄປແຈ້ງຄວາມເທື່ອ ເຮັດໃຫ້ເກີດມີການແຈ້ງຄວາມລ່າຊ້າ, ຊຶ່ງໃນກໍລະນີນີ້ ຖ້າຫາກມີເຫດຜົນທີ່ສົມເຫດສົມຜົນກ່ຽວກັບການມາແຈ້ງຄວາມຊ້າແລ້ວ ກໍບໍ່ມີຜົນກະທົບຫຍັງຕໍ່ຄວາມໜ້າເຊື່ອຖືໄດ້ຂອງຄໍາໃຫ້ການ.

**III. ຜ່ານການຄົ້ນຄວ້າ ກ່ຽວກັບປະເດັນທີ່ຄວນເອົາໃຈໃສ່ ຕາມຂໍ້ 2 ຂ້າງເທິງນີ້ແລ້ວ, ເຫັນວ່າຄໍາໃຫ້ການຂອງ ຂ ໃນຄະດີຕົວຢ່າງນີ້ ໜ້າເຊື່ອຖື ຫຼື ບໍ່? ຈົ່ງອະທິບາຍ ທັງກໍລະນີທີ່ເຫັນວ່າ ໜ້າເຊື່ອຖື ແລະ ເຫັນວ່າບໍ່ໜ້າເຊື່ອຖື**

❖ **ກໍລະນີ ຄໍາໃຫ້ການຂອງ ຂ ໜ້າເຊື່ອຖື**

1. **ສາຍພົວພັນທາງດ້ານຜົນປະໂຫຍດ**

**ຂ** ບໍ່ເຄີຍຮູ້ຈັກກັບ **ກ** ມາກ່ອນ, ບໍ່ມີສາຍພົວພັນດ້ານຜົນປະໂຫຍດນໍາກັນ, **ຂ** ມີວຽກເຮັດງານທໍາ ແລະ ບໍ່ມີຂໍ້ມູນໃດທີ່ຊີ້ບອກວ່າ **ຂ** ເປັນຄົນຂີ້ຕົວະ. ດັ່ງນັ້ນ,ຈຶ່ງເປັນໄປໄດ້ຍາກທີ່ **ຂ** ຈະເວົ້າໃສ່ຮ້າຍ **ກ** ໂດຍຕົວະວ່າ **ກ** ຂົ່ມຂືນທໍາຊໍາເລົາຕົນ.

2. **ປະຫວັດຂອງຜູ້ໃຫ້ການ (ຜູ້ຖືກເຄາະຮ້າຍ)**

**ຂ** ມີຄູ່ໝັ້ນແລ້ວ, ເພາະສະນັ້ນ ເປັນໄປໄດ້ຍາກທີ່ **ຂ** ຈະມີພຶດຕິກໍາຫາເງິນໂດຍການໄປນອນກັບຊາຍຄົນອື່ນ .

3. **ເນື້ອໃນຄໍາໃຫ້ການ ມີຄວາມເປັນທໍາມະຊາດ, ສົມເຫດສົມຜົນ, ລົງເລິກລາຍລະອຽດ, ສອດຄ່ອງກັນ ຫຼື ບໍ່ ?**

➢ ການປະເມີນສະພາບລວມຂອງຄໍາໃຫ້ການ ຂອງ **ຂ** ແມ່ນບໍ່ມີຈຸດໃດທີ່ບໍ່ເປັນທໍາມະຊາດ ຊຶ່ງສະແດງອອກຢູ່ບ່ອນວ່າ: ຫຼັງຈາກເລີກວຽກປະມານ 21:00 ໂມງ **ຂ** ກໍໄດ້ປ່ຽນເຄື່ອງ ແລະ ອອກຈາກຮ້ານເພື່ອຈະກັບບ້ານ ໂດຍລາວໄດ້ຍ່າງຄົນດຽວໄປຫາບ່ອນຈອດລົດໃຫຍ່ ຢູ່ຕໍ່ໜ້າສວນນໍ້າພຸ. ຈາກນັ້ນ, ກໍມີຊາຍຄົນໜຶ່ງເອົາວັດຖຸຄ້າຍຄືມີດມາຈີ້ໃສ່ດ້ານຫຼັງ **ຂ** ແລະ ບັງຄັບໃຫ້ຍ່າງຕາມ ແລະ **ຂ** ກໍຮູ້ສຶກຢ້ານຫຼາຍເລີຍຍ່າງຕາມຊາຍຄົນນັ້ນໄປສວນສາທາລະນະແຄມຂອງ ພໍຮອດສວນສາທາລະນະແຄມຂອງກ້ອງຕົ້ນໄມ້ບ່ອນບໍ່ມີແສງໄຟສ່ອງມາ ແລະ ບໍ່ມີຄົນ. ຊາຍຄົນດັ່ງກ່າວກໍໄດ້ບັງຄັບ ແລະ ຂົ່ມຂືນທໍາຊໍາເລົາ **ຂ** ຈົນສໍາເລັດ. ເມື່ອ **ຂ** ກັບມາຮອດບ້ານລາວບໍ່ກ້າບອກພໍ່ແມ່ຍ້ອນລາວຍັງມີຄວາມຕົກໃຈ ແລະ ຢ້ານກົວຕໍ່ຄໍາຂູ່ຂອງຊາຍດັ່ງກ່າວ. ຫຼັງຈາກນັ້ນ, ພໍ່ແມ່ໄດ້ຖາມຫຼາຍຄັ້ງ ແລະ ຂ ກໍໄດ້ເປີດເຜີຍຄວາມລັບວ່າ **ຂ** ຖືກຂົ່ມຂືນທໍາຊໍາເລົາ. ຈາກນັ້ນ, ພໍ່ແມ່ຂອງ **ຂ** ກໍໄດ້ພາໄປຫ້ອງການຕໍາຫຼວດເພື່ອແຈ້ງຄວາມ ແລະ ຮ້ອງຟ້ອງ.

ອີງຕາມຄໍາໃຫ້ການຂອງ **ຂ** ທີ່ໄດ້ເລົ່າກ່ຽວກັບເຫດການທີ່ເກີດຂຶ້ນກັບຕົນນັ້ນ ເຫັນວ່າ ບໍ່ມີຈຸດໃດທີ່ບໍ່ເປັນທໍາມະຊາດ.

- **ການປະເມີນສະເພາະຈຸດຂອງຄຳໃຫ້ການ**
  - ອີງຕາມຄຳໃຫ້ການຂອງ **ຂ** ທີ່ເວົ້າວ່າ: **ກ** ໄດ້ໃຊ້ວັດຖຸຄ້າຍຄືມີດມາຈີ້ຢູ່ທາງດ້ານຫຼັງຂອງ **ຂ** ພ້ອມກັບຂົ່ມຂູ່ວ່າ "ຖ້າສົ່ງສຽງຈະຂ້າຖິ້ມ" ແລະ ເຖິງ **ກ** ຈະເອົາມີດເກັບມ້ຽນໄວ້ໃນຖົງກໍຕາມ ແຕ່ເຫດແມ່ນໄດ້ເກີດຂຶ້ນໃນເວລາປະມານ 21:00 ໂມງ, ຊຶ່ງ **ຂ** ກໍເປັນຜູ້ຍິງ ຈຶ່ງມີຄວາມຢ້ານກົວ ແລະ ໄດ້ປະຕິບັດຕາມ.

    ເນື່ອງຈາກວ່າ ເຫດທີ່ເກີດຂຶ້ນມັນເປັນເວລາກາງຄືນ ແລະ **ຂ** ກໍເປັນຜູ້ຍິງ ເຖິງຊາຍຄົນດັ່ງກ່າວຈະເກັບມີດໄວ້ໃນກະເປົາແລ້ວກໍຕາມ ແຕ່ **ຂ** ກໍບໍ່ກ້າຂັດຂືນ ແລະ ໄດ້ປະຕິບັດຕາມ ຊຶ່ງຄຳໃຫ້ການຂອງ **ຂ** ບໍ່ມີບ່ອນໃດທີ່ບໍ່ເປັນທຳມະຊາດ ແລະ ບໍ່ສົມເຫດສົມຜົນ.
  - ຈາກນັ້ນ **ກ** ຍັງໄດ້ບັງຄັບ **ຂ** ຍ່າງໄປຮອດຕົ້ນໄມ້ໃຫຍ່ເຂດສວນສາທາລະນະ ທີ່ບໍ່ມີແສງສະຫວ່າງ ແລະ ບໍ່ມີຜູ້ຄົນຜ່ານໄປມາ ໂດຍຂົ່ມຂູ່ ແລະ ບັງຄັບຮ່ວມເພດກັບ ຂ ຖ້າບໍ່ປະຕິບັດຕາມແມ່ນ "ຈະຂ້າຖິ້ມ". ຕໍ່ກັບເຫດການທີ່ເກີດຂຶ້ນ ເຖິງວ່າ ຈະເປັນເລື່ອງທີ່ໜ້າອັບອາຍກໍຕາມ ແຕ່ ຂ ກໍຍັງສາມາດເລົ່າເລື່ອງລາວທີ່ເກີດຂຶ້ນ ແລະ ທັງຄຳເວົ້າດັ່ງກ່າວຂອງ **ກ** ໄດ້ ນັ້ນຖືວ່າ **ຂ** ສາມາດເລົ່າລົງເລິກລາຍລະອຽດໄດ້.
  - ອີງຕາມຄຳໃຫ້ການຂອງ **ຂ** ລາວຍັງມີຄວາມຕົກໃຈ, ຢ້ານກົວ ຕໍ່ກັບເຫດການທີ່ເກີດຂຶ້ນ ແລະ **ກ** ກໍໄດ້ຂູ່ວ່າ ຖ້າເອົາເລື່ອງນີ້ໄປບອກຄົນອື່ນ ຫຼື ຕຳຫຼວດ "ຈະຂ້າຖິ້ມ" ຈຶ່ງບໍ່ໄດ້ບອກພໍ່ແມ່ຂອງລາວຮູ້ຈົນເວລາຜ່ານໄປໄດ້ 7 ມື້ ພໍ່ແມ່ຂອງລາວໄດ້ຖາມຫຼາຍ ລາວຈຶ່ງໄດ້ເວົ້າໃຫ້ພໍ່ແມ່ຟັງ ແລະ ຈຶ່ງໄດ້ພາກັນໄປແຈ້ງຄວາມ.

    ອີງຕາມຄຳໃຫ້ການຂ້າງເທິງ ເນື່ອງຈາກວ່າ **ຂ** ມີຄວາມຢ້ານກົວຈາກການຖືກຂົ່ມຂູ່ ຈຶ່ງບໍ່ສາມາດບອກໃຫ້ ພໍ່ແມ່ຮູ້ໄດ້ໃນເວລານັ້ນ ຫຼັງຈາກຜ່ານໄປໄດ້ 7 ວັນ **ຂ** ຈຶ່ງໄປແຈ້ງຄວາມ. ຕໍ່ກັບປະເດັນດັ່ງກ່າວ ບໍ່ມີຈຸດໃດທີ່ບໍ່ເປັນທຳມະຊາດ ແລະ ບໍ່ສົມເຫດສົມຜົນ.

    ອີງຕາມການປະເມີນຂ້າງເທິງເຫັນວ່າ ເນື້ອໃນຄຳໃຫ້ການຂອງ **ຂ** ບໍ່ວ່າຈະພິຈາລະນາຢູ່ໃນພາບລວມ ຫຼື ຈະພິຈາລະນາຢູ່ໃນສະເພາະຈຸດກໍຕາມ ເຫັນວ່າ ບໍ່ມີຈຸດໃດທີ່ບໍ່ເປັນທຳມະຊາດ ແລະ ບໍ່ສົມເຫດສົມຜົນ. ນອກຈາກນີ້, ຄຳໃຫ້ການຂອງຜູ້ຖືກເສຍຫາຍກໍ ສາມາດເລົ່າເຫດການທີ່ເກີດຂຶ້ນໄດ້ຢ່າງລະອຽດໄດ້.

**4. ລັກສະນະທ່າທາງຂອງຜູ້ໃຫ້ການໃນເວລາໃຫ້ການ**

ເຖິງວ່າ ເຫດການທີ່ເກີດຂຶ້ນສຳລັບຜູ້ຍິງແລ້ວ ຈະເປັນເລື່ອງທີ່ໜ້າອັບອາຍກໍຕາມ ແຕ່ **ຂ** ກໍຍັງສາມາດເລົ່າເລື່ອງລາວທີ່ເກີດຂຶ້ນກັບຕົນໄດ້ຢ່າງຈະແຈ້ງ ຊຶ່ງສະແດງອອກເຖິງຄວາມຈິງໃຈໃນການໃຫ້ການຂອງ **ຂ**.

**5. ຄວາມເປັນມາຂອງການແຈ້ງຄວາມ**

ພາຍຫຼັງເຫດການເກີດຂຶ້ນຜ່ານໄປໄດ້ 7 ວັນ **ຂ** ແລະ ພໍ່ແມ່ຂອງລາວ ຈຶ່ງໄດ້ມາແຈ້ງຄວາມ ໃນວັນທີ 12 ກຸມພາ 2019 ທີ່ຫ້ອງການຕຳຫຼວດ ໂດຍທົ່ວໄປແລ້ວຄະດີຂົ່ມຂືນທຳຊຳເລົາ ຜູ້ຖືກເສຍຫາຍຈະມີຄວາມອັບອາຍ, ຢ້ານກົວທີ່ຈະໄປແຈ້ງຄວາມໂດຍທັນໃດ ຊຶ່ງໃນກໍລະນີສຶກສານີ້ **ຂ** ບໍ່ຢາກໃຫ້ພໍ່ ແລະ ແມ່ຮູ້ກ່ຽວກັບເລື່ອງດັ່ງກ່າວ ຊຶ່ງມັນກໍບໍ່ແມ່ນເລື່ອງທີ່ຜິດປົກກະຕິ ຍ້ອນວ່າ **ຂ** ຢ້ານກົວຕໍ່ການຂົ່ມຂູ່ ແລະ ມີຄວາມອັບອາຍຕໍ່ກັບສິ່ງທີ່ເກີດຂຶ້ນ ຈຶ່ງເປັນເລື່ອງປົກກະຕິທີ່ຈະບໍ່ເປີດເຜີຍໃນທັນໃດ. ສະນັ້ນ, ອີງຕາມເຫດຜົນທີ່ກ່າວມາຂ້າງເທິງນັ້ນ ການແຈ້ງຄວາມລ່າຊ້ານີ້ ກໍບໍ່ໄດ້ມີຜົນກະທົບຫຍັງຕໍ່ກັບຄວາມໜ້າເຊື່ອຖືຂອງຄຳໃຫ້ການ **ຂ**.

**6. ການຊອກຫາຫຼັກຖານມາຢັ້ງຢືນ**

ຄຳໃຫ້ການຂອງ **ຂ** ເປັນພຽງຫຼັກຖານດຽວ ແລະ ສຳຄັນ ສ່ວນຫຼັກຖານອື່ນໆແມ່ນບໍ່ພົບເຫັນ, ແນ່ນອນໃນເວລາເກີດເຫດແມ່ນມີຮ່ອງຮອຍ, ແຕ່ການມາແຈ້ງຄວາມຊ້າ ເວລາຜ່ານໄປ 7 ວັນ ມີຄວາມເປັນໄປໄດ້ສູງ ທີ່ຫຼັກຖານທາງດ້ານວັດຖຸຈະຖືກທຳລາຍ ຫຼື ບໍ່ພົບເຫັນ ຈຶ່ງເປັນໄປໄດ້ຍາກທີ່ຈະໄປຊອກຫາຫຼັກຖານທາງດ້ານວັດຖຸມາຢັ້ງຢືນ. ສະນັ້ນ, ເຖິງຈະບໍ່ມີຫຼັກຖານທາງດ້ານວັດຖຸມາຢັ້ງຢືນກໍຕາມ ແຕ່ກໍບໍ່ໄດ້ໝາຍຄວາມວ່າ ຄຳໃຫ້ການຂອງ **ຂ** ນັ້ນ "ຈະເຊື່ອຖືບໍ່ໄດ້"

**<u>ສະຫຼຸບ:</u>**

**ກ** ແລະ **ຂ** ບໍ່ຮູ້ຈັກກັນມາກ່ອນ, ບໍ່ມີສາຍພົວພັນທາງດ້ານຜົນປະໂຫຍດຫຍັງ, **ຂ** ກໍມີຄູ່ໝັ້ນແລ້ວ ແລະ ເປັນຜູ້ຍິງເຮັດວຽກທຳມະດາ ຊຶ່ງອີງຕາມເຫດຜົນດັ່ງກ່າວ **ຂ** ບໍ່ມີເຫດຜົນ ຫຼື ແຮງຈູງໃຈໃດ ທີ່ຈະສ້າງເລື່ອງເອົາຜິດກັບ **ກ**. ເນື້ອໃນຂອງຄຳໃຫ້ການ ບໍ່ມີຈຸດໃດ ທີ່ບໍ່ເປັນທຳມະຊາດ, ບໍ່ສົມເຫດສົມຜົນ ແລະ ສາມາດເວົ້າໄດ້ຢ່າງລະອຽດ ນອກຈາກນີ້, ທ່າທີ ຫຼື ວິທີການໃຫ້ການຂອງ **ຂ** ກໍມີລັກສະນະຊື່ສັດ ເນື່ອງຈາກວ່າເລື່ອງດັ່ງກ່າວ ເປັນເລື່ອງທີ່ໜ້າອາຍທີ່ຈະເວົ້າສຳລັບຜູ້ຍິງກໍຕາມ ແຕ່ **ຂ** ກໍຍັງໃຫ້ການໄດ້ຢ່າງຈະແຈ້ງ. ການແຈ້ງຄວາມລ່າຊ້າສຳລັບຄະດີຂົ່ມຂືນທຳຊຳເລົານີ້ ກໍບໍ່ແມ່ນເລື່ອງທີ່ຜິດປົກກະຕິ ແລະ ອີງຕາມການແຈ້ງຄວາມລ່າຊ້ານັ້ນ ກໍເຮັດໃຫ້ບໍ່ພົບເຫັນຫຼັກຖານທາງດ້ານວັດຖຸ ແຕ່ເຖິງຈະບໍ່ພົບເຫັນຫຼັກຖານທາງດ້ານວັດຖຸກໍຕາມ ກໍບໍ່ເປັນເຫດຜົນທີ່ຄຳໃຫ້ການຂອງ ຂ ນັ້ນຈະເຊື່ອຖືບໍ່ໄດ້. ດັ່ງນັ້ນ, ຄຳໃຫ້ການຂອງ **ຂ** ທີ່ວ່າ ຕົນເອງຖືກ **ກ** ຂົ່ມຂືນທຳຊຳເລົານັ້ນແມ່ນໜ້າເຊື່ອຖືໄດ້.

❖ <u>ໃນກໍລະນີຄໍາໃຫ້ການ ຂອງ ຂ ບໍ່ໜ້າເຊື່ອຖືໄດ້</u>

**1. ບໍ່ມີຫຼັກຖານມາສະໜັບສະໜູນຄໍາໃຫ້ການ ຂອງ ຂ**

ສໍາລັບກໍລະນີນີ້ ບໍ່ພົບເຫັນຫຼັກຖານທາງດ້ານພາວະວິໄສ ເຊັ່ນ: ໂສ້ງຊ້ອນໃນ, ຮ່ອງຮອຍພົກຊໍ້າ ແລະ ຫຼັກຖານອື່ນໆ ທີ່ຈະມາສະໜັບສະໜູນຄໍາໃຫ້ການຂອງ ຂ.

**2. ສາຍພົວພັນທາງດ້ານຜົນປະໂຫຍດ ແລະ ປະຫວັດຂອງຜູ້ໃຫ້ການ**

ເຖິງວ່າ **ຂ** ແລະ **ກ** ບໍ່ໄດ້ຮູ້ຈັກກັນມາກ່ອນ ແລະ **ຂ** ກໍມີຄູ່ໝັ້ນແລ້ວກໍຕາມ ແຕ່ກໍມີຄວາມເປັນໄປໄດ້ວ່າ **ຂ** ມີເພດສໍາພັນກັບ **ກ** ແລ້ວບໍ່ຕ້ອງການໃຫ້ຄູ່ໝັ້ນຮູ້ ກໍອາດຈະສ້າງເລື່ອງຂຶ້ນມາວ່າຕົນຖືກຂົ່ມຂືນທໍາຊໍາເລົາ. ດັ່ງນັ້ນ, ຈໍາເປັນຈະຕ້ອງໄດ້ພິຈາລະນາ ຄວາມໜ້າເຊື່ອຖືໄດ້ຂອງຄໍາໃຫ້ການ **ຂ** ຢ່າງຮອບຄອບ.

**3. ເນື້ອໃນຄໍາໃຫ້ການ ມີຄວາມເປັນທໍາມະຊາດ, ສົມເຫດສົມຜົນ, ລົງເລິກລາຍລະອຽດ, ສອດຄ່ອງກັນ ຫຼື ບໍ່ ?**

ຄໍາໃຫ້ການຂອງ **ຂ** ບໍ່ເປັນທໍາມະຊາດ ເຊັ່ນ: "**ກ** ໄດ້ຂົ່ມຂູ່ **ຂ** ໂດຍໃຊ້ມີດຈີ້ຫຼັງ ແລະ ບັງຄັບໃຫ້ **ຂ** ຍ່າງໄປທາງແຄມຂອງ ແລະ ໃນຂະນະທີ່ຍ່າງໄປ **ກ** ກໍໄດ້ເອົາມີດເຂົ້າໄວ້ໃນກະເປົາ ແລ້ວໃຫ້ຍ່າງຄືກັບເປັນຄູ່ຮັກກັນ" ສໍາລັບປະເດັນນີ້ທັງທີ່ **ກ** ໄດ້ເກັບມີດໄວ້ໃນກະເປົາແລ້ວ ໂດຍທົ່ວໄປແລ້ວ **ຂ** ສາມາດແລ່ນໜີ ຫຼື ຮ້ອງຂໍຄວາມຊ່ວຍເຫຼືອໄດ້ແຕ່ **ຂ** ພັດບໍ່ກະທໍາ. ດັ່ງນັ້ນ, ຄໍາໃຫ້ການຂອງຂ ຈຶ່ງບໍ່ເປັນທໍາມະຊາດ, ບໍ່ສົມເຫດສົມຜົນ.

<u>**ສະຫຼຸບ:**</u>

ບໍ່ມີຫຼັກຖານທາງດ້ານວັດຖຸໃດ ມາສະໜັບສະໜູນຄໍາໃຫ້ການ ຂອງ **ຂ** , ເຖິງວ່າ **ຂ** ແລະ ກ ບໍ່ຮູ້ຈັກກັນມາກ່ອນກໍຕາມ ກໍບໍ່ສາມາດປະຕິເສດໄດ້ວ່າ **ຂ** ຈະບໍ່ໃຫ້ການເທັດເພື່ອເອົາຜິດກັບກ ເນື່ອງຈາກເຫດຜົນສ່ວນຕົວຂອງ **ຂ**. ອີກປະການໜຶ່ງເນື້ອໃນຄໍາໃຫ້ການຂອງ **ຂ** ມີຈຸດທີ່ບໍ່ເປັນທໍາມະຊາດ ບໍ່ສົມເຫດສົມຜົນ. ສະນັ້ນ, ການພິຈາລະນາຄວາມໜ້າເຊື່ອຖືຂອງຄໍາໃຫ້ການຂອງ **ຂ** ຈຶ່ງຕ້ອງດໍາເນີນໄປດ້ວຍຄວາມລະມັດລະວັງ. ດັ່ງນັ້ນ, ຈຶ່ງເວົ້າໄດ້ວ່າ ຄໍາໃຫ້ການຂອງ **ຂ** ຍັງບໍ່ທັນໜ້າເຊື່ອ ຖືໄດ້.

## IV. ສໍາລັບຄະດີນີ້ມີປະເດັນໃດທີ່ເຫັນວ່າ ຄວນມີການສືບສວນ-ສອບສວນເພີ່ມເຕີມ ຫຼື ບໍ່? ຖ້າມີ, ຈົ່ງອະທິບາຍປະເດັນດັ່ງກ່າວພ້ອມທັງໃຫ້ເຫດຜົນ

ເພື່ອເຮັດໃຫ້ມີຄວາມຈະແຈ້ງຂຶ້ນ ວ່າເປັນການຂົ່ມຂືນທໍາຊໍາເລົາ ຫຼື ບໍ່ນັ້ນ ມີຄວາມຈໍາເປັນຕ້ອງມີການສືບສວນ-ສອບສວນ ເພີ່ມເຕີມ ໂດຍອີງໃສ່ຄໍາໃຫ້ການຂອງ **ຂ** ເປັນຫຼັກ ເຊັ່ນ:

**1. ການຊອກຫາຫຼັກຖານມາຢັ້ງຢືນ**

ກວດສອບຢ່າງລະອຽດ ກ່ຽວກັບກ້ອງວົງຈອນປິດ ຫຼື ເອົາຄຳໃຫ້ການບຸກຄົນອື່ນ ຢູ່ບໍລິເວນໃກ້ຄຽງທີ່ເຫັນເຫດການ ນັບແຕ່ບໍລິເວນສວນນ້ຳພຸ ຫາສະຖານທີ່ເກີດເຫດ ເພື່ອພິສູດວ່າ ໃນມື້ເກີດເຫດນັ້ນ ພົບເຫັນ **ກ** ແລະ **ຂ** ຍ່າງໄປນຳກັນແທ້ບໍ່ ແລະ ໃນຂະນະທີ່ຍ່າງໄປນຳກັນນັ້ນ ມີລັກສະນະທ່າທາງແນວໃດ, ກົງກັບ **ຂ** ໃຫ້ການ ຫຼື ບໍ່.

ຊອກຄົ້ນຫາໂສ້ງຊ້ອນໃນຂອງ **ຂ** ທີ່ໃຫ້ການວ່າ ໄດ້ຖິ້ມລົງຖັງຂີ້ເຫຍື້ອໃນ ລະຫວ່າງ ທາງມາບ່ອນຈອດລົດ ເພື່ອມາພິສູດຄຳໃຫ້ການຂອງ **ຂ** ໂດຍລົງໄປຊອກຫາຖັງຂີ້ເຫຍື້ອຕາມຄຳໃຫ້ການຂອງ **ຂ**. ຖ້າພົບເຫັນກໍຈະເປັນຫຼັກຖານຢັ້ງຢືນຄຳໃຫ້ການເພີ່ມເຕີມ, ແຕ່ຖ້າມີການເກັບມ້ຽນຂີ້ເຫຍື້ອໄປກ່ອນແລ້ວ ກໍຈະເປັນການຍາກທີ່ຈະພົບເຫັນ ດັ່ງນັ້ນ, ຕ້ອງໄດ້ເກັບກຳຂໍ້ມູນ ກ່ຽວກັບຕາຕະລາງເວລາຂອງການເກັບຂີ້ເຫຍື້ອຂອງບໍລິສັດເພື່ອເປັນຂໍ້ມູນເພີ່ມເຕີມ.

ເພື່ອພິສູດຮ່ອງຮອຍພົກຊ້ຳຕາມຄຳໃຫ້ການຂອງ **ຂ** ໂດຍໃຫ້ແພດສະເພາະດ້ານ ກວດຮ່າງກາຍ ແລະ ຢັ້ງຢືນກ່ຽວກັບຜົນຂອງການກວດ.

**2. ປະຫວັດຂອງຜູ້ຖືກເສຍຫາຍ**

ໃຫ້ກວດສອບ ກ່ຽວກັບປະຫວັດຂອງ **ຂ** ຢ່າງລະອຽດບໍ່ວ່າຈະເປັນຜິດຕົກຳ, ນິດໄສໃຈຄໍວ່າລາວເປັນຄົນແນວໃດ ໂດຍເກັບກຳຈາກ ພໍ່ແມ່, ອ້າຍເອື້ອຍນ້ອງ, ຄູ່ໝັ້ນ, ໝູ່ເພື່ອນ ບໍ່ວ່າຈະເປັນເພື່ອນສະໜິດ, ເພື່ອນຮ່ວມງານ ແລະ ຈາກບຸກຄົນອື່ນໆ ທີ່ຮູ້ຈັກ ກັບ **ຂ** ແລະ ກວດສອບ ກ່ຽວກັບສະຖານະທາງດ້ານເສດຖະກິດຂອງ **ຂ**.

**3. ສາຍພົວພັນທາງດ້ານຜົນປະໂຫຍດ**

ຖາມພໍ່ແມ່, ອ້າຍເອື້ອຍນ້ອງ, ຄູ່ໝັ້ນ, ໝູ່ເພື່ອນບໍ່ວ່າຈະເປັນເພື່ອນສະໜິດ, ເພື່ອນຮ່ວມງານ ແລະ ຈາກບຸກຄົນອື່ນໆ ທີ່ຮູ້ຈັກ ກັບ **ຂ** ແລະ ເກັບກຳຂໍ້ມູນທາງດ້ານການສື່ສານ ກ່ຽວກັບ **ກ** ກັບ **ຂ** ວ່າໄດ້ມີການພົວພັນກັນມາກ່ອນ ຫຼື ບໍ່ ແລະ ໄດ້ມີຂໍ້ຂັດແຍ່ງກັນມາກ່ອນ ຫຼື ບໍ່.

**4. ເນື້ອໃນຄຳໃຫ້ການມີຄວາມເປັນທຳມະຊາດ, ສົມເຫດສົມຜົນ, ລົງເລິກລາຍລະອຽດ, ສອດຄ່ອງກັນ ຫຼື ບໍ່**

ເພື່ອສົມທຽບ ລະຫວ່າງ ຄຳໃຫ້ການ ກັບສະຖານທີ່ເກີດເຫດຕົວຈິງ ມີຄວາມສອດຄ່ອງກັນ ຫຼື ບໍ່ ຈຳເປັນຈະຕ້ອງໄດ້ລົງກວດກາສະຖານທີ່ເກີດເຫດຕົວຈິງ ເປັນຕົ້ນ: ແສງສະຫວ່າງ ແລະ ສະພາບຜູ້ຄົນທີ່ຢູ່ບ່ອນຈອດລົດເຂດສວນນ້ຳພຸ, ເສັ້ນທາງທີ່ທັງສອງຍ່າງໄປ ແລະ ຈຸດທີ່ອ້າງວ່າຖືກຂົ່ມຂືນທຳຊຳເລົາ ຕາມຄຳໃຫ້ການຂອງ **ຂ**. ຖ້າຫາກເຫັນວ່າມີຂໍ້ສົງໄສທີ່ຈຳເປັນ ກໍຕ້ອງໄດ້ເອົາຄຳ

ໃຫ້ການຂອງ ຂ ເພີ່ມເຕີມ. ໃນກໍລະນີ ມີການເອົາຄໍາໃຫ້ການຫຼາຍຄັ້ງ ກໍສາມາດກວດກາຄືນ ແລະ ສົມທຽບວ່າສອດຄ່ອງກັນ ຫຼື ບໍ່.

**5. ລັກສະນະທ່າທາງໃນເວລາໃຫ້ການ**

ສອບຖາມເຈົ້າໜ້າທີ່ຜູ້ເອົາຄໍາໃຫ້ການຂອງ ຂ ຜ່ານມາ ກ່ຽວກັບລັກສະນະທ່າທາງ ແລະ ການໃຫ້ການຂອງ ຂ ເປັນແບບໃດໃນເວລາທີ່ໃຫ້ການນັ້ນ.

**6. ການແຈ້ງຄວາມ**

ເພື່ອກວດກາເບິ່ງຄໍາໃຫ້ການຂອງ ຂ ກ່ຽວກັບເຫດຜົນຂອງການແຈ້ງຄວາມຊ້າ ຈໍາເປັນຕ້ອງໄດ້ເອົາຄໍາໃຫ້ການຂອງພໍ່ແມ່ ຂ.

***ໝາຍເຫດ:*** *ຜົນການຄົ້ນຄວ້າໃນກໍລະນີສຶກສານີ້ ບໍ່ໄດ້ຈໍາກັດເນື້ອໃນພຽງແຕ່ເທົ່ານີ້ ຜູ້ທີ່ຈະນໍາໃຊ້ເຂົ້າໃນການຮຽນ-ການສອນ, ການຝຶກອົບຮົມ ແລະ ການຄົ້ນຄວ້າວິໄຈ ສາມາດໝູນໃຊ້ໄດ້ຕາມຄວາມເໝາະສົມ ຂອງແຕ່ລະຂົງເຂດ.*

## ກໍລະນີສຶກສາ III

# ການລັກຊັບ (ເຜັດ) ທີ່ພິສູດຈາກ
# ການຄອບຄອງຊັບທີ່ເປັນເປົ້າໝາຍຂອງການກະທຳຜິດ

# ກໍລະນີສຶກສາ ການລັກຊັບ (ເພັດ)
# ທີ່ພິສູດຈາກການຄອບຄອງຊັບທີ່ເປັນເປົ້າໝາຍຂອງການກະທຳຜິດ

**ກ** ຖືກຈັບຕົວຢູ່ພາຍໃນເຮືອນຂອງຕົນທີ່ຢູ່ໃກ້ກັບພະທາດຫຼວງ ນະຄອນຫຼວງວຽງຈັນໃນວັນທີ 5 ຕຸລາ 2018 ໃນຂໍ້ກ່າວຫາລັກເພັດ 1 ເມັດ (ມູນຄ່າປະມານ 10.000 ດອນລາ) ຢູ່ຮ້ານຂາຍວັດຖຸມີຄ່າ ຕັ້ງຢູ່ພາຍໃນປະຕູໄຊ ທີ່ **ຂ** ເປັນເຈົ້າຂອງຮ້ານ ໃນຕອນກາງເດິກວັນທີ 5 ກຸມພາ 2018.

ຕໍ່ມາ **ກ** ໄດ້ປະຕິເສດມາຕະຫຼອດວ່າຕົນບໍ່ແມ່ນຜູ້ກະທຳຜິດ, ແຕ່ຈາກຜົນຂອງການສືບສວນ-ສອບສວນຂອງເຈົ້າໜ້າທີ່ຕຳຫຼວດ ແລະ ຜ່ານການຄົ້ນຄວ້າຂອງພະນັກງານໄອຍະການ ຊຶ່ງມີຫຼັກຖານຢັ້ງຢືນວ່າ **ກ** ໄດ້ມີການກະທຳຜິດ, ດັ່ງນັ້ນ ຫົວໜ້າອົງການໄອຍະການຈຶ່ງໄດ້ສັ່ງຟ້ອງ **ກ** ໃນຂໍ້ກ່າວຫາ ການລັກຊັບ ຕາມມາດຕາ 231 ຂອງປະມວນກົດໝາຍອາຍາ ພ້ອມທັງສິ່ງສຳນວນຄະດີໃຫ້ສານພິຈາລະນາ.

**<u>ຫຼັກຖານທີ່ເຈົ້າໜ້າທີ່ຕຳຫຼວດ ແລະ ພະນັກງານໄອຍະການຮອບຮວມມາໄດ້ ປະກອບມີ:</u>**

① ພົບເຫັນເພັດ 1 ເມັດທີ່ເປັນຂອງ **ຂ** ຢູ່ເຮືອນຂອງ ກ;

② **ກ** ໄດ້ອະທິບາຍກ່ຽວກັບເພັດຂອງ **ຂ** ທີ່ໄດ້ຄອບຄອງໄວ້ຢູ່ເຮືອນຂອງຕົນວ່າ (ໃນຂະນະທີ່ຕົນຍ່າງຢູ່ພາຍໃນຕະຫຼາດເຊົ້າ ມີຊາຍບໍ່ຮູ້ຈັກຄົນໜຶ່ງເອີ້ນໃສ່ ແລະ ໄດ້ຊື້ເພັດນັ້ນໃນລາຄາ 3.000 ດອນລາ ຈາກຊາຍຄົນດັ່ງກ່າວໃນກາງເດືອນ ມັງກອນ 2018) , ແຕ່ຈາກການສືບສວນ-ສອບສວນຂອງເຈົ້າໜ້າທີ່ຕຳຫຼວດ ແລະ ພະນັກງານໄອຍະການ ກໍບໍ່ສາມາດກຳນົດລັກສະນະຂອງຊາຍຄົນດັ່ງກ່າວໄດ້;

③ ໃນເດືອນກັນຍາ ປີ 2018, **ກ** ໄດ້ສະແດງເພັດຂອງ **ຂ** ທີ່ຕົນຄອບຄອງຢູ່ ໃຫ້ໝູ່ຂອງລາວກໍຄື **ຄ** ເບິ່ງ ພ້ອມທັງອະທິບາຍກ່ຽວກັບບ່ອນຂາຍເພັດດັ່ງກ່າວວ່າ (ເພັດເມັດນີ້ຂ້ອຍຊື້ມາໃນລາຄາ 2.000 ດອນລາ ຢູ່ຮ້ານຂາຍເພັດ ໃນຫ້າງວຽງຈັນເຊັນເຕີ້ ໃນເດືອນ ກໍລະກົດ 2018) , ແຕ່ຮ້ານຂາຍເພັດພອຍໃນຫ້າງວຽງຈັນເຊັນເຕີ້ນັ້ນ ບໍ່ໄດ້ຂາຍເພັດເມັດດັ່ງກ່າວ;

④ ຫຼັງຈາກ **ກ** ຖືກຈັບໃນວັນທີ 5 ຕຸລາ 2018, ຢູ່ໃນເຮືອນຂອງ **ກ** ມີກະແຈໄຂຄວງ ແລະ ຖົງມືຢູ່ ທີ່ຄ້າຍຄືກັນກັບຖົງມືທີ່ມີຢູ່ໃນສະຖານທີ່ເກີດເຫດ ກໍຄືຮ້ານຂາຍເພັດຂອງ **ຂ**;

i. ຜູ້ຊ່ຽນນະສູດຮ່ອງຮອຍຖົງມື ໄດ້ອະທິບາຍກ່ຽວກັບຮ່ອງຮ່ອຍຖົງມືທີ່ມີຢູ່ສະຖານທີ່ເກີດເຫດວ່າ ລະດັບຄວາມເປັນໄປໄດ້ທີ່ຖົງມືດັ່ງກ່າວຈະເປັນຖົງມືອັນດຽວກັນກັບຖົງມືທີ່ພົບເຫັນຢູ່ເຮືອນຂອງ **ກ** ມີປະມານ 90%.

ii. ຖົງມືທີ່ **ກ** ຄອບຄອງ ແມ່ນຖົງມືທົ່ວໄປ ສາມາດຫາຊື້ໄດ້ຢູ່ຮ້ານຂາຍເຄື່ອງໄຟຟ້າເທົ່ານັ້ນ.

⑤ ເມື່ອກວດ DNA ແລ້ວ ໃນຈຳນວນເສັ້ນຜົມຢ່າງຫຼວງຫຼາຍທີ່ພົບເຫັນໃນສະຖານທີ່ເກີດເຫດ ກໍຄືຮ້ານຂາຍເພັດຂອງ **ຂ** ກໍບໍ່ພົບວ່າມີຜົມເສັ້ນໃດກົງກັບຜົມຂອງ ກ;

⑥ 20 ປີ ກ່ອນ **ກ** ເຄີຍຖືກລົງໂທດໃນຂໍ້ຫາລັກເພັດພອຍຢູ່ບ້ານຂອງຄົນອື່ນ.

## ຄຳຖາມ

**1.** ຖ້າຫາກຄົ້ນຄວ້າຕາມເນື້ອໃນຂໍ້ເທັດຈິງ ແລະ ຫຼັກຖານທີ່ມີຢູ່ໃນເນື້ອຄະດີກໍລະນີສຶກສານີ້ແລ້ວ, ໃນການພິຈາລະນາວ່າ **ກ** ແມ່ນຜູ້ກະທຳຜິດໃນຂໍ້ກ່າວຫາການລັກຊັບ ຫຼື ບໍ່ນັ້ນ, ຫຼັກຖານອັນໃດທີ່ເຫັນວ່າ ມີຄວາມສຳຄັນທີ່ສຸດ ? ຈົ່ງອະທິບາຍພ້ອມທັງວິເຄາະເບິ່ງວ່າ ໂຄງສ້າງຂອງຫຼັກຖານໃນຄະດີ ຕົວຢ່າງນີ້ ເປັນການພິສູດຂໍ້ເທັດຈິງດ້ວຍຫຼັກຖານທາງກົງ ຫຼື ດ້ວຍຫຼັກຖານທາງອ້ອມ

**2.** ຖ້າຫາກຄົ້ນຄວ້າຕາມເນື້ອໃນຂໍ້ເທັດຈິງ ແລະ ຫຼັກຖານທີ່ມີຢູ່ໃນເນື້ອຄະດີຕົວຢ່າງນີ້ແລ້ວ, ສາມາດກຳນົດ ໄດ້ວ່າ **ກ** ເປັນຜູ້ລັກຊັບ ຫຼື ບໍ່ ? ຈົ່ງອະທິບາຍເຫດຜົນທັງກໍລະນີ ທີ່ເຫັນວ່າ **ກ** ມີຄວາມຜິດ ແລະ ກໍລະນີທີ່ເຫັນວ່າ **ກ** ບໍ່ມີຄວາມຜິດ

**3.** ໃນຄະດີລັກຊັບນັ້ນ, ໃນການກຳນົດວ່າຜູ້ຖືກຫາ ແມ່ນຜູ້ກະທຳຜິດ ຍ້ອນເຫັນວ່າຈຳເລີຍຄອບຄອງຊັບສິ່ງຂອງທີ່ເປັນເປົ້າໝາຍຂອງການກະທຳຜິດນັ້ນ ປະເດັນທີ່ຄວນເອົາໃຈໃສ່ແມ່ນຫຍັງ ? ຈົ່ງອະທິບາຍ ໂດຍຍົກໃຫ້ເຫັນທັງຂໍ້ເທັດຈິງ ທີ່ໄດ້ນຳມາຄົ້ນຄວ້າ ເພື່ອກຳນົດເຫດການຂອງຄະດີຕາມຂໍ້ 2 ຂ້າງເທິງນີ້ ແລະ ຂໍ້ເທັດຈິງທາງອ້ອມ ທີ່ຄວນເອົາໃຈໃສ່ອື່ນໆ ຖ້າມີ

**4.** ຜ່ານການຄົ້ນຄວ້າກ່ຽວກັບປະເດັນທີ່ຄວນເອົາໃຈໃສ່ຕາມຂໍ້ 3 ຂ້າງເທິງນີ້ແລ້ວ, ຈົ່ງພິຈາລະນາກ່ຽວກັບບັນ ຫາທີ່ເຫັນວ່າ ຄວນມີການສືບສວນ-ສອບສວນ ເພີ່ມເຕີມ ເພື່ອເປັນການຢັ້ງຢືນຂໍ້ເທັດຈິງ ທີ່ກ່ຽວຂ້ອງກັບປະ ເດັນດັ່ງກ່າວ ພ້ອມທັງອະທິບາຍວ່າຍ້ອນຫຍັງ ການສືບສວນ-ສອບສວນ ເພີ່ມເຕີມນັ້ນ ຈຶ່ງມີຄວາມຈຳເປັນ.

**I. ຖ້າຫາກຄົ້ນຄວ້າຕາມເນື້ອໃນຂໍ້ເທັດຈິງ ແລະ ຫຼັກຖານທີ່ມີຢູ່ໃນເນື້ອຄະດີຕົວຢ່າງນີ້ແລ້ວ, ໃນການພິຈາລະນາວ່າ ກ ແມ່ນຜູ້ກະທຳຜິດໃນຂໍ້ຫາການລັກຊັບ (ເຜັດ) ຫຼື ບໍ່ນັ້ນ, ຫຼັກຖານອັນໃດທີ່ເຫັນວ່າ ມີຄວາມສຳຄັນທີ່ສຸດ? ຈົ່ງອະທິບາຍພ້ອມທັງວິເຄາະເບິ່ງວ່າ ໂຄງສ້າງຂອງຫຼັກຖານ[1] ໃນຄະດີຕົວຢ່າງນີ້ ເປັນການພິສູດຂໍ້ເທັດຈິງດ້ວຍຫຼັກຖານທາງກົງ ຫຼື ດ້ວຍຫຼັກຖານທາງອ້ອມ.**

**1. ການໄຈ້ແຍກລະຫວ່າງ ຫຼັກຖານທາງກົງ ແລະ ຫຼັກຖານທາງອ້ອມ**

ກ່ອນອື່ນຄວນເຂົ້າໃຈຄວາມແຕກຕ່າງລະຫວ່າງ ຫຼັກຖານທາງກົງ ແລະ ຫຼັກຖານທາງອ້ອມ ດັ່ງນີ້:

❖ **ຫຼັກຖານທາງກົງ** ແມ່ນຫຼັກຖານໂດຍກົງ ທີ່ນຳມາພິສູດຂໍ້ເທັດຈິງໃດໜຶ່ງຂອງຄະດີທີ່ເຮົາຕ້ອງການພິສູດໄດ້ໂດຍກົງ, ຖ້າຫາກມີຫຼັກຖານທາງກົງມາພິສູດແລ້ວ ຂໍ້ເທັດຈິງດັ່ງກ່າວກໍບໍ່ຈຳເປັນຈະຕ້ອງມີຂະບວນການສັນນິຖານຕື່ມອີກ ເຊັ່ນ: ໃນກໍລະນີທີ່ມີຜູ້ເຫັນເຫດການການກະທຳຜິດໂດຍກົງ, ກໍລະນີນີ້ ສາມາດພິສູດຂໍ້ເທັດຈິງໄດ້ໂດຍກົງກ່ຽວກັບເຫດການການກະທຳຜິດ ຫຼື ການກະທຳຂອງຜູ້ກໍ່ເຫດໄດ້ ຈາກຄຳໃຫ້ການຂອງຜູ້ເຫັນເຫດການ.

<u>**ຕົວຢ່າງ:**</u> ຄະດີຄາດຕະກຳ ທີ່ຈະພິສູດຂໍ້ເທັດຈິງທີ່ວ່າ **A** ໃຊ້ມີດແທງ **B** ຫຼື ບໍ່, ພະຍານທີ່ເຫັນ **A** ໃຊ້ມີດແທງ **B** ເປັນຫຼັກຖານທາງກົງ, ຖ້າສານເຊື່ອໝັ້ນວ່າພະຍານຄົນນັ້ນເວົ້າຄວາມຈິງສານສາມາດສະຫຼຸບ ໄດ້ເລີຍວ່າ **A** ໃຊ້ມີດແທງ **B**.

❖ **ຫຼັກຖານທາງອ້ອມ** ແມ່ນຫຼັກຖານທີ່ບໍ່ສາມາດພິສູດຂໍ້ເທັດຈິງທີ່ຕ້ອງການພິສູດໄດ້ໂດຍກົງ, ພິສູດໄດ້ພຽງແຕ່ຂໍ້ເທັດຈິງທາງອ້ອມ. ສະນັ້ນ, ການໃຊ້ຫຼັກຖານທາງອ້ອມ ຈຳເປັນຈະຕ້ອງມີຂະບວນການສັນນິຖານເຂົ້າໃນການກຳນົດຂໍ້ເທັດຈິງ.

<u>**ຕົວຢ່າງ:**</u> ການກະທຳຜິດ ໃນສະຖານທຳຮ້າຍຮ່າງກາຍ ທີ່ຈະພິສູດຂໍ້ເທັດຈິງທີ່ວ່າ **A** ໃຊ້ມີດແທງ **B** ຫຼື ບໍ່. **C** ເປັນພະຍານທີ່ໄດ້ໃຫ້ການວ່າເວລາເກີດເຫດໄດ້ເຫັນ **A** ແລ່ນຜ່ານຕົນໄປໂດຍມືຂອງຜູ້ກ່ຽວຖືມີດ ຊຶ່ງມີເລືອດ ແລະ ໄດ້ຍິນສຽງຮ້ອງຂອງ **B** ເຫດການທີ່ **C** ເຫັນນັ້ນ **C** ບໍ່ໄດ້ເຫັນ **A** ໃຊ້ມີດແທງ **B** ໂດຍກົງ ເຫັນພຽງແຕ່ **A** ຖືມີດແລ່ນຜ່ານ ແລະ ໄດ້ຍິນພຽງສຽງຮ້ອງຂອງ **B.** ສະນັ້ນ, ຄຳໃຫ້ການ **C** ຈຶ່ງບໍ່ແມ່ນຫຼັກຖານທາງກົງ ເປັນພຽງຫຼັກຖານທາງອ້ອມ ຍ້ອນວ່າ ຄຳໃຫ້ການຂອງ **C** ສາມາດສັນນິຖານໄດ້ວ່າ **A** ອາດຈະໃຊ້ມີດແທງ **B.**

ອີງຕາມຕາມທິດສະດີທີ່ກ່າວມາຂ້າງເທິງນີ້ ເຫັນວ່າໃນການພິສູດຂໍ້ເທັດຈິງວ່າ **ກ** ເປັນຜູ້ກະທຳຜິດໃນຂໍ້ກ່າວຫາການລັກຊັບ ຫຼື ບໍ່ ນັ້ນ ແມ່ນບໍ່ມີຫຼັກຖານທາງກົງ ເຊັ່ນ: ບໍ່ມີຜູ້ເຫັນເຫດການ ໂດຍກົງ ແລະ ອື່ນໆ.

---

[1] ໂຄງສ້າງຂອງຫຼັກຖານທາງກົງ ແລະ ຫຼັກຖານທາງອ້ອມ ແມ່ນຄັດຕິດຢູ່ໃນເອກະສານຊ້ອນທ້າຍ

ດັ່ງນັ້ນ, ໃນການພິສູດຄະດີ ຈຶ່ງຈຳເປັນຕ້ອງພິສູດບັນດາ ຂໍ້ເທັດຈິງທາງອ້ອມ ດ້ວຍການໃຊ້ຫຼັກຖານທາງອ້ອມ.

**2. ວິເຄາະຂໍ້ເທັດຈິງທາງອ້ອມ**

- **ການພົບເຫັນ ເພັດ 1 ເມັດຢູ່ເຮືອນ ກ**

ການທີ່ **ກ** ມີເພັດ 1 ເມັດ ໄວ້ໃນຄອບຄອງ ຊຶ່ງແມ່ນເພັດທີ່ຖືກລັກຈາກຮ້ານຂາຍເພັດຂອງ **ຂ** ນັ້ນ ເຮັດໃຫ້ມີຄວາມເປັນໄປໄດ້ວ່າ **ກ** ອາດຈະໄດ້ເພັດມາດ້ວຍວິທີການບໍ່ຖືກຕ້ອງໃດໜຶ່ງ ເຊັ່ນ: **ກ** ອາດຈະໄດ້ມາຈາກການລັກ, ອາດໄດ້ມາຈາກບຸກຄົນອື່ນລັກມາ ຫຼື ດ້ວຍວິທີການທີ່ບໍ່ຖືກຕ້ອງ ຊຶ່ງຂໍ້ເທັດຈິງດັ່ງກ່າວເປັນສາເຫດທີ່ພາໃຫ້ມີການສືບສວນ-ສອບສວນ ແລະ ດຳເນີນຄະດີຕໍ່ **ກ** ໄດ້.

- **ການທີ່ພົບເຫັນຮ່ອງຮອຍຖົງມື ຢູ່ສະຖານທີ່ເກີດເຫດ ມີຄວາມຄ້າຍຄືກັບຖົງມືທີ່ພົບເຫັນຢູ່ເຮືອນ ກ**

ຮ່ອງຮອຍຖົງມືທີ່ພົບເຫັນຢູ່ສະຖານທີ່ເກີດເຫດມີຄວາມຄ້າຍຄືກັບຖົງມືທີ່ພົບເຫັນຢູ່ເຮືອນ **ກ** ຊຶ່ງມີຄວາມເປັນໄປໄດ້ສູງວ່າເປັນອັນດຽວກັນ ເຖິງ 90% ແລະ ເປັນຖົງມືທີ່ໃຊ້ສະເພາະທີ່ສາມາດຫາຊື້ໄດ້ຕາມຮ້ານຂາຍເຄື່ອງໄຟຟ້າເທົ່ານັ້ນ. ດັ່ງນັ້ນ, ຂໍ້ເທັດຈິງທີ່ວ່າ **ກ** ມີຖົງມືໄວ້ໃນຄອບຄອງນັ້ນ ສາມາດເປັນຂໍ້ເທັດຈິງທີ່ພາໃຫ້ສັນນິຖານໄດ້ວ່າ **ກ** ອາດຈະເປັນຜູ້ກະທຳຜິດໄດ້ ແຕ່ກໍບໍ່ໄດ້ໝາຍຄວາມວ່າຖົງມືດັ່ງກ່າວຈະມີພຽງແຕ່ **ກ** ເທົ່ານັ້ນທີ່ຈະສາມາດຊື້ໄດ້ ເພາະວ່າບຸກຄົນອື່ນກໍສາມາດຊື້ໄດ້ເຊັ່ນດຽວກັນໃນຮ້ານຂາຍເຄື່ອງໄຟຟ້າ. ສະນັ້ນ, ມີພຽງຂໍ້ເທັດຈິງດັ່ງກ່າວຢ່າງດຽວ ຍັງບໍ່ທັນສາມາດກຳນົດໄດ້ເລີຍວ່າ **ກ** ແມ່ນຜູ້ກະທຳຜິດ.

- **ການພົບເຫັນເຫຼັກໄຂຄວງຢູ່ເຮືອນຂອງ ກ**

ເຖິງວ່າ ເຫຼັກໄຂຄວງແມ່ນເຄື່ອງມືທີ່ສາມາດນຳໃຊ້ເຂົ້າໃນການກະທຳຜິດໄດ້ (ໃຊ້ໃນການງັດແງະເພື່ອລັກເຄື່ອງໄດ້) ແຕ່ແນວໃດກໍຕາມເຫຼັກໄຂຄວງກໍເປັນອຸປະກອນທີ່ສາມາດມີໄດ້ຢູ່ທຸກຄົວເຮືອນ ເພື່ອນຳໃຊ້ໃນຈຸດປະສົງທົ່ວໄປ. ສະນັ້ນ, ການທີ່ **ກ** ມີເຫຼັກໄຂຄວງໄວ້ໃນຄອບຄອງ ກໍບໍ່ສາມາດຕັດສິນວ່າ **ກ** ເປັນຜູ້ກະທຳຜິດ ຫຼື ຍັງບໍ່ທັນສາມາດນຳໃຊ້ຂໍ້ເທັດຈິງເພື່ອຊີ້ບອກວ່າ **ກ** ໄດ້ນຳໃຊ້ໃນການກະທຳຜິດເທື່ອ.

- **ການທີ່ ກ ໃຫ້ການ ກ່ຽວກັບການໄດ້ມາຂອງເພັດ ຢ່າງບໍ່ສົມເຫດສົມຜົນ**

ເນື້ອໃນຄຳໃຫ້ການຂອງ **ກ** ຍັງມີຫລາຍຈຸດທີ່ບໍ່ມີຄວາມເປັນທຳມະຊາດ, ສົມເຫດສົມຜົນ ເຊັ່ນ: ຄຳໃຫ້ການຂອງ **ກ** ທີ່ໄດ້ໃຫ້ການຕໍ່ເຈົ້າໜ້າທີ່ ກັບ ໝູ່ຂອງລາວມີເນື້ອໃນແຕກຕ່າງກັນ ແລະ ມີຄວາມຂັດແຍ້ງກັນ. ໂດຍປົກກະຕິແລ້ວ ຕ້ອງສາມາດອະທິບາຍໄດ້ແຫຼ່ງທີ່ມາຂອງວັດຖຸມີຄ່າ. ສະນັ້ນ, ຈຶ່ງເວົ້າໄດ້ວ່າ **ກ** ອາດໄດ້ເພັດມາ ດ້ວຍວິທີການໃດໜຶ່ງທີ່ບໍ່ຖືກຕ້ອງ.

**3. ຂໍ້ເທັດຈິງທາງອ້ອມທີ່ສຳຄັນທີ່ສຸດ**

ອີງຕາມ ການວິເຄາະບັນດາຂໍ້ເທັດຈິງຂ້າງເທິງນີ້ ເຫັນວ່າ ການພົບເຫັນເພັດ 1 ເມັດຢູ່ເຮືອນ **ກ** ແລະ ການພົບເຫັນຖົງມືຢູ່ເຮືອນ **ກ** ຊຶ່ງມີຄວາມເປັນໄປໄດ້ສູງວ່າເປັນອັນດຽວກັນ ເຖິງ 90% ແລະ ຄຳໃຫ້ການຂອງ **ກ** ກ່ຽວກັບການໄດ້ມາຂອງເພັດຢ່າງບໍ່ສົມເຫດສົມຜົນນັ້ນ ແມ່ນຂໍ້ເທັດຈິງ ທີ່ພາໃຫ້ສົງໄສໄດ້ວ່າ **ກ** ອາດຈະໄດ້ເພັດມາດ້ວຍວິທີໃດໜຶ່ງທີ່ບໍ່ຖືກຕ້ອງ. ເມື່ອສົມທຽບຈາກຂໍ້ເທັດຈິງຂ້າງເທິງແລ້ວ ເຫັນວ່າຂໍ້ເທັດຈິງທີ່ພົບເຫັນຫຼັກຖານທາງດ້ານວັດຖຸສຳຄັນກວ່າຂໍ້ເທັດຈິງກ່ຽວກັບຫຼັກຖານທາງດ້ານບຸກຄົນກໍຄືຄຳໃຫ້ການ. ແຕ່ໃນກໍລະນີນີ້, ຂໍ້ເທັດຈິງທີ່ພົບເຫັນຫຼັກຖານທາງດ້ານວັດຖຸມີສອງຢ່າງກໍຄື ການພົບເຫັນເພັດ 1 ເມັດທີ່ຖືກລັກຢູ່ເຮືອນຂອງ **ກ** ແລະ ການພົບເຫັນຖົງມືທີ່ມີຄວາມເປັນໄປໄດ້ສູງວ່າເປັນອັນດຽວກັນກັບຮ່ອງຮອຍຖົງມືຢູ່ທີ່ສະຖານທີ່ເກີດເຫດ.

ແຕ່ເນື່ອງຈາກວ່າ ຖົງມືທີ່ພົບເຫັນຢູ່ເຮືອນຂອງ **ກ** ນັ້ນ ເຖິງວ່າ ຈະມີລັກສະນະສະເພາະກໍຕາມ ແຕ່ກໍບໍ່ໄດ້ໝາຍຄວາມວ່າມີແຕ່ **ກ** ເທົ່ານັ້ນທີ່ສາມາດຊື້ໄດ້ ໃນທາງກົງກັນຂ້າມເພັດທີ່ພົບເຫັນຢູ່ເຮືອນຂອງ **ກ** ນັ້ນເປັນເມັດດຽວກັນກັບເພັດທີ່ຖືກລັກມາຊຶ່ງເປັນວັດຖຸທີ່ເປັນເປົ້າໝາຍທີ່ພົວພັນກັບການກະທຳຜິດ. ສະນັ້ນ, ການທີ່ພົບເຫັນເພັດ 1 ເມັດຢູ່ເຮືອນ **ກ** ຈຶ່ງເປັນຂໍ້ເທັດຈິງທີ່ສຳຄັນທີ່ສຸດ.

**II. ຖ້າຫາກຄົ້ນຄວ້າຕາມເນື້ອໃນຂໍ້ເທັດຈິງ ແລະ ຫຼັກຖານທີ່ມີຢູ່ໃນເນື້ອຄະດີຕົວຢ່າງນີ້ແລ້ວ, ສາມາດກຳນົດໄດ້ວ່າ ກ ເປັນຜູ້ລັກຊັບ ຫຼື ບໍ່ ? ຈົ່ງອະທິບາຍເຫດຜົນທັງກໍລະນີ ທີ່ເຫັນວ່າ ກ ມີຄວາມຜິດ ແລະ ກໍລະ ນີທີ່ເຫັນວ່າ ກ ບໍ່ມີຄວາມຜິດ**

❖ **ທັດສະນະທີ່ເຫັນວ່າ ກ ເປັນຜູ້ກະທຳຜິດໃນຂໍ້ກ່າວຫາລັກຊັບ**

1) ການພົບເຫັນເພັດ 1 ເມັດ ຊຶ່ງຖືກລັກມາຈາກຮ້ານຂາຍເພັດຂອງ **ຂ** ຢູ່ເຮືອນຂອງ **ກ** ເປັນຂໍ້ເທັດຈິງທີ່ສົງໄສໄດ້ວ່າ **ກ** ອາດໄດ້ເພັດມາດ້ວຍວິທີການໃດໜຶ່ງທີ່ບໍ່ຖືກຕ້ອງ, ລວມທັງ **ກ** ອາດຈະໄປລັກເພັດນັ້ນເອງ.

2) ການທີ່ **ກ** ໄດ້ໃຫ້ການກ່ຽວກັບການໄດ້ມາເພັດເມັດດັ່ງກ່າວ ມີຄື:

- **ກ** ໄດ້ໃຫ້ການຕໍ່ເຈົ້າໜ້າທີ່ວ່າ "ໃນກາງເດືອນມັງກອນ ປີ 2018 ມີຊາຍບໍ່ຮູ້ຈັກຄົນໜຶ່ງເອີ້ນໃສ່ ແລະ ໄດ້ຂາຍເພັດໃຫ້ໃນລາຄາ 3.000 ດອນລາ" ຄຳໃຫ້ການດັ່ງກ່າວ ເຫັນວ່າ ບໍ່ສົມເຫດສົມຜົນ ເນື່ອງຈາກວ່າ ເພັດທີ່ຖືກລັກຈາກຮ້ານຂາຍເພັດຂອງ **ຂ** ແມ່ນເດືອນກຸມພາ ປີ 2018, ແຕ່ **ກ** ໄດ້ເວົ້າວ່າ ໄດ້ເພັດເມັດດັ່ງກ່າວໃນເດືອນມັງກອນ ຢູ່ຮ້ານຂາຍເພັດພອຍໃນຫ້າງວຽງຈັນເຊັນເຕີ້. ພ້ອມກັນນັ້ນ ການທີ່ **ກ** ເວົ້າວ່າ ໄດ້ມາຈາກຊາຍບໍ່ຮູ້ຈັກຄົນໜຶ່ງເອີ້ນໃສ່ ແລະ ໄດ້ຊື້ໃນລາຄາ 3.000 ດອນລານັ້ນ ເມື່ອມາເບິ່ງເຖິງມູນຄ່າຂອງວັດຖຸ ແລະ ຮູບແບບລັກສະນະການຊື້-ຂາຍເພັດແລ້ວ ເຫັນວ່າບໍ່ເປັນທຳມະຊາດ.

- ພ້ອມກັນນັ້ນ **ກ** ກໍຍັງໄດ້ເລົ່າສູ່ໝູ່ຟັງອີກວ່າ " ໃນເດືອນກໍລະກົດ ປີ 2018 ຂ້ອຍຊື້ເພັດໃນ ລາຄາ 2.000 ດອນລາ ຢູ່ຮ້ານຂາຍເພັດໃນຫ້າງວຽງຈັນເຊັນເຕີ້ " ຕໍ່ການບອກເລົ່າດັ່ງກ່າວ ເມື່ອມາ ສົມທຽບກັບ ສະພາບຄວາມເປັນຈິງແລ້ວ ເຫັນວ່າບໍ່ກົງກັນ ທາງດ້ານເວລາ, ລາຄາ ແລະ ສະຖານທີ່ ແມ່ນມີ ຄວາມຂັດແຍ້ງກັນ ຊຶ່ງຕາມການເກັບກຳຂໍ້ມູນແລ້ວ ຢູ່ຮ້ານຂາຍເພັດພອຍໃນຫ້າງວຽງຈັນ ເຊັນເຕີ້ ບໍ່ໄດ້ ຂາຍເພັດເມັດດັ່ງກ່າວ.
- ເມື່ອສົມທຽບ ການບອກເລົ່າຂອງ **ກ** ຕໍ່ **ຄ** ຊຶ່ງເປັນໝູ່ຂອງລາວ ໃນເດືອນກັນຍາ ປີ 2018 ກັບການໃຫ້ການຕໍ່ເຈົ້າໜ້າທີ່ໃນເດືອນຕຸລາ ປີ 2018 ກ່ຽວກັບການໄດ້ເພັດມາ ຫ່າງກັນພຽງເດືອນ ດຽວ ແຕ່ກໍເວົ້າບໍ່ກົງກັນທັງທີ່ເປັນເລື່ອງດຽວກັນ. ສະນັ້ນ, ຈຶ່ງເຫັນໄດ້ວ່າ ຄຳໃຫ້ການຂອງ **ກ** ບໍ່ ສອດຄ່ອງກັນ, ບໍ່ສົມເຫດບໍ່ສົມຜົນ ແລະ ບໍ່ເປັນທຳມະຊາດ.

ດັ່ງນັ້ນ, ເມື່ອ **ກ** ໃຫ້ການບໍ່ສອດຄ່ອງກັນ ແລະ ບໍ່ສົມເຫດສົມຜົນ ຄືທີ່ກ່າວມານັ້ນ ຈຶ່ງເປັນ ເຫດ ຜົນທີ່ພາໃຫ້ສັນນິຖານໄດ້ວ່າ **ກ** ອາດໄດ້ເພັດເມັດດັ່ງກ່າວມາ ດ້ວຍວິທີການໃດໜຶ່ງທີ່ບໍ່ ຖືກຕ້ອງ ຫຼື **ກ** ອາດເປັນຜູ້ລັກເອງ.

3) ຖົງມືທີ່ພົບເຫັນຢູ່ເຮືອນຂອງ **ກ** ມີຄວາມຄ້າຍຄືກັບຮ່ອງຮອຍຖົງມືທີ່ພົບເຫັນຢູ່ສະຖານທີ່ເກີດ ເຫດ ເຖິງ 90% ແລະ ຖົງມືທີ່ພົບເຫັນຢູ່ເຮືອນຂອງ **ກ** ແມ່ນຖົງມືທີ່ໃຊ້ສະເພາະ ຊຶ່ງສາມາດຫາຊື້ ໄດ້ຕາມຮ້ານຂາຍເຄື່ອງໄຟຟ້າເທົ່ານັ້ນ. ຈາກເຫດຜົນດັ່ງກ່າວຈຶ່ງສາມາດສັນນິຖານໄດ້ວ່າ **ກ** ເປັນ ຜູ້ລັກເພັດດັ່ງກ່າວ ຫຼາຍກວ່າການສົງໄສວ່າ **ກ** ໄດ້ເພັດມາດ້ວຍວິທີການໃດໜຶ່ງທີ່ບໍ່ຖືກຕ້ອງ.

4) ຜ່ານການກວດ DNA ຈາກເສັ້ນຜົມຢ່າງຫຼວງຫຼາຍທີ່ພົບເຫັນໃນສະຖານທີ່ເກີດເຫດ ກໍບໍ່ພົບວ່າ ມີ ຜົມເສັ້ນໃດກົງກັບຜົມຂອງ **ກ**; ແນວໃດກໍຕາມ ເຖິງວ່າ **ກ** ຈະເປັນຜູ້ລັກ ກໍບໍ່ສະເໝີໄປວ່າ ເສັ້ນຜົມຂອງ **ກ** ຈະລົ່ນໄວ້ຢູ່ໃນສະຖານທີ່ເກີດເຫດ. ສະນັ້ນ, ການທີ່ບໍ່ພົບເຫັນເສັ້ນຜົມ ກໍບໍ່ຖືວ່າ ຂໍ້ເທັດຈິງທີ່ປະຕິເສດຂໍ້ສົງໄສວ່າ **ກ** ເປັນຜູ້ລັກຊັບໄດ້.

ສະນັ້ນ, ອີງຕາມຂໍ້ເທັດຈິງທີ່ໄດ້ມາ ຄື: ການພົບເຫັນເພັດ 1 ເມັດ ທີ່ຖືກລັກມາຈາກຮ້ານ ຂາຍເພັດ ຂອງ **ຂ** ຢູ່ເຮືອນຂອງ **ກ**, ຄຳໃຫ້ການຂອງ **ກ** ແມ່ນບໍ່ສອດຄ່ອງກັນ, ບໍ່ສົມເຫດສົມຜົນ ຈຶ່ງເປັນເຫດຜົນທີ່ວ່າ ຄຳໃຫ້ການຂອງ **ກ** ແມ່ນບໍ່ໜ້າເຊື່ອຖືໄດ້ ແລະ ເປັນຂໍ້ເທັດຈິງທີ່ສາມາດ ສົງໄສໄດ້ວ່າ **ກ** ໄດ້ເພັດມາດ້ວຍວິທີການໃດໜຶ່ງບໍ່ຖືກຕ້ອງແນ່ນອນ. ນອກຈາກນີ້ ກໍຍັງພົບເຫັນ ຖົງມືຢູ່ເຮືອນ **ກ** ທີ່ມີຄວາມ ຄ້າຍຄືກັບຮ່ອງຮອຍ ຖົງມືທີ່ພົບເຫັນຢູ່ສະຖານທີ່ເກີດເຫດ ເຖິງ 90% ແລະ ຖົງມືທີ່ພົບເຫັນຢູ່ເຮືອນຂອງ **ກ** ແມ່ນຖົງມືທີ່ໃຊ້ສະເພາະ ຊຶ່ງສາມາດຫາຊື້ໄດ້ຕາມ ຮ້ານຂາຍເຄື່ອງໄຟຟ້າເທົ່ານັ້ນ. ດັ່ງນັ້ນ, ຈຶ່ງເວົ້າໄດ້ວ່າ **ກ** ເປັນຜູ້ລັກເພັດເມັດດັ່ງກ່າວ.

❖ **ທັດສະນະທີ່ເຫັນວ່າ ກ ບໍ່ແມ່ນຜູ້ກະທຳຜິດ ໃນຂໍ້ກ່າວຫາລັກຊັບ**

1) ການພົບເຫັນເພັດ 1 ເມັດ ທີ່ຖືກລັກມາຈາກຮ້ານຂາຍເພັດຂອງ **ຂ** ຢູ່ເຮືອນຂອງ **ກ**, ຊຶ່ງເປັນຂໍ້ເທັດຈິງທີ່ສົງໄສໄດ້ວ່າ **ກ** ອາດໄດ້ເພັດມາດ້ວຍວິທີການໃດໜຶ່ງທີ່ບໍ່ຖືກຕ້ອງ ລວມທັງ **ກ** ອາດຈະໄປລັກເພັດນັ້ນເອງກໍເປັນໄດ້. ແຕ່ເຖິງຢ່າງໃດກໍຕາມ ໄລຍະເວລາຕັ້ງແຕ່ມື້ເກີດເຫດຈົນເຖິງມື້ພົບເຫັນເພັດຢູ່ເຮືອນຂອງ **ກ** ແມ່ນຜ່ານໄປ 8 ເດືອນແລ້ວ, ອີງຕາມໄລຍະເວລາດັ່ງກ່າວແມ່ນຍັງບໍ່ທັນສາມາດເວົ້າໄດ້ເລີຍວ່າ **ກ** ລັກເພັດເມັດນັ້ນເອງ ເພາະຍັງສາມາດສັນນິຖານໄດ້ໃນກໍລະນີອື່ນໆອີກເຊັ່ນ: **ກ** ອາດຈະໄດ້ເພັດເມັດດັ່ງກ່າວ ໂດຍການຊື້ຈາກຄົນທີ່ລັກເພັດເມັດນັ້ນ ຫຼື ວິທີການໃດໜຶ່ງທີ່ບໍ່ຖືກຕ້ອງກໍເປັນໄດ້.

2) ການທີ່ **ກ** ໄດ້ໃຫ້ການກ່ຽວກັບການໄດ້ມາເພັດເມັດດັ່ງກ່າວ ມີຄື:

ອີງຕາມຄຳໃຫ້ການກ່ຽວກັບການໄດ້ມາຂອງເພັດເມັດດັ່ງກ່າວທີ່ **ກ** ໄດ້ໃຫ້ການຕໍ່ເຈົ້າໜ້າທີ່ ໃນເດືອນ 10 ປີ 2018 ແລະ **ກ** ໄດ້ເລົ່າເລື່ອງໃຫ້ **ຄ** ຟັງກ່ຽວກັບການໄດ້ມາຂອງເພັດໃນເດືອນ 9 ປີ 2018 ເຫັນວ່າ ຄຳໃຫ້ການດັ່ງກ່າວບໍ່ສົມເຫດສົມຜົນ, ບໍ່ເປັນທຳມະຊາດ ແລະ ການໃຫ້ການຂອງທັງ 2 ຄັ້ງບໍ່ສອດຄ່ອງກັນ. ຈາກເຫດຜົນດັ່ງກ່າວຈຶ່ງສາມາດເວົ້າໄດ້ວ່າ **ກ** ອາດຈະໄດ້ເພັດເມັດນັ້ນມາດ້ວຍວິທີການໃດໜຶ່ງທີ່ບໍ່ຖືກຕ້ອງ. ແຕ່ຍັງບໍ່ທັນສາມາດກຳນົດໄດ້ເລີຍວ່າ **ກ** ລັກເພັດເມັດນັ້ນດ້ວຍຕົນເອງ.

3) ເຖິງວ່າ ຖົງມືທີ່ພົບເຫັນຢູ່ເຮືອນຂອງ **ກ** ຈະຄ້າຍຄືກັນກັບຮ່ອງຮອຍຖົງມືທີ່ພົບເຫັນຢູ່ສະຖານທີ່ເກີດເຫດ 90% ແລະ ຖົງມືດັ່ງກ່າວເປັນຖົງມືທີ່ໃຊ້ສະເພາະ ຊຶ່ງສາມາດຫາຊື້ໄດ້ຕາມຮ້ານຂາຍເຄື່ອງໄຟຟ້າເທົ່ານັ້ນກໍຕາມ ແຕ່ຖົງມືດັ່ງກ່າວໃຜກໍສາມາດຊື້ໄດ້ຖ້າຫາກໄປຮ້ານຂາຍເຄື່ອງໄຟຟ້າ, ສະນັ້ນ ຈຶ່ງບໍ່ສາມາດເວົ້າໄດ້ວ່າມີພຽງ **ກ** ເທົ່ານັ້ນ ທີ່ຈະມີຖົງມືດັ່ງກ່າວໄວ້ໃນຄອບຄອງ ແລະ ກໍເປັນໄປໄດ້ຍາກທີ່ຈະສາມາດກຳນົດໄດ້ວ່າ **ກ** ແມ່ນຜູ້ກະທຳຜິດໃນການລັກຊັບ.

4) ຜ່ານການກວດ DNA ຈາກເສັ້ນຜົມຢ່າງຫຼວງຫຼາຍທີ່ພົບເຫັນໃນສະຖານທີ່ເກີດເຫດ ກໍບໍ່ພົບວ່າມີຜົມເສັ້ນໃດກົງກັບຜົມຂອງ **ກ**.

5) ເຖິງວ່າ ຈະພົບເຫັນກະແຈໄຂຄວງຢູ່ເຮືອນຂອງ **ກ** ກໍຕາມ ແຕ່ຢູ່ໃນສະຖານທີ່ເກີດເຫດກໍບໍ່ໄດ້ພົບເຫັນຮ່ອງຮອຍຂອງກະແຈໄຂຄວງ. ສະນັ້ນ, ຈຶ່ງບໍ່ສາມາດນຳເອົາຂໍ້ເທັດຈິງດັ່ງກ່າວນີ້ມາກຳນົດວ່າ **ກ** ເປັນຜູ້ກະທຳຜິດໄດ້.

6) ເຖິງວ່າ **ກ** ມີປະຫວັດການກະທຳຜິດໃນສະຖານລັກຊັບກໍຕາມ ແຕ່ໂທດດັ່ງກ່າວກໍຜ່ານມາເປັນເວລາ 20 ປີແລ້ວ ຊຶ່ງບໍ່ສາມາດນຳເອົາຂໍ້ເທັດຈິງດັ່ງກ່າວນີ້ມາກຳນົດວ່າ **ກ** ເປັນຜູ້ກະທຳຜິດໄດ້. ນອກຈາກນີ້, ກໍບໍ່ພົບເຫັນຫຼັກຖານອື່ນໆທີ່ຈະມາສະໜັບສະໜູນວ່າ **ກ** ເປັນຜູ້ກະທຳຜິດໃນການລັກຊັບ.

ສະນັ້ນ, ອີງຕາມຂໍ້ເທັດຈິງຂ້າງເທິງເຫັນວ່າ ການພົບເຫັນວັດຖຸເປົ້າໝາຍໃນການກະທຳຜິດຢູ່ເຮືອນຂອງ **ກ** ກໍຄືເຜັດ 1 ເມັດ ທີ່ຖືກລັກມາຈາກ ຮ້ານຂາຍເຜັດ ຂອງ **ຂ** ແລະ ຄຳໃຫ້ການຂອງ **ກ** ກ່ຽວກັບການໄດ້ມາຂອງເຜັດເຖິງຈະມີຈຸດທີ່ບໍ່ສອດຄ່ອງກັນ, ບໍ່ສົມເຫດສົມຜົນ, ບໍ່ເປັນທຳມະຊາດນັ້ນ ສາມາດກຳນົດໄດ້ພຽງແຕ່ **ກ** ອາດຈະໄດ້ເຜັດເມັດດັ່ງກ່າວດ້ວຍວິທີການໃດໜຶ່ງທີ່ບໍ່ຖືກຕ້ອງ ແຕ່ບໍ່ສາມາດກຳນົດໄດ້ວ່າ **ກ** ເປັນຜູ້ກະທຳຜິດໃນສະຖານລັກຊັບ. ນອກຈາກນີ້, ເຖິງວ່າ ຖົງມືທີ່ພົບເຫັນຢູ່ເຮືອນຂອງ **ກ** ຈະຄ້າຍຄືກັນກັບຮ່ອງຮອຍຖົງມືທີ່ພົບເຫັນຢູ່ສະຖານທີ່ເກີດເຫດ 90% ແລະ ຖົງມືດັ່ງກ່າວເປັນຖົງມືທີ່ໃຊ້ສະເພາະ ຊຶ່ງສາມາດຫາຊື້ໄດ້ຕາມຮ້ານຂາຍເຄື່ອງໄຟຟ້າເທົ່ານັ້ນກໍຕາມ ແຕ່ເນື່ອງຈາກວ່າຖົງມືດັ່ງກ່າວແມ່ນໃຜກໍສາມາດຊື້ໄດ້ ຈຶ່ງບໍ່ສາມາດກຳນົດໄດ້ວ່າ **ກ** ແມ່ນຜູ້ກະທຳຜິດ. ນອກຈາກນີ້, ກໍບໍ່ພົບເຫັນຫຼັກຖານອື່ນທີ່ຈະມາສະໜັບສະໜູນວ່າ **ກ** ເປັນຜູ້ກະທຳຜິດໃນສະຖານການລັກຊັບ. ສະນັ້ນ, ຈຶ່ງສາມາດສະຫຼຸບໄດ້ວ່າ **ກ** ບໍ່ແມ່ນຜູ້ກະທຳຜິດ.

**III. ໃນຄະດີລັກຊັບນັ້ນ, ໃນການກຳນົດວ່າຜູ້ຖືກຫາ ແມ່ນຜູ້ກະທຳຜິດ ຍ້ອນເຫັນວ່າຈຳເລີຍຄອບຄອງຊັບສິ່ງຂອງ ທີ່ຖືກລັກໄປນັ້ນ ປະເດັນທີ່ຄວນເອົາໃຈໃສ່ແມ່ນຫຍັງ ? ຈົ່ງອະທິບາຍ ໂດຍຍົກໃຫ້ເຫັນທັງຂໍ້ເທັດຈິງ ທີ່ໄດ້ນຳມາຄົ້ນຄວ້າ ເພື່ອກຳນົດເຫດການຂອງຄະດີຕາມຂໍ້ II ຂ້າງເທິງນີ້ ແລະ ຂໍ້ເທັດຈິງທາງອ້ອມ ທີ່ຄວນເອົາໃຈໃສ່ອື່ນໆ ຖ້າມີ.**

- ອີງຕາມ ຜົນຂອງການຄົ້ນຄວ້າຂໍ້ເທັດຈິງຕາມຂໍ້ II ຂ້າງເທິງ ສາມາດກຳນົດປະເດັນທີ່ຄວນເອົາໃຈໃສ່ ດັ່ງລຸ່ມນີ້:

**1) ການມີວັດຖຸທີ່ຖືກລັກໄວ້ໃນຄອບຄອງ**

ໃນກໍລະນີວັດຖຸທີ່ຖືກລັກມານັ້ນ ເປັນວັດຖຸທີ່ມີລັກສະນະຊື້-ຂາຍຍາກ ໃນກໍລະນີນີ້ໂດຍທົ່ວໄປແລ້ວ ມີຄວາມເປັນໄປໄດ້ສູງທີ່ຜູ້ລັກຊັບຈະເປັນຜູ້ດຽວກັນກັບຜູ້ທີ່ມີວັດຖຸນັ້ນໄວ້ໃນຄອບຄອງ. ກົງກັນຂ້າມ, ຖ້າຫາກວັດຖຸທີ່ຖືກລັກມານັ້ນເປັນວັດຖຸທີ່ມີລັກສະນະຊື້-ຂາຍງ່າຍ ໃນກໍລະນີນີ້ ມີຄວາມເປັນໄປໄດ້ຍາກທີ່ຈະກຳນົດໄດ້ວ່າຜູ້ທີ່ຄອບຄອງວັດຖຸດັ່ງກ່າວແມ່ນຜູ້ດຽວກັນກັບຜູ້ລັກຊັບ.

ຖ້າວ່າໄລຍະເວລາຈາກວັນທີ່ເກີດເຫດ ຫາ ວັນທີ່ພົບເຫັນວັດຖຸທີ່ຖືກລັກມານັ້ນ ຫາກໃກ້ກັນແລ້ວ ກໍມີຄວາມເປັນໄປໄດ້ສູງທີ່ຜູ້ຄອບຄອງວັດຖຸດັ່ງກ່າວຈະເປັນຜູ້ລັກມາ. ແຕ່ຖ້າຫາກໄລຍະເວລາຕັ້ງແຕ່ວັນເກີດເຫດ ຫາ ວັນທີ່ພົບເຫັນວັດຖຸໄວ້ໃນຄອບຄອງຫ່າງກັນ ໃນກໍລະນີນີ້ ຈະບໍ່ສາມາດກຳນົດໄດ້ວ່າຜູ້ຄອບຄອງວັດຖຸແມ່ນຜູ້ດຽວກັນກັບຜູ້ລັກຊັບ ເພາະວ່າມີຄວາມເປັນໄປໄດ້ ທີ່ຜູ້ກ່ຽວອາດຈະຊື້ມາຈາກຜູ້ລັກຊັບ ແລ້ວຄອບຄອງວັດຖຸດັ່ງກ່າວ.

**2) ຄຳໃຫ້ການ ກ່ຽວກັບການໄດ້ມາຂອງວັດຖຸທີ່ຖືກລັກມາ**

ໂດຍປົກກະຕິຂອງຄົນເຮົາ ຖ້າແມ່ນວັດຖຸທີ່ໄດ້ມາເປັນວັດຖຸມີຄ່າ ແລະ ລາຄາແພງແລ້ວ ຈະມີຄວາມຈື່ຈຳໄດ້ດີ ວ່າໄດ້ວັດຖຸດັ່ງກ່າວມາຈາກໃສ. ແຕ່ໃນກໍລະນີ ຄຳໃຫ້ການຫາກບໍ່ສົມເຫດສົມຜົນ ບໍ່ເປັນທຳມະຊາດ ແລະ ບໍ່ສອດຄ່ອງກັນ ເຊັ່ນ ບໍ່ສາມາດອະທິບາຍກ່ຽວກັບແຫຼ່ງທີ່ມາ ຫຼື ຈື່ບໍ່ໄດ້ວ່າໄດ້ມາຈາກໃສ ແລະ ອະທິບາຍແຕ່ລະຄັ້ງບໍ່ສອດຄ່ອງກັນ, ກໍລະນີນີ້ ມີຄວາມເປັນໄປໄດ້ທີ່ຜູ້ຄອບຄອງວັດຖຸດັ່ງກ່າວອາດຈະໄດ້ວັດຖຸນັ້ນມາດ້ວຍວິທີການໃດໜຶ່ງທີ່ບໍ່ຖືກຕ້ອງ ອາດຈະແມ່ນຜູ້ກ່ຽວເປັນຜູ້ລັກມາ ຫຼື ຊື້ຈາກບຸກຄົນອື່ນທີ່ລັກມາ.

**3) ຮ່ອງຮອຍທີ່ພົບເຫັນໃນສະຖານທີ່ເກີດເຫດ ກົງກັບຮ່ອງຮອຍບຸກຄົນ ຫຼື ວັດຖຸສິ່ງຂອງ ທີ່ຜູ້ຖືກສົງໄສຄອບຄອງ ຫຼື ບໍ່ ?**

ຮ່ອງຮອຍທີ່ພົບເຫັນຢູ່ສະຖານທີ່ເກີດເຫດ ເຊັ່ນ: ຮອຍນິ້ວມື, ເສັ້ນຜົມ, ຮອຍເກີບ, ຮອຍຖົງມື ຫາກກົງກັນກັບຮອຍນິ້ວມື, DNA ຂອງເສັ້ນຜົມ, ຮ່ອງຮອຍຂອງຖົງມື ແລະ ເກີບ ຂອງຜູ້ມີວັດຖຸສິ່ງຂອງທີ່ຖືກລັກໄວ້ໃນຄອບຄອງແລ້ວ ສິ່ງດັ່ງກ່າວຈະຖືວ່າເປັນຂໍ້ມູນຫຼັກຖານທີ່ສາມາດສັນນິຖານໄດ້ວ່າ ຜູ້ທີ່ມີວັດຖຸທີ່ລັກມາໄວ້ໃນຄອບຄອງນັ້ນໄດ້ຢູ່ໃນສະຖານທີ່ເກີດເຫດ ໂດຍສະເພາະຮອຍນິ້ວມື, ເສັ້ນຜົມ ແມ່ນສິ່ງທີ່ສາມາດສັນນິຖານໄດ້ໃນລະດັບສູງ ວ່າຜູ້ກ່ຽວຢູ່ທີ່ສະຖານທີ່ເກີດເຫດນັ້ນແທ້. ແຕ່ສຳລັບຖົງມື ແລະ ເກີບ ແມ່ນຕ້ອງໄດ້ພິຈາລະນາກ່ຽວກັບທີ່ມາຂອງວັດຖຸສິ່ງຂອງດັ່ງກ່າວ.

ນອກຈາກນີ້, ຈຸດທີ່ພົບເຫັນຮ່ອງຮອຍໃນສະຖານທີ່ເກີດເຫດກໍເປັນສິ່ງທີ່ສຳຄັນໃນການພິຈາລະນາ ເຊັ່ນ: ການພົບເຫັນຮ່ອງຮອຍນິ້ວມືຢູ່ຕູ້ໃສ່ເພັດ ຄວນເບິ່ງຈຸດຕຳແໜ່ງຂອງຮອຍນິ້ວມືທີ່ໄດ້ມາວ່າຢູ່ດ້ານໃນຂອງຕູ້ແກ້ວ ຫຼື ຢູ່ດ້ານນອກ, ຖ້າຫາກຮອຍນິ້ວມືຢູ່ດ້ານໃນກົງກັບລາຍນິ້ວມືຂອງ **ກ** ກໍມີຄວາມເປັນໄປໄດ້ວ່າ **ກ** ເປັນຜູ້ລັກເພັດເມັດດັ່ງກ່າວ. ແຕ່ສຳລັບຮອຍນິ້ວມືທີ່ພົບເຫັນຢູ່ທາງດ້ານນອກຕູ້ແກ້ວນັ້ນກໍບໍ່ສາມາດກຳນົດໄດ້ວ່າ **ກ** ເປັນຜູ້ລັກເພັດ ເນື່ອງຈາກວ່າ **ກ** ອາດເປັນລູກຄ້າທີ່ເຂົ້າມາໃຊ້ບໍລິການກໍເປັນໄດ້.

ຮ່ອງຮອຍການນຳໃຊ້ເຄື່ອງມືທີ່ພົບເຫັນຢູ່ສະຖານທີ່ເກີດເຫດກົງກັບເຄື່ອງມືທີ່ພົບເຫັນຢູ່ເຮືອນຂອງຜູ້ມີວັດຖຸທີ່ຖືກລັກມາ ສາມາດສັນນິຖານໄດ້ວ່າ ບຸກຄົນດັ່ງກ່າວອາດຈະເປັນຜູ້ກະທຳຜິດ. ໃນກໍລະນີຖ້າຫາກເຄື່ອງມືດັ່ງກ່າວເປັນເຄື່ອງມືທົ່ວໄປການສັນນິຖານກໍຈະຢູ່ໃນລະດັບບໍ່ສູງປານໃດ. ກົງກັນຂ້າມເຄື່ອງມືດັ່ງກ່າວຫາກມີລັກສະນະພິເສດ ການສັນນິຖານກໍຈະຢູ່ໃນລະດັບສູງວ່າບຸກຄົນດັ່ງກ່າວເປັນຜູ້ກະທຳຜິດ.

**4) ປະຫວັດການກະທຳຜິດປະເພດດຽວກັນ**

ເຖິງວ່າ ປະຫວັດການກະທຳຜິດໃນໄລຍະທີ່ຜ່ານມາຈະເປັນການກະທຳຜິດແບບດຽວກັນກັບຄັ້ງນີ້ກໍຕາມ ແມ່ນບໍ່ສາມາດສັນນິຖານໄດ້ເທື່ອວ່າ ຜູ້ກ່ຽວເປັນຜູ້ກະທຳຜິດ. ແຕ່ຖ້າວິທີການ ຫຼື ຮູບການທີ່

ໃຊ້ລັກ ມີລັກສະນະແບບເກົ່າທີ່ຜູ້ກ່າວເຄີຍໃຊ້ກໍ່ເຫດມາກ່ອນ ແລະ ກໍເປັນວິທີທີ່ບຸກຄົນອື່ນກະທຳຕາມໄດ້ຍາກ ຈຶ່ງຈະມີຄວາມເປັນໄປໄດ້ວ່າແມ່ນຜູ້ກ່າວເປັນຜູ້ກໍ່ເຫດ, ແຕ່ຖ້າຫາກວ່າການກະທຳຂອງຜູ້ກ່າວມີລັກສະນະທົ່ວໄປ ກໍຈະບໍ່ສາມາດສັນນິຖານໄດ້ວ່າຜູ້ກ່າວເປັນຜູ້ກະທຳຜິດ.

ນອກຈາກປະເດັນທີ່ຄວນເອົາໃຈໃສ່ໂດຍອີງຕາມຜົນຂອງການຄົ້ນຄວ້າຂໍ້ເທັດຈິງຕາມຂໍ້ II ເທິງນີ້ຍັງມີຂໍ້ເທັດຈິງທາງອ້ອມອື່ນທີ່ຈະພິຈາລະນາ ດັ່ງນີ້:

1) **ໄລຍະເວລາກ່ອນການເກີດເຫດ**

ໃນໄລຍະເວລາກ່ອນການເກີດເຫດ ມີຂໍ້ເທັດຈິງທາງອ້ອມທີ່ຈະນຳມາພິຈາລະນາ ຄື:

- **ຄຳເວົ້າ ແລະ ການກະທຳ ກ່ອນການກໍ່ເຫດ**

ໄລຍະເວລາ ກ່ອນການກໍ່ເຫດ ຜູ້ກ່າວມີການກະທຳແນວໃດ ແລະ ຜູ້ກ່າວໄດ້ມີການກະກຽມກໍ່ເຫດ ຫຼື ບໍ່ ເຊັ່ນ: ຜູ້ຖືກຫາໄດ້ລົມກັບໝູ່ວ່າ ຈະໄດ້ໄປເຮັດສິ່ງໃດສິ່ງໜຶ່ງກ່ອນ ແລ້ວມື້ອື່ນຈະມີເງິນຈຳນວນຫຼາຍເຂົ້າບັນຊີ.

- **ຮູ້ຈັກສະຖານທີ່ເກີດເຫດ ດີ ຫຼື ບໍ່ ?**

ກ່ອນການເກີດເຫດ ຜູ້ກ່າວເຄີຍເປັນພະນັກງານມາກ່ອນ ຫຼື ຮູ້ຈັກໃຜທີ່ເປັນພະນັກງານໃນນັ້ນ ຫຼື ຜູ້ກ່າວໄດ້ມີການໄປສຳຫຼວດສະຖານທີ່ເກີດເຫດມາກ່ອນ ຊຶ່ງສ່ອງແສງໃຫ້ເຫັນວ່າຜູ້ກ່າວຮູ້ຈັກສະຖານທີ່ເກີດເຫດນີ້ເປັນຢ່າງດີ.

- **ແຮງຈູງໃຈ:**

ຜູ້ກ່າວມີຄວາມຕ້ອງການຢາກໄດ້ວັດຖຸດັ່ງກ່າວ ຫຼື ມີບັນຫາທາງດ້ານການເງິນ ຈຶ່ງມີຄວາມຕ້ອງການຢາກໄດ້ວັດຖຸດັ່ງກ່າວໄປຂາຍ ເພື່ອມາໃຊ້ຈ່າຍ ຊຶ່ງເປັນເຫດຈູງໃຈໃຫ້ຜູ້ກ່າວກໍ່ເຫດລັກຊັບ.

2) **ໄລຍະເວລາໃນມື້ເກີດເຫດ**

ໄລຍະເວລາໃນມື້ເກີດເຫດ ມີຂໍ້ເທັດຈິງທາງອ້ອມທີ່ຈະນຳມາພິຈາລະນາ ຄື:

- **ໂອກາດການກະທຳຜິດ:**

ຖ້າຫາກມີຄຳໃຫ້ການຂອງຜູ້ຢູ່ໃກ້ຄຽງສະຖານທີ່ເກີດເຫດ ຫຼື ມີຮູບພາບຈາກກ້ອງວົງຈອນປິດໃນບໍລິເວນໃກ້ຄຽງທີ່ສະແດງໃຫ້ເຫັນວ່າຜູ້ກ່າວໄດ້ຢູ່ໃນສະຖານທີ່ເກີດເຫດໃນມື້ເກີດເຫດນັ້ນ ກໍມີໂອກາດທີ່ຜູ້ກ່າວຈະເປັນຜູ້ກະທຳຜິດ. ແຕ່ຖ້າມີຄຳໃຫ້ການ ຫຼື ມີຮູບພາບຈາກກ້ອງວົງຈອນປິດຈາກສະຖານທີ່ອື່ນທີ່ຢັ້ງຢືນວ່າໃນເວລານັ້ນຜູ້ກ່າວບໍ່ໄດ້ຢູ່ໃກ້ຄຽງສະຖານທີ່ເກີດເຫດກໍມີຄວາມເປັນໄປໄດ້ທີ່ຜູ້ກ່າວຈະບໍ່ເປັນຜູ້ກະທຳຜິດ.

- **ຄວາມສາມາດ ຫຼື ເຕັກນິກພິເສດໃນການກໍ່ເຫດ (ຄວາມສາມາດສະເພາະ)**

ຖ້າຫາກຜູ້ກ່ຽວ ເຄີຍໃຊ້ເຕັກນິກພິເສດທີ່ມີພຽງແຕ່ຜູ້ກ່ຽວເທົ່ານັ້ນສາມາດເຮັດໄດ້ ແລະ ການກະທຳຜິດຄັ້ງນີ້ກໍໄດ້ໃຊ້ເຕັກນິກທີ່ມີລັກສະນະດຽວກັນ ຊຶ່ງສາມາດສັນນິຖານວ່າ ຜູ້ກ່ຽວເປັນຜູ້ກະທຳຜິດ.

**3) ໄລຍະເວລາຫຼັງມື້ເກີດເຫດ**

ໄລຍະເວລາຫຼັງມື້ເກີດເຫດ ມີຂໍ້ເທັດຈິງທາງອ້ອມທີ່ຈະນຳມາພິຈາລະນາ ຄື:

ຖ້າຫາກຄຳເວົ້າ ແລະ ການກະທຳ ຂອງຜູ້ກ່ຽວຫຼັງຈາກມື້ເກີດເຫດເຫັນວ່າ ການໃຊ້ຊີວິດປະຈຳວັນແມ່ນດີຂຶ້ນ ແລະ ຖານະຄວາມເປັນຢູ່ທາງດ້ານຄອບຄົວກໍມີຄວາມແຕກຕ່າງຈາກເມື່ອກ່ອນ ໂດຍທີ່ບໍ່ຮູ້ແຫຼ່ງທີ່ມາຂອງລາຍຮັບ ກໍມີຄວາມເປັນໄປໄດ້ວ່າ ຜູ້ກ່ຽວນັ້ນອາດຈະນຳເອົາວັດຖຸທີ່ລັກມາໄປຂາຍ. ແຕ່ຖ້າຫາກວ່າ ຮູ້ໄດ້ເຖິງແຫຼ່ງທີ່ມາຂອງລາຍຮັບຢ່າງຊັດເຈນ ກໍມີຄວາມເປັນໄປໄດ້ທີ່ຜູ້ກ່ຽວອາດຈະບໍ່ແມ່ນຜູ້ກະທຳຜິດ.

**IV. ຜ່ານການຄົ້ນຄວ້າກ່ຽວກັບປະເດັນທີ່ຄວນເອົາໃຈໃສ່ຕາມຂໍ້ III ຂ້າງເທິງນີ້ແລ້ວ, ຈຶ່ງພິຈາລະນາກ່ຽວກັບບັນຫາທີ່ເຫັນວ່າ ຄວນມີການສືບສວນ-ສອບສວນ ເພີ່ມເຕີມ ເພື່ອເປັນການຢັ້ງຢືນຂໍ້ເທັດຈິງ ທີ່ກ່ຽວຂ້ອງກັບປະ ເດັນດັ່ງກ່າວ ພ້ອມທັງອະທິບາຍວ່າຍ້ອນຫຍັງ ການສືບສວນ-ສອບສວນ ເພີ່ມເຕີມນັ້ນຈຶ່ງມີຄວາມຈຳເປັນ**

➢ **ປະເດັນທີ່ຄວນເອົາໃຈໃສ່ຕາມທີ່ໄດ້ກ່າວໃນຂໍ້ III ຂ້າງເທິງນີ້ ເຫັນວ່າມີຄວາມຈຳເປັນ ຄວນມີການສືບສວນ-ສອບສວນ ເພີ່ມເຕີມເພື່ອເປັນການຢັ້ງຢືນຂໍ້ເທັດຈິງ ດັ່ງນີ້:**

**1) ໄລຍະເວລາການຄອບຄອງວັດຖຸທີ່ຖືກລັກດົນປານໃດ**

ຖ້າຫາກຮູ້ວ່າ **ກ** ໄດ້ຄອບຄອງເພັດເມັດນັ້ນໃກ້ຄຽງກັບມື້ເກີດເຫດ ແລະ ໄດ້ຄອບຄອງມາຕະຫຼອດ ກໍເປັນໄປໄດ້ສູງວ່າ **ກ** ເປັນຜູ້ລັກມາ. ສະນັ້ນ, ຈຶ່ງມີຄວາມຈຳເປັນທີ່ຕ້ອງໄດ້ມີການສືບສວນ-ສອບສວນ ເພີ່ມເຕີມວ່າ **ກ** ໄດ້ຄອບຄອງເພັດຕັ້ງແຕ່ເມື່ອໃດ. ຊຶ່ງຕ້ອງມີການສືບສວນ-ສອບສວນ ເພີ່ມເຕີມ ກ່ຽວກັບຄຳໃຫ້ການຂອງບຸກຄົນທີ່ຮູ້ຈັກກັບ **ກ**

**2) ຄຳໃຫ້ການກ່ຽວກັບການໄດ້ມາ ຂອງວັດຖຸທີ່ຖືກລັກມາ ບໍ່ສົມເຫດສົມຜົນ ( ດ້ວຍວິທີການທີ່ບໍ່ຖືກຕ້ອງ ) ຄວາມສອດຄ່ອງກັນຂອງຄຳໃຫ້ການ.**

ໃນກໍລະນີນີ້ ຜ່ານການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ໃນເບື້ອງຕົ້ນ ເຫັນວ່າ ຄຳໃຫ້ການຂອງ **ກ** ກ່ຽວກັບການໄດ້ມາຂອງເພັດ ແມ່ນບໍ່ສົມເຫດສົມຜົນ. ແຕ່ຖ້າມີການປ່ຽນແປງຄຳໃຫ້ການ ກ່ຽວກັບການໄດ້ມາຂອງເພັດ ກໍສາມາດພິຈາລະນາຄວາມໜ້າເຊື່ອຖືຂອງ

ຄຳໃຫ້ການ ເປັນຕົ້ນ ຖ້າຫາກການປ່ຽນແປງຄຳໃຫ້ການ ບໍ່ສົມເຫດສົມຜົນ ກໍບໍ່ສາມາດເຊື່ອຖືໄດ້.

ສະນັ້ນ, ຈຶ່ງມີຄວາມຈຳເປັນໃນການເອົາຄຳໃຫ້ການຂອງ **ກ** ເພີ່ມເຕີມ ເພື່ອກວດກາກ່ຽວກັບກໍລະນີຂ້າງເທິງນີ້.

**3) ຮ່ອງຮອຍທີ່ພົບເຫັນໃນສະຖານທີ່ເກີດເຫດ ກົງກັບຮ່ອງຮອຍຂອງຜູ້ຖືກສົງໄສ ຫຼື ວັດຖຸສິ່ງຂອງທີ່ຜູ້ຖືກສົງໄສຄອບຄອງ ຫຼື ບໍ່ ?**

ເຖິງວ່າ ຮ່ອງຮອຍໃນສະຖານທີ່ເກີດເຫດຈະເປັນສິ່ງສຳຄັນກໍຕາມ ແຕ່ເນື່ອງຈາກວ່າເຫດການໄດ້ຜ່ານໄປ 8 ເດືອນແລ້ວ ໃນຄວາມເປັນຈິງການລົງໄປເກັບກຳຮ່ອງຮອຍສະຖານທີ່ເກີດເຫດ ແມ່ນດຳເນີນໄດ້ຍາກ.

**4) ປະຫວັດການກະທຳຜິດປະເພດດຽວກັນ**

ຜ່ານການຄົ້ນຄວ້າຢູ່ໃນຄຳຖາມ III ເຫັນວ່າ ມີຄວາມຈຳເປັນຈະຕ້ອງໄດ້ກວດກາເບິ່ງວິທີການກະທຳຜິດທີ່ຜ່ານມາ ວ່າເປັນວິທີການດຽວກັນກັບການກະທຳຜິດຄັ້ງນີ້ ຫຼື ບໍ່.

**5) ໄລຍະເວລາກ່ອນການເກີດເຫດ, ໃນມື້ເກີດເຫດ ແລະ ຫຼັງມື້ເກີດເຫດ**

ຂໍ້ເທັດຈິງທາງອ້ອມທີ່ກຳນົດໄວ້ໃນໄລຍະເວລາກ່ອນເກີດເຫດ, ໃນມື້ເກີດເຫດ ແລະ ຫຼັງເກີດເຫດ ໄດ້ກຳນົດໄວ້ໃນຄຳຖາມຂໍ້ III ຊຶ່ງມີຄວາມຈຳເປັນຕ້ອງໄດ້ ສືບສວນ-ສອບສວນ ເພີ່ມເຕີມ ເພື່ອຊອກຫາຂໍ້ເທັດຈິງດັ່ງກ່າວ.

***<u>ໝາຍເຫດ:</u>*** *ຜົນການຄົ້ນຄວ້າໃນກໍລະນີສຶກສານີ້ ບໍ່ໄດ້ຈຳກັດເນື້ອໃນພຽງແຕ່ເທົ່ານີ້ ຜູ້ທີ່ຈະນຳໃຊ້ເຂົ້າໃນການຮຽນ-ການສອນ, ການຝຶກອົບຮົມ ແລະ ການຄົ້ນຄວ້າວິໄຈ ສາມາດໝູນໃຊ້ໄດ້ຕາມຄວາມເໝາະສົມ ຂອງແຕ່ລະຂົງເຂດ.*

ຄຳຖາມ ແລະ ກໍລະນີສຶກສາ IV

# ການຄາດຕະກຳ
# ທີ່ພິສູດຄວາມເຈດຕະນາຈາກຂໍ້ເທັດຈິງທາງອ້ອມ

## ກໍລະນີສຶກສາ ການຄາດຕະກໍາ
## ທີ່ພິສູດຄວາມເຈດຕະນາຈາກຂໍ້ເທັດຈິງທາງອ້ອມ

ໃນຕອນເຊົ້າ ວັນທີ 5 ກຸມພາ 2019 ພາຍໃນເຮືອນຂອງ **ກ** ຢູ່ນະຄອນຫຼວງວຽງຈັນ, **ກ** ໄດ້ເຫັນລູກສາວ ຊື່ **ຂ** ອາຍຸ 15 ປີ ທີ່ກັບມາຈາກການໄປນອນຄ້າງຄືນຢູ່ເຮືອນໝູ່ໂດຍບໍ່ໄດ້ຮັບອະນຸຍາດ, ເຮັດໃຫ້ **ກ** ຮ້ອງໃສ່ **ຂ** ສ່ວນຂ ກໍເວົ້າສວນກັບໄປ ທັງສອງກໍໄດ້ໂຕ້ຖຽງກັນ.

ໃນຂະນະທີ່ **ກ** ແລະ **ຂ** ໂຕ້ຖຽງກັນ **ກ** ໃຈຮ້າຍ ຈຶ່ງດຶກມີດໃສ່ **ຂ** ທີ່ກໍາລັງຍ່າງ ປີ່ນຫຼັງຢູ່ ຊຶ່ງມີດໄດ້ຖືກສ່ວນຫຼັງຂອງຫົວ **ຂ** ເຮັດໃຫ້ **ຂ** ເສຍຊີວິດ.

**ກ** ຖືກເຈົ້າໜ້າທີ່ຕໍາຫຼວດຈັບຕົວ ແລະ ເອົາຄໍາໃຫ້ການ, ແຕ່ລາວໄດ້ໃຫ້ການຕະຫຼອດມາວ່າ (ບໍ່ໄດ້ມີເຈດຕະນາທີ່ຈະຂ້າ **ຂ**, ຄິດວ່າຊິເຮັດຊູ່ລາວຊື່ໆ ເລີຍດຶກມີດ ແນເປົ້າໄປໃສ່ທາງຂ້າງລາວ ແຕ່ມັນບໍ່ໄປຕາມເປົ້າທີ່ແນ ໂຊກບໍ່ດີເຮັດໃຫ້ມີດກົງໄປໃສ່ສ່ວນຫຼັງຫົວຂອງ **ຂ** ຈົນເສຍຊີວິດ.)

ຜ່ານການຄົ້ນຄວ້າ ຂອງພະນັກງານໄອຍະການ ຊຶ່ງມີຫຼັກຖານຢັ້ງຢືນວ່າ **ກ** ໄດ້ມີການກະທໍາຜິດ, ດັ່ງນັ້ນຫົວໜ້າອົງການໄອຍະການຈຶ່ງສັ່ງຟ້ອງ **ກ** ໃນຂໍ້ກ່າວຫາ ການຄາດຕະກໍາ ຕາມມາດຕາ 188 ຂອງປະມວນກົດໝາຍອາຍາ ພ້ອມທັງສົ່ງສໍານວນຄະດີໃຫ້ສານພິຈາລະນາ.

<u>**ຫຼັກຖານທີ່ເຈົ້າໜ້າທີ່ຕໍາຫຼວດ ແລະ ພະນັກງານໄອຍະການຮວບຮວມມາໄດ້ ປະກອບມີ:**</u>

① **ກ** ມີລູກຄົນດຽວກໍຄື **ຂ, ກ** ຮັກ ແລະ ແພງ **ຂ** ຕະຫຼອດມາ ແລະ ປາດຖະໜາໃຫ້ **ຂ** ຈົບໂຮງຮຽນມໍປາຍ, ແຕ່ໃນຊ່ວງເດືອນ ມັງກອນ 2019 **ຂ** ມັກໄປນອນຄ້າງຄືນຢູ່ເຮືອນໝູ່ ໂດຍບໍ່ໄດ້ຮັບອະນຸຍາດ ແລະ ຂາດໂຮງຮຽນ, ຜ່ານມາ **ກ** ໄດ້ເຕືອນ **ຂ** ຫຼາຍຄັ້ງວ່າໃຫ້ໄປໂຮງຮຽນ ແລະ ບໍ່ໃຫ້ໄປນອນຄ້າງຄືນຢູ່ເຮືອນໝູ່ອີກ.

② ຖ້າໄດ້ດື່ມເຫຼົ້າແລ້ວ **ກ** ຈະມີນິດໄສທີ່ຮຸນແຮງ, ໃນເວລາທີ່ດື່ມເຫຼົ້າ ບໍ່ວ່າຈະເລື່ອງເລັກໆນ້ອຍໆກໍຕາມ ຖ້າຫາກບໍ່ເປັນໄປຕາມສິ່ງທີ່ລາວຄິດໄວ້ແລ້ວ ກໍມັກຈະເວົ້າວ່າ (ຊິຂ້າຖິ້ມ), ມັກໃຊ້ຄວາມຮຸນແຮງກັບເມຍ ແລະ ກໍມັກດຶກເຄື່ອງຂອງຄົວເຮືອນຕ່າງໆ.

③ ເມື່ອເຂົ້າສູ່ຊ່ວງ ເດືອນ ມັງກອນ 2019 ໃນເວລາທີ່ **ກ** ດື່ມເຫຼົ້າແລ້ວກໍໃຈຮ້າຍ ລາວມັກໃຊ້ຄວາມຮຸນແຮງດຶກມີດໃສ່ຕີນເມຍ ແລະ ກໍໃຊ້ຄໍາເວົ້າຮຸນແຮງກັບ **ຂ** ວ່າ (ຊິຂ້າຖິ້ມ) ແຕ່ ລາວກໍບໍ່ເຄີຍໃຊ້ຄວາມຮຸນແຮງທຸບຕີ ຫຼື ດຶກມີດໃສ່ລູກສາວແຕ່ຢ່າງໃດ.

④ ໃນຄືນ ວັນທີ 4 ກຸມພາ 2019, **ກ** ເຫັນ **ຂ** ກໍາລັງອອກໄປຈາກເຮືອນ ເພື່ອໄປນອນຄ້າງຄືນນອກບ້ານ, ເຖິງວ່າ **ກ** ຈະໄດ້ເຕືອນອີກເທື່ອໜຶ່ງວ່າ ໃຫ້ໄປໂຮງຮຽນ ແລະ ບໍ່ໃຫ້ໄປນອນຄ້າງຄືນຢູ່ເຮືອນ

ໝູ່ອີກກໍຕາມ ແຕ່ **ຂ** ກໍບໍ່ບອກວ່າຈະໄປໃສ ແລະ ກໍອອກໄປຈາກເຮືອນ, ເຮັດໃຫ້ **ກ** ໃຈຮ້າຍເລີຍດື່ມເຫຼົ້າ ແລະ ກໍເວົ້າປ້ອຍດ່າໃສ່ເມຍ ຫຼັງຈາກນັ້ນ ກໍນອນຫຼັບໄປ.

⑤ ພໍຕື່ນຂຶ້ນມາຕອນ 7:00 ໂມງເຊົ້າ ຂອງວັນທີ 5 ກຸມພາ 2019 **ກ** ກໍດື່ມເຫຼົ້າຂາວແບບບໍ່ປົນນໍ້າເລີຍ 3 ຈອກ.

⑥ ເມື່ອຮອດເວລາປະມານ 8:00 ໂມງເຊົ້າ ຂອງວັນທີ 5 ກຸມພາ 2019 ຂ ກໍກັບມາບ້ານ, **ກ** ໄດ້ຮ້ອງໃສ່ **ຂ** ວ່າ (ໄປໃສມາ), (ຄັນບໍ່ຕອບມຶງບໍ່ແມ່ນລູກກູ), (ອອກໄປຈາກ ເຮືອນນີ້), (ຊິຂ້າຖິ້ມ) ຫຼັງຈາກນັ້ນ **ຂ** ກໍເວົ້າສວນກັບໄປຄືນ (ໝວກຣູ, ພໍ່ຜີບ້າ) ເຮັດໃຫ້ທັງສອງຜິດຖຽງກັນ.

⑦ **ກ** ໄດ້ເອົາມີດຢູ່ເຮືອນຄົວອອກມາ ກໍາລັງຊິດຶກ ໄປໃສ່ **ຂ** ພໍດີເມຍເຫັນ ກໍໄດ້ຍາດມີດນໍາມືຂອງ **ກ** ພ້ອມທັງຮ້ອງໃສ່ **ຂ** ໜີໄປ, **ຂ** ກໍໂດດອອກໄປທາງສວນ.

⑧ **ກ** ໄດ້ດຶກເຄື່ອງນຸ່ງຂອງ **ຂ** ທີ່ມີຢູ່ໃນເຮືອນອອກໄປ ຫຼັງຈາກນັ້ນ ກໍໄປໄດ້ມີດມາອີກບາດໜຶ່ງ ແລະ ກໍອອກໄປສວນພ້ອມທັງເວົ້າວ່າ (ຊິຂ້າຖິ້ມ), ເມຍກໍຮ້ອງອີກເທື່ອໜຶ່ງໃສ່ **ຂ** ທີ່ຢູ່ແຖວປະຕູວ່າ (ໜີໄປ).

⑨ ຫຼັງຈາກທີ່ **ຂ** ອອກໄປທາງສວນແລ້ວ ກໍຍ່າງໄປແຖວປະຕູ ລາວກໍໄດ້ນັ່ງຢູ່ເທິງກ້ອນຫີນບຶດໜຶ່ງ ແຕ່ລາວໄດ້ຍິນສຽງຮ້ອງຂອງແມ່ວ່າ (ໜີໄປ) ລາວກໍລຸກຂຶ້ນແລ້ວເລີ່ມຍ່າງໄປທາງປະຕູ.

⑩ **ກ** ກໍໄລ່ອອກໄປສວນ ທັນໃດນັ້ນກໍໄດ້ດຶກມີດທີ່ຖືຢູ່ ດ້ວຍມືຂວາຂ້າງທີ່ຖະໜັດ ໄປທາງ **ຂ** ທີ່ປິ່ນຫຼັງໃສ່ **ກ** ໃນໄລຍະຫ່າງຈາກບ່ອນທີ່ **ຂ** ຢູ່ປະມານ 5 ແມັດ.

⑪ ມີດທີ່ **ກ** ດຶກໄປນັ້ນ ສຽບເຂົ້າທາງຫຼັງຂອງຫົວ **ຂ** ຫຼັງຈາກນັ້ນ ມີດກໍຫຼົ່ນລົງພື້ນ. **ຂ** ໄດ້ເອົາສອງມືຈັບຫົວຂອງລາວໄວ້ ແລ້ວກໍແລ່ນອອກປະຕູໄປ.

⑫ **ກ** ໄດ້ແລ່ນນໍາຫຼັງ **ຂ** ອອກໄປ ແລະ ພາຍຫຼັງທີ່ເຫັນ **ຂ** ແລ່ນເຂົ້າໄປໃນເຮືອນໝູ່ຂອງ **ຂ** ທີ່ຢູ່ຫ່າງຈາກເຮືອນ **ກ** 100 ແມັດ, **ກ** ກໍເລີຍເຊົາແລ່ນຕາມ **ຂ** ແລ້ວກໍກັບເຂົ້າເຮືອນ.

⑬ **ຂ** ຖືກນໍາສົ່ງໄປໂຮງໝໍດ້ວຍລົດໂຮງໝໍ ທີ່ໝູ່ຂອງລາວເອີ້ນມາ ແຕ່ຕໍ່ມາລາວກໍເສຍຊີວິດຍ້ອນມີດທີ່ສຽບເຂົ້າສ່ວນຫຼັງຫົວ ໃນເວລາປະມານ 12:00 ໂມງ ຂອງວັນທີ 5 ກຸມພາ 2019.

⑭ ມີດທີ່ໃຊ້ໃນຄະດີນີ້ ມີຄວາມຍາວ 13 ຊມ ມີນໍ້າໜັກປະມານ 170 ກລາມ.

# ຄຳຖາມ

1. ສະພາບການແນວໃດ ຈຶ່ງສາມາດເວົ້າໄດ້ວ່າມີ "ເຈດຕະນາ" ຄາດຕະກຳ ຕາມທີ່ກຳນົດໄວ້ໃນມາດຕາ 188 ຂອງປະມວນກົດໝາຍອາຍາ. ໃນກໍລະນີມີຫຼາຍທິດສະດີໃນການຕີຄວາມໝາຍ ກໍຈົ່ງອະທິບາຍເນື້ອໃນຂອງທຸກທິດສະດີ ?

2. ສຳລັບຄະດີທົ່ວໄປທີ່ຈຳເລີຍປະຕິເສດວ່າບໍ່ມີເຈດຕະນາຄາດຕະກຳນັ້ນ, ປະເດັນທີ່ຄວນເອົາໃຈໃສ່ໃນການກຳນົດເຫດການຂໍ້ເທັດຈິງວ່າຈຳເລີຍດັ່ງກ່າວມີເຈດຕະນາຄາດຕະກຳ ຫຼື ບໍ່ນັ້ນ ແມ່ນຫຍັງ ?

3. ຜ່ານການຄົ້ນຄວ້າ ກ່ຽວກັບ ປະເດັນທີ່ຄວນເອົາໃຈໃສ່ຕາມຂໍ້ 2 ຂ້າງເທິງນີ້ແລ້ວ, ໃນຄະດີຕົວຢ່າງນີ້ສາມາດກຳນົດວ່າ **ກ** ມີເຈດຕະນາຄາດຕະກຳ **ຂ** ໄດ້ ຫຼື ບໍ່ ? ຈົ່ງອະທິບາຍ ທັງກໍລະນີ ທີ່ກຳນົດໄດ້ ແລະ ກຳນົດບໍ່ໄດ້.

4. ສຳລັບຂໍ້ 3 ຂ້າງເທິງນີ້, ໃນກໍລະນີທີ່ບໍ່ສາມາດກຳນົດໄດ້ວ່າ **ກ** ມີເຈດຕະນາຄາດຕະກຳ **ຂ**, ຈະເປັນການກະທຳຜິດໃນສະຖານໃດ ພ້ອມທັງອະທິບາຍເຫດຜົນ.

5. ໃນກໍລະນີສຶກສານີ້ ມີປະເດັນທີ່ເຫັນວ່າຄວນ ມີການສືບສວນ-ສອບສວນ ເພີ່ມເຕີມ ຫຼື ບໍ່ ? ຖ້າມີ, ຈົ່ງອະທິບາຍປະເດັນດັ່ງກ່າວພ້ອມທັງໃຫ້ເຫດຜົນ.

## I. ສະພາບການແນວໃດ ຈຶ່ງສາມາດເວົ້າໄດ້ວ່າມີ "ເຈດຕະນາ" ຄາດຕະກຳຕາມທີ່ກຳນົດໄວ້ ໃນ ມາດຕາ 188 ຂອງປະມວນກົດໝາຍອາຍາ ໃນກໍລະນີ ມີຫຼາຍທິດສະດີ ໃນການຕີຄວາມໝາຍ ກໍຈີ່ງອະທິບາຍເນື້ອ ໃນ ຂອງ ທຸກທິດສະດີ:

ການຄາດຕະກຳ ທີ່ໄດ້ກຳນົດໄວ້ໃນ ມາດຕາ 188 ຂອງປະມວນກົດໝາຍອາຍາ ໃນອົງປະກອບທາງດ້ານອັດຕະວິໄສແມ່ນ "ເຈດຕະນາ" ຈຶ່ງຖືວ່າເປັນການຄາດຕະກຳ ແລະ ການກະທຳຜິດ ຫຼື ການເມີນເສີຍຂອງຕົນນັ້ນ ເປັນອັນຕະລາຍຕໍ່ສັງຄົມ ແລະ ກໍຄາດຄະເນໄດ້ເຖິງຜົນສະທ້ອນຂອງມັນ ແຕ່ຈິງໃຈເຮັດ ຫຼື ປະປ່ອຍໃຫ້ມັນເກີດຂຶ້ນ. ຊຶ່ງກົງກັບ ມາດຕາ 14 ຂອງປະມວນກົດໝາຍອາຍາ. ການກະທຳຜິດໂດຍເຈດຕະນາ ແມ່ນການກະທຳ ຫຼື ການເມີນເສີຍ ຊຶ່ງຜູ້ກະທຳຜິດຮູ້ວ່າ ການກະທຳ ຫຼື ການເມີນເສີຍ ຂອງຕົນ ເປັນອັນຕະລາຍຕໍ່ສັງຄົມ ແລະ ກໍຄາດຄະເນໄດ້ເຖິງຜົນສະທ້ອນຂອງມັນ ແຕ່ຈິງໃຈເຮັດ ຫຼື ປະປ່ອຍໃຫ້ເກີດຂຶ້ນ. ດັ່ງນັ້ນ ກ່ອນອື່ນໝົດຕ້ອງມີຄວາມເຂົ້າໃຈ ກ່ຽວກັບ "ເຈດຕະນາ" ແລະ ໃນມາດຕາ 14 ອົງປະກອບ ຂອງເຈດຕະນາແມ່ນ ຄວາມຮັບຮູ້ ແລະ ຄວາມຕັ້ງໃຈເຮັດ ຂອງຜູ້ກະທຳຜິດ ຊຶ່ງປະກອບດ້ວຍ 2 ຢ່າງຄື:

1. ຮັບຮູ້ວ່າຕົນເອງກຳລັງເຮັດຫຍັງຢູ່ ແລະ ຄາດຄະເນໄດ້ເຖິງຜົນສະທ້ອນຂອງມັນທີ່ຈະເກີດຂຶ້ນ;
2. ຮັບຮູ້ວ່າເປັນອັນຕະລາຍ ແຕ່ຍັງຈິງໃຈກະທຳ ຫຼື ຕ້ອງການກະທຳ.

➢ **ຂອບເຂດ ຂອງ ການວິເຄາະວ່າແມ່ນເຈດຕະນາ ມີດັ່ງນີ້:**

- **<u>ຮູບແບບທີ 1:</u>** ໃນກໍລະນີ ອົງປະກອບ 1 (ສູງ) ແລະ ອົງປະກອບ 2 (ສູງ) ຄືກັນ ໝາຍຄວາມວ່າ ສາມາດຄາດຄະເນໄດ້ເຖິງຜົນສະທ້ອນ ມີຄວາມເປັນອັນຕະລາຍສູງ ແລະ ມີຄວາມເປັນໄປໄດ້ສູງ ທີ່ມັນຈະເກີດຂຶ້ນ, ແຕ່ກໍຍັງຈິງໃຈກະທຳໃຫ້ມັນເກີດຂຶ້ນ.

  **<u>ຕົວຢ່າງ:</u>** **A** ຊັງ **B** ແລະ ຕ້ອງການຂ້າ **B** ໃຫ້ໄດ້ຈຶ່ງໄດ້ເອົາມີດມາແທງໃສ່ເອິກເບື້ອງຊ້າຍຂອງ **B** ແລະ ເຮັດໃຫ້ເສຍຊີວິດ. **A** ແມ່ນມີເຈດຕະນາຄາດຕະກຳ **B**.

- **<u>ຮູບແບບທີ 2:</u>** ໃນກໍລະນີ ອົງປະກອບ 2 (ສູງ) ແຕ່ອົງປະກອບ 1 (ຕ່ຳ) ໝາຍຄວາມວ່າ ຮັບຮູ້ ແລະ ຄາດຄະເນໄດ້ເຖິງຜົນສະທ້ອນທີ່ຈະເກີດຂຶ້ນ ແມ່ນບໍ່ອັນຕະລາຍຫຼາຍ, ແຕ່ມີຄວາມຕ້ອງການ ຢາກໃຫ້ຜົນສະທ້ອນດັ່ງກ່າວເກີດຂຶ້ນສູງ.

  **<u>ຕົວຢ່າງ:</u>** **A** ບໍ່ຮູ້ວິທີໃຊ້ປືນ ແລະ ຍິງປືນບໍ່ເກັ່ງ (ບໍ່ແມ່ນ). ແຕ່ **A** ຊັງ **B** ເລີຍຄິດຢາກຂ້າ ຈຶ່ງໄດ້ແນປືນ ແລ້ວຍິງໃສ່ **B** ທີ່ຢືນຢູ່ຫ່າງກັນ 50 ແມັດ ຊຶ່ງຜູ້ກ່ຽວບໍ່ໝັ້ນໃຈວ່າຈະສາມາດຍິງ **B** ຖືກ ຫຼື ບໍ່? ແຕ່ເຮັດໃຫ້ລູກປືນໄປຖືກ **B** ເສຍຊີວິດ. ສະນັ້ນ, ເຫັນວ່າການກະທຳຂອງ **A** ເປັນການກະທຳໂດຍເຈດຕະນາ.

- **<u>ຮູບແບບທີ 3:</u>** ໃນກໍລະນີ ອົງປະກອບ 1 (ສູງ) ແຕ່ອົງປະກອບ 2 (ຕໍ່າ) ໝາຍຄວາມວ່າ ຮັບຮູ້ ແລະ ຄາດຄະເນໄດ້ເຖິງຜົນສະທ້ອນມັນ ເປັນອັນຕະລາຍສູງ ຊຶ່ງມີຄວາມຕ້ອງການ ຢາກໃຫ້ຜົນດັ່ງກ່າວ ເກີດຂຶ້ນນັ້ນຕໍ່າ. ແຕ່ຖ້າຫາກເກີດຂຶ້ນກໍບໍ່ເປັນຫຍັງ ຍອມຮັບຕໍ່ຜົນດັ່ງກ່າວ.

  **<u>ຕົວຢ່າງ:</u> A** ມີຄວາມຕ້ອງການເງິນປະກັນໄພ **A** ໄດ້ຈູດເຮືອນຂອງລາວ ໂດຍທີ່ຮູ້ວ່າ ນ້ອງຊາຍຂອງລາວນອນຢູ່ຫ້ອງນອນໃນເຮືອນນັ້ນ ຈຶ່ງເຮັດໃຫ້ເສຍຊີວິດຢູ່ໃນກອງໄຟນັ້ນ. ສະນັ້ນ, ເຖິງວ່າ **A** ແມ່ນມີເຈດຕະນາຈູດເຮືອນ ເພື່ອຕ້ອງການພຽງແຕ່ເງິນປະກັນໄພຢ່າງດຽວ ແຕ່ບໍ່ຕ້ອງການໃຫ້ນ້ອງຊາຍເສຍຊີວິດກໍຕາມ. ແຕ່ການເສຍຊີວິດ ຂອງນ້ອງຊາຍ ແມ່ນເປັນຜົນໂດຍທາງອ້ອມ ນັ້ນຖືວ່າເປັນ "ການຄາດຕະກໍາ".

- **<u>ຮູບແບບທີ 4:</u>** ໃນກໍລະນີ ອົງປະກອບ 1 ແລະ ອົງປະກອບ 2 (ທັງສອງ ຕໍ່າ) ໝາຍຄວາມວ່າ ຮັບຮູ້ ແລະ ຄາດຄະເນໄດ້ເຖິງຜົນສະທ້ອນທີ່ຈະເກີດຂຶ້ນ ແມ່ນບໍ່ອັນຕະລາຍຫຼາຍ ຊຶ່ງມີຄວາມຕ້ອງການ ຢາກໃຫ້ຜົນດັ່ງກ່າວເກີດຂຶ້ນນັ້ນຕໍ່າ. ແຕ່ຖ້າຫາກເກີດຂຶ້ນກໍບໍ່ເປັນຫຍັງ ຍອມຮັບຕໍ່ຜົນດັ່ງກ່າວ.

  **<u>ຕົວຢ່າງ:</u> A** ໄດ້ໄປຮ່ວມງານພົບປະສ້າງສັນນໍາໝູ່ ປະມານ 30 ຄົນ ໂດຍບໍ່ໄດ້ໃສ່ໃຈ ໃນການປ້ອງກັນຕົນເອງ ຈາກການຕິດເຊື້ອພະຍາດ ໂຄວິດ-19, ຫຼັງຈາກນັ້ນ 1 ມື້ **A** ໄດ້ຍິນຂ່າວວ່າ ມີຜູ້ມາຮ່ວມງານໜຶ່ງຄົນ ຕິດເຊື້ອພະຍາດ ໂຄວິດ-19 ແລະ **A** ກໍມີອາການບໍ່ສະບາຍ ແຕ່ຜູ້ກ່ຽວກໍຍັງໄປເຮັດວຽກປົກກະຕິ ຕໍ່ມາຜົນກວດ ຂອງ **A** ອອກມາເປັນບວກ, ຫຼັງຈາກນັ້ນ ປະມານ 4 ມື້ ເພື່ອນຮ່ວມງານຂອງຜູ້ກ່ຽວ ກໍສະແດງອາການ ແລະ ໄດ້ຕິດເຊື້ອພະຍາດ ໂຄວິດ-19 ຈາກ **A**.

## II. ສໍາລັບຄະດີທົ່ວໄປຈໍາເລີຍປະຕິເສດວ່າ ບໍ່ມີເຈດຕະນາຄາດຕະກໍານັ້ນ, ປະເດັນທີ່ຄວນເອົາໃຈໃສ່ ໃນການກໍານົດເຫດການຕົວຈິງວ່າ ຈໍາເລີຍມີເຈດຕະນາ ຄາດຕະກໍາ ຫຼື ບໍ່:

ໃນກໍລະນີ ທີ່ຈໍາເລີຍໄດ້ປະຕິເສດວ່າ: "ບໍ່ເຈດຕະນາຄາດຕະກໍາ" ກໍສະແດງວ່າ ບໍ່ມີຫຼັກຖານທາງກົງ ຊຶ່ງມີພຽງແຕ່ຫຼັກຖານທາງອ້ອມ ທີ່ຈະມາກໍານົດວ່າ ຜູ້ກ່ຽວມີເຈດຕະນາ ຫຼື ບໍ່ ນັ້ນປະເດັນທີ່ຄວນເອົາໃຈໃສ່ ໃນການຄົ້ນຄ້ວາພິຈາລະນາໃນກໍລະນີນີ້ ມີ: ເວລາເກີດເຫດ, ກ່ອນການເກີດເຫດ ແລະ ຫຼັງການເກີດເຫດ.

### 1. ເວລາເກີດເຫດ:

ໃນການພິຈາລະນາ ການກໍານົດຂໍ້ເທັດຈິງ ໄລຍະເວລາກໍ່ເຫດ ແມ່ນເປັນພື້ນຖານທີ່ສໍາຄັນທີ່ສຸດ ແລະ ສິ່ງທີ່ຄວນເອົາໃຈໃສ່ ໃນໄລຍະເວລາເກີດເຫດ ມີ:

- **ອາວຸດທີ່ນຳໃຊ້ກໍ່ເຫດແມ່ນຫຍັງ?**

ໃນເວລາກໍ່ເຫດ "ອາວຸດ" ທີ່ນຳໃຊ້ເຂົ້າໃນການກໍ່ເຫດ ກໍເປັນສິ່ງໜຶ່ງທີ່ເຮົາຕ້ອງມານຳມາພິຈາລະນາ ເຊັ່ນ: ມີດ, ປືນ , ເຊືອກ ຫຼື ວັດຖຸສິ່ງຂອງອື່ນໆ ຖ້າມີການນຳໃຊ້ເປັນອາວຸດ ແລະ ມີຄວາມສາມາດເຮັດໃຫ້ຄົນອື່ນເສຍຊີວິດໄດ້ສູງ ນັ້ນກໍຖືວ່າເປັນການຄາດຕະກຳ.

- **ວິທີການໃຊ້ອາວຸດ ?**

ວິທີການນຳໃຊ້ອາວຸດ ແມ່ນມີລັກສະນະ ທີ່ສ່ອງແສງໃຫ້ເຫັນວ່າ ຜູ້ກະທຳໄດ້ມີເຈດຕະນາ ຫຼື ບໍ່ ໃນການຄາດຕະກຳ ແລະ ວິທີການນຳໃຊ້ອາວຸດ ເປັນສິ່ງທີ່ສຳຄັນ ຊຶ່ງໃຊ້ວິທີໃດຈຶ່ງເຮັດໃຫ້ຄົນເສຍຊີວິດ.

**<u>ຕົວຢ່າງ:</u>** " ເຊືອກ" ຊຶ່ງເປັນສິ່ງຂອງ ທີ່ນຳໃຊ້ທົ່ວໄປ ແຕ່ຖ້ານຳໃຊ້ເພື່ອຄາດຕະກຳ ກໍເຮັດໃຫ້ຄົນເສຍຊີວິດໄດ້ເຊັ່ນກັນ

- **ບາດແຜຢູ່ຈຸດໃດຂອງຮ່າງກາຍ?**

ຈຸດບາດແຜ ແມ່ນປະເດັນໜຶ່ງ ທີ່ບົ່ງບອກວ່າ ຜູ້ກະທຳຜິດມີເຈດຕະນາ ຫຼື ບໍ່? ຖ້າຫາກວ່າບາດແຜຢູ່ຈຸດທີ່ສຳຄັນ ຫຼື ຈຸດທີ່ສາມາດເຮັດໃຫ້ເສຍຊີວິດໄດ້ນັ້ນ ແມ່ນຖືວ່າມີເຈດຕະນາ ແລະ ເປັນການຄາດຕະກຳ, ແຕ່ຖ້າຈຸດບາດແຜຢູ່ ແຂນ, ຂາ ຈຸດທີ່ບໍ່ສຳຄັນ ກໍໝາຍຄວາມວ່າ ຜູ້ກະທຳແມ່ນບໍ່ໄດ້ເຈດຕະນາ.

**<u>ຕົວຢ່າງ:</u>** **A** ເອົາພ້າໄລ່ຟັນ **B** ແຕ່ຍ້ອນ **B** ຫຼົບເກັ່ງ ຈຶ່ງບໍ່ໄດ້ຖືກຈຸດສຳຄັນ ເຖິງ **A** ຈະປະຕິເສດວ່າ ບໍ່ເຈດຕະນາກໍຕາມ ນັ້ນກໍສາມາດພິຈາລະນາໄດ້ວ່າ ເປັນການຄາດຕະກຳ

- **ລະດັບຄວາມຮຸນແຮງຂອງບາດແຜເປັນແນວໃດ?**

ເຮົາສາມາດເວົ້າໄດ້ວ່າ ຄວາມຮຸນແຮງຂອງບາດແຜ ກໍເປັນສ່ວນໜຶ່ງໃນການພິຈາລະນາ ຊຶ່ງບາດແຜ ແມ່ນມູມມອງ ທາງດ້ານພາວະວິໄສ ທີ່ສະແດງໃຫ້ເຫັນວ່າ ເປັນການຄາດຕະກຳ ຫຼື ບໍ່ ແລະ ມັນໄດ້ມີການກ່ຽວພັນກັບ ອາວຸດ ກັບ ວິທີການນຳໃຊ້ອາວຸດ.

**<u>ຕົວຢ່າງ</u>**: ໃຊ້ມີດແທງເຂົ້າຢ່າງແຮງ ເຖິງວ່າ ບາດແຜຈະບໍ່ເລິກຮອດ 15 ຊມ ກໍຕາມ ແຕ່ການແທງແບບຮຸນແຮງ ມັນກໍສາມາດເປັນເຈດຕະນາໄດ້.

**2. ໄລຍະເວລາກ່ອນການເກີດເຫດ:**

ແຮງຈູງໃຈ ແມ່ນສິ່ງທີ່ພາໃຫ້ ຫຼື ຊຸກຍູ້ໃຫ້ ຄົນເຮົາກະທຳສິ່ງໃດສິ່ງໜຶ່ງ, ແຕ່ບາງກໍລະນີ ຄົນເຮົາອາດມີແຮງຈູງໃຈ ໃນການກະທຳສິ່ງໃດສິ່ງໜຶ່ງ ໂດຍທີ່ຕົນບໍ່ເຄີຍໄດ້ກະທຳສິ່ງນັ້ນມາກ່ອນ

ເລີຍ ແລະ ສາເຫດທີ່ເຮັດໃຫ້ຜູ້ກະທຳຜິດເກີດແຮງຈູງໃຈ ທີ່ຈະກະທຳນັ້ນ ອາດແມ່ນບຸກຄົນທີ່ຮູ້ຈັກ ຫຼື ບໍ່ຮູ້ຈັກ.

**<u>ຕົວຢ່າງ:</u> A** ຕ້ອງການຢາກຂ້າຄົນ ພົບເຫັນຜູ້ໃດມາແມ່ນຂ້າໝົດ ຊຶ່ງ **A** ບໍ່ໄດ້ມີແຮງຈູງໃຈຜູ້ໃດຜູ້ໜຶ່ງ ໂດຍສະເພາະເຈາະຈົງ ພຽງແຕ່ແຮງຈູງໃຈຂອງ **A** ແມ່ນຢາກຂ້າຄົນ ແມ່ນໃຜກໍໄດ້ທີ່ຕົນໄດ້ພົບເຫັນ.

**3. ຫຼັງເກີດເຫດ:**

ເຖິງວ່າ ຜູ້ກະທຳຜິດ ຈະປະຕິເສດກໍຕາມ ກໍຖືເປັນເຫດຜົນອັນໜຶ່ງ ທີ່ໃຫ້ນຳມາພິຈາລະນາ ຊຶ່ງການກະທຳ ຫຼັງຈາກກໍ່ເຫດ ແມ່ນເປັນອົງປະກອບໜຶ່ງ ທີ່ຈະສະແດງເຖິງ "ຄວາມມີເຈດຕະນາ ຫຼື ບໍ່" ເຊັ່ນ: ຫຼັງກໍ່ເຫດແລ້ວ ຜູ້ກະທຳແມ່ນໄດ້ເຄື່ອນໄຫວຫຍັງແດ່? ເຮັດຫຍັງແດ່?

**<u>ຕົວຢ່າງ:</u>** ຫຼັງຈາກກໍ່ເຫດແລ້ວ ຜູ້ກະທຳໄດ້ຕົກໃຈ ຕໍ່ການກະທຳຂອງຕົນ ແລະ ຟ້າວໂທຫາລົດໂຮງໝໍມາຮັບເອົາໄປໂຮງໝໍ ນັ້ນສະແດງໃຫ້ເຫັນວ່າ ຜູ້ກະທຳ ແມ່ນບໍ່ໄດ້ມີເຈດຕະນາຄາດຕະກຳ, ແຕ່ກົງກັນຂ້າມ ຖ້າຫຼັງຈາກກໍ່ເຫດແລ້ວ ຜູ້ກະທຳບໍ່ໄດ້ສົນໃຈ ແລ້ວປະຖິ້ມໄປ ນີ້ຖືວ່າ ມີເຈດຕະນາ ຄາດຕະກຳ.

**III. ຜ່ານການຄົ້ນຄ້ວາປະເດັນທີ່ຄວນເອົາໃຈໃສ່ຕາມຂໍ້ 2 ຂ້າງເທິງນີ້ແລ້ວ. ໃນຄະດີຕົວຢ່າງນີ້ສາມາດກຳນົດວ່າ ກ ມີເຈດຕະນາຄາດຕະກຳ ຂ ຫຼື ບໍ່ ? ຈົ່ງອະທິບາຍ ທັງກໍລະນີທີ່ກຳນົດໄດ້ ແລະ ກຳນົດບໍ່ໄດ້ ?**

➢ **ໃນກໍລະນີທີ່ ກຳນົດວ່າ ກ ມີເຈດຕະນາ ຄາດຕະກຳ ຂ:**

**1) ໄລຍະເວລາກໍ່ເຫດ:**

- ອາວຸດທີ່ **ກ** ນຳໃຊ້ໃນການກໍ່ເຫດແມ່ນ "ມີດ" ຊຶ່ງມີຄວາມຍາວ 13 ຊມ, ມີນ້ຳໜັກ 170 ກຣາມ ມີຄວາມສາມາດຂ້າຄົນໄດ້.
- **ກ** ໄດ້ດຶກມີດໃສ່ **ຂ** ດ້ວຍມືຂວາທີ່ຖະໜັດ ໃນໄລຍະຫ່າງປະມານ 5 ແມັດ ມີຄວາມເປັນໄປໄດ້ ທີ່ເຮັດໃຫ້ມີດສຽບເຂົ້າເລິກລົງໄປ. ຕໍ່ກັບການກະທຳຂອງ **ກ** ເປັນອັນຕະລາຍ ຊຶ່ງສາມາດເຮັດໃຫ້ບຸກຄົນອື່ນ ໄດ້ຮັບບາດເຈັບ ຫຼື ເສຍຊີວິດໄດ້.
- ຈຸດທີ່ຖືກມີດສຽບ ແມ່ນທາງດ້ານຫຼັງຂອງທ້ອງ **ຂ** ຊຶ່ງເປັນຈຸດທີ່ອັນຕະລາຍ ສາມາດໃຫ້ເຮັດໃຫ້ **ຂ** ເສຍຊີວິດໄດ້.

ສະນັ້ນ, ອາວຸດທີ່ນຳໃຊ້ແມ່ນ ມີຄວາມຍາວ 13 ຊມ, ມີນ້ຳໜັກ 170 ກຣາມ ເປັນອາວຸດທີ່ມີຄວາມສາມາດຂ້າຄົນໄດ້. **ກ** ໄດ້ດຶກມີດດ້ວຍມືທີ່ຖະໜັດ ຊຶ່ງມີໄລຍະຫ່າງພຽງແຕ່ 5 ແມັດ ການກະທຳຂອງ **ກ** ເປັນອັນຕະລາຍ ຊຶ່ງສາມາດເຮັດໃຫ້ບຸກຄົນອື່ນໄດ້ຮັບ

ບາດເຈັບ ຫຼື ເສຍຊີວິດໄດ້. ນອກຈາກນີ້, ຈຸດທີ່ຖືກມີດສຽບ ແມ່ນທາງດ້ານຫຼັງຂອງຫົວ **ຂ** ຊຶ່ງເປັນຈຸດທີ່ອັນຕະລາຍ ສາມາດເຮັດໃຫ້ **ຂ** ເສຍຊີວິດໄດ້.

**2) ໄລຍະກ່ອນເກີດເຫດ:**

ເມື່ອ **ກ** ໄດ້ດື່ມເຫຼົ້າຍາມໃດ ກໍເປັນຄົນໃຈຮ້າຍ, ມັກໃຊ້ຄວາມຮຸນແຮງດຶກມີດໃສ່ຕີນເມຍແລະ ກໍໃຊ້ຄໍາເວົ້າທີ່ຮຸນແຮງວ່າ “ຊິຂ້າຖິ້ມ” ແລະ ມັກດຶກເຄື່ອງຂອງທີ່ຢູ່ໃນເຮືອນ.

ກ່ອນເຫດເກີດຂຶ້ນ **ກ** ໄດ້ດື່ມເຫຼົ້າຂາວສາມຈອກ ຫຼັງຈາກນັ້ນ ກໍໄດ້ມີການຜິດຖຽງກັບ **ຂ** ຊຶ່ງເປັນລູກສາວທີ່ບໍ່ໄດ້ດັ່ງໃຈ. **ກ** ໄດ້ຮ້ອງໃສ່ **ຂ** ວ່າໄປໄສມາ ຄັນບໍ່ຕອບມຶງບໍ່ແມ່ນລູກກູ, ຄັນອອກໄປຈາກບ້ານນີ້ “ກູຊິຂ້າຖິ້ມ” ແລະ **ຂ** ໄດ້ເວົ້າໃຫ້ **ກ** ວ່າ: “ໝວກຫູ, ພໍ່ຜີບ້າ”.

**ກ** ມີພຶດຕິກໍາບໍ່ລົດລະຄວາມພະຍາຍາມ ຊຶ່ງສະແດງອອກຢູ່ບ່ອນວ່າ **ກ** ໄດ້ເອົາມີດ ເພື່ອຈະມາດຶກໃສ່ **ຂ** ແຕ່ແມ່ **ຂ** ໄດ້ຍາດມີດມາໄວ້ ແລ້ວບອກໃຫ້ **ຂ** ໜີໄປ, ຫຼັງຈາກນັ້ນ **ກ** ກໍໄປໄດ້ມີດມາອີກ ພ້ອມທັງເວົ້າວ່າ “ຊິຂ້າຖິ້ມ” **ກ** ເຫັນ **ຂ** ຢູ່ທາງສວນ **ກ** ຈຶ່ງໄດ້ແລ່ນອອກໄປທາງສວນ ແລະ ໄດ້ດຶກມີດໃສ່ **ຂ**.

ອີງຕາມເຫດການທີ່ກ່າວມາຂ້າງເທິງນັ້ນ ສາມາດເວົ້າໄດ້ວ່າ ເມື່ອເວລາ **ຂ** ດື່ມເຫຼົ້າແລ້ວ ກໍມີພຶດຕິກໍາ ທີ່ມັກໃຊ້ຄວາມຮຸນແຮງ ແລະ ມັກໃຊ້ຄໍາເວົ້າວ່າ “ຊິຂ້າຖິ້ມ” ໃສ່ບຸກຄົນອື່ນ. ນອກຈາກນີ້, ໃນມື້ເກີດເຫດ **ກ** ໄດ້ຜິດຖຽງ ກັບ **ຂ** ຢ່າງຮຸນແຮງ ແລະ ໄດ້ເວົ້າໃສ່ **ຂ** “ຊິຂ້າຖິ້ມ” ພ້ອມທັງເອົາມີດມາດຶກໃສ່ **ຂ** ແບບບໍ່ລົດລະຄວາມພະຍາຍາມ. ສະນັ້ນ, ສາມາດພິຈາລະນາໄດ້ວ່າ **ກ** ອາດຈະມີແຮງຈູງໃຈ ຫຼື ເຫດຜົນທີ່ຈະຄາດຕະກໍານາງນ້ອຍໄດ້.

**3) ໄລຍະເວລາຫຼັງການກະທໍາຂອງ ກ:**

ພາຍຫຼັງມີດສຽບໃສ່ສ່ວນຫຼັງຂອງຫົວ **ຂ** ແລ້ວ ກ ກໍບໍ່ໄດ້ນໍາໄປຊ່ວຍເຫຼືອຫຍັງເລີຍ ດັ່ງນັ້ນ ຈຶ່ງບໍ່ສາມາດປະຕິເສດໄດ້ວ່າ **ກ** ມີເຈດຕະນາ ຄາດຕະກໍາ **ຂ**.

**<u>ສະຫຼຸບ:</u>**

**ກ** ນໍາໃຊ້ອາວຸດທີ່ມີຄວາມສາມາດ ເຮັດໃຫ້ຄົນເສຍຊີວິດກໍຄື ມີດ ແລະ ໄດ້ດຶກໃສ່ **ຂ** ໃນໄລຍະໃກ້ຊຶ່ງເປັນການກະທໍາທີ່ເປັນອັນຕະລາຍ ຊຶ່ງຜົນທີ່ໄດ້ຮັບແມ່ນ ມີດໄດ້ສຽບເຂົ້າທາງເບື້ອງຫຼັງຂອງຫົວ **ຂ** ແລ້ວເຮັດໃຫ້ **ຂ** ເສຍຊີວິດ. ນອກຈາກນີ້, ອີງຕາມໄລຍະກ່ອນກໍ່ເຫດ ເມື່ອເວລາ **ກ** ດື່ມເຫຼົ້າແລ້ວ ກໍມີພຶດຕິກໍາ ທີ່ມັກໃຊ້ຄວາມຮຸນແຮງ ແລະ ໃນມື້ເກີດເຫດ **ກ** ກໍໄດ້ດື່ມເຫຼົ້າ ແລ້ວໄດ້ມີປາກສຽງຜິດຖຽງກັບ **ຂ** ຢ່າງຮຸນແຮງ ຈຶ່ງໄດ້ເອົາມີດມາດຶກໃສ່ ຂ, ພາຍຫຼັງທີ່ມີດສຽບໃສ່ ເບື້ອງຫຼັງຂອງຫົວ **ຂ** ແລ້ວ **ກ** ກໍບໍ່ໄດ້ມີການຊ່ວຍເຫຼືອຫຍັງເລີຍ ຈຶ່ງບໍ່ສາມາດປະຕິເສດໄດ້ວ່າ **ກ** ມີ

ເຈດຕະນາ ຄາດຕະກຳ **ກ**, ດັ່ງນັ້ນ ຈຶ່ງສາມາດສັນນິຖານໄດ້ວ່າ **ກ** ມີຄວາມເຈດຕະນາ ຄາດຕະກຳ **ຂ**.

- **ໃນກໍລະນີທີ່ ກຳນົດບໍ່ໄດ້ວ່າ ກ ມີເຈດຕະນາ ຄາດຕະກຳ ຂ:**

**1) ໄລຍະເວລາກໍ່ເຫດ:**

- ອາວຸດທີ່ **ກ** ນຳໃຊ້ໃນການກໍ່ເຫດແມ່ນ "ມີດ" ຊຶ່ງມີຄວາມຍາວ 13 ຊັງຕີແມັດ, ມີນ້ຳໜັກ 170 ກຣາມ ເປັນມີດທີ່ໃຊ້ໃນຄົວເຮືອນ.
- **ກ** ໄດ້ດື່ມເຫຼົ້າຂາວສາມຈອກ ໃນເວລາກໍ່ເຫດ, **ກ** ກັບ **ຂ** ບໍ່ໄດ້ຢູ່ກັບທີ່ ທັງສອງແມ່ນຢູ່ໃນລະຫວ່າງ ການເຄື່ອນທີ່ ແລະ ການດຶກມີດນັ້ນ ກ ກໍບໍ່ໄດ້ແນໃສ່ ເບື້ອງຫຼັງຂອງຫົວ **ຂ** ຊຶ່ງມີຄວາມເປັນໄປໄດ້ ທີ່ບັງເອີນ ດຶກບໍ່ກົງກັບເປົ້າ ດັ່ງນັ້ນ ບໍ່ສາມາດກຳນົດໄດ້ວ່າ **ກ** ມີເຈດຕະນາຂ້າ **ຂ**.
- **ກ** ບໍ່ມີຄວາມຕ້ອງການຈະເຮັດໃຫ້ **ຂ** ເສຍຊີວິດ ແຕ່ການດຶກມີດໃສ່ **ຂ** ແມ່ນເພື່ອເຮັດຂູ່ຊື່ໆ ຊຶ່ງເປົ້າໝາຍໃນການດຶກ ແມ່ນແນໃສ່ທາງຂ້າງ **ຂ** ແຕ່ມັນບໍ່ໄປຕາມເປົ້າ ມີດເລີຍໄປສຽບຖືກ **ຂ**. ຈຶ່ງພິຈາລະນາໄດ້ວ່າ **ກ** ບໍ່ມີເຈດຕະນາຄາດຕະກຳ.
- **ກ** ໄດ້ດຶກມີດ ໄປສຽບໃສ່ດ້ານຫຼັງຂອງຫົວ **ຂ** ກໍຈິງ ແຕ່ຮ່ອງຮອຍຂອງບາດແຜ ແມ່ນບໍ່ເຂົ້າເລິກພໍປານໃດ ຊຶ່ງມີດໄດ້ສຽບໃສ່ຫົວ **ຂ** ແລ້ວກໍຫຼົ່ນລົງພື້ນ. ດັ່ງນັ້ນ, ຈຶ່ງບໍ່ສາມາດພິຈາລະນາໄດ້ວ່າ ເປັນການຄາດຕະກຳ.

**2) ໄລຍະເວລາກ່ອນເກີດເຫດ:**

ກ່ອນເກີດເຫດ **ກ** ໄດ້ດື່ມເຫຼົ້າຂາວສາມຈອກ ແລະ ໄດ້ມີການຕັກເຕືອນໃຫ້ ຂ ໄປໂຮງຮຽນບໍ່ຢາກໃຫ້ **ຂ** ໄປຄ້າງຄືນຢູ່ເຮືອນໝູ່, ຕ້ອງການໃຫ້ຮຽນໜັງສືໃຫ້ຈົບ ແຕ່ **ຂ** ໄດ້ຖຽງຄວາມ ຈຶ່ງເຮັດໃຫ້ **ກ** ຢາກຮ້າຍ ແລະ ໄດ້ເວົ້າວ່າ: "ຄັນອອກໄປຈາກບ້ານນີ້ຊິຂ້າຖິ້ມ" ນັ້ນເປັນການຂູ່ ເພື່ອຕ້ອງການຢຸດພຶດຕິກຳ **ຂ** ແຕ່ຜູ້ກ່ຽວ ກໍຍັງບໍ່ຟັງຄວາມ **ກ** ຈຶ່ງໄດ້ມີການຜິດຖຽງ ກັບ **ຂ**.

**3) ໄລຍະເວລາຫຼັງເກີດເຫດ:**

ຫຼັງເກີດເຫດ **ກ** ບໍ່ໄດ້ໄປຊ່ວຍເຫຼືອ **ຂ** ເນື່ອງຈາກວ່າ **ກ** ໄດ້ເຫັນມີດຫຼົ່ນລົງພື້ນແລ້ວ ແລະ ຂ ກໍໄດ້ເອົາມືທັງສອງຈັບຫົວໄວ້ ແລ້ວແລ່ນໄປຫາ ເຮືອນໝູ່ຂອງ **ຂ** ທີ່ຫ່າງໄປ ປະມານ 100 ແມັດ.

**<u>ສະຫຼຸບ:</u>**

ກ່ອນການເກີດເຫດ 1 ຊົ່ວໂມງ **ກ** ໄດ້ດື່ມເຫຼົ້າຂາວ ປະມານສາມຈອກ ແລະ ເວລາເກີດເຫດ **ກ** ກັບ **ຂ** ແມ່ນມີການເຄື່ອນໄຫວ ໂດຍບໍ່ໄດ້ຢືນຢູ່ກັບທີ່ ຊຶ່ງມີຄວາມເປັນໄປໄດ້ ທີ່ບັງເອີນການດີກມີດ ແມ່ນບໍ່ກົງກັບເປົ້າໝາຍ ແລະ **ກ** ກໍໃຫ້ການວ່າ: "ບໍ່ໄດ້ມີເຈດຕະນາຈະຂ້າ **ຂ** ຊິເຮັດຊູ່ລາວຊື່ໆເລີຍດີກມີດ ແນເປົ້າໄປໃສ່ທາງຂ້າງຂອງ **ຂ** ແຕ່ບໍ່ໄປຕາມເປົ້າທີ່ແນ" ໝາຍຄວາມວ່າ **ກ** ຮັບຮູ້ວ່າຕົນເຮັດຫຍັງຢູ່ ແຕ່ບໍ່ສາມາດຄາດຄະເນໄດ້ ເຖິງຜົນສະທ້ອນຂອງມັນທີ່ຈະເກີດຂຶ້ນ ແລະ ນອກຈາກນັ້ນ ຍັງບໍ່ເຫັນແຮງຈູງໃຈ ທີ່ **ກ** ຈະຂ້າ **ຂ** ໂດຍເຈດຕະນາ ເນື່ອງຈາກ **ກ** ມີລູກຄົນດຽວຄື **ຂ** ລາວບໍ່ມີຄວາມຕ້ອງການທີ່ຈະເຮັດໃຫ້ **ຂ** ເສຍຊີວິດ. ຊຶ່ງໃນຕອນເກີດເຫດ **ກ** ໃຈຮ້າຍໃຫ້ **ຂ** ທີ່ບອກບໍ່ຟັງຄວາມ ບໍ່ໄປໂຮງຮຽນ ໄປນອນຄ້າງຄືນແຕ່ເຮືອນໝູ່ ມີຄວາມກັງວົນຢ້ານຮຽນບໍ່ຈົບ ທັງເປັນລູກສາວຄົນດຽວ ແລະ ເຖິງວ່າ ຈະມີແຮງຈູງໃຈທີ່ຂົ່ມຂູ່ກໍຕາມ ແຕ່ມັນກໍເປັນໄປໄດ້ຍາກທີ່ **ກ** ຈະມີແຮງຈູງໃຈ ທີ່ຈະຂ້າ **ຂ** ໄດ້. ຈາກເຫດຜົນດັ່ງກ່າວມາຂ້າງເທິງນັ້ນ ບໍ່ສາມາດພິຈາລະນາ ແລະ ກໍານົດໄດ້ວ່າ **ກ** ຄາດຕະກໍາ **ຂ** ໂດຍເຈດຕະນາ.

**IV. ສໍາລັບຂໍ້ 3 ຂ້າງເທິງນີ້, ໃນກໍລະນີ ທີ່ບໍ່ສາມາດກໍານົດໄດ້ວ່າ ກ ມີເຈດຕະນາ ຄາດຕະກໍາ ຂ, ຈະເປັນການກະທໍາຜິດໃນສະຖານໃດ ພ້ອມທັງອະທິບາຍເຫດ ຜົນ ?**

ໃນກໍລະນີທີ່ **ກ** ໄດ້ດີກມີດໃສ່ **ຂ** ເຖິງວ່າ ເຮົາບໍ່ສາມາດເວົ້າໄດ້ວ່າ ເປັນເຈດຕະນາ ຄາດຕະກໍາກໍຕາມ ແຕ່ກໍສາມາດເວົ້າໄດ້ວ່າ ເປັນເຈດຕະນາ ທໍາຮ້າຍຮ່າງກາຍ (ພາໃຫ້ເສຍຊີວິດ ) ຕາມປະມວນກົດໝາຍອາຍາ ມາດຕາ 194 ວັກ 3 ແລະ ເນື່ອງຈາກວ່າ: ການດີກມີດໃສ່ **ຂ** ນັ້ນ **ກ** ຮູ້ວ່າມັນເປັນອັນຕະລາຍ ແຕ່ກໍຍັງເຮັດ. ຊຶ່ງການທີ່ **ກ** ໄດ້ດີກມີດ ໃນໄລຍະຫ່າງ 5 ແມັດ ແລະ ມີດໄດ້ສຽບຖືກເບື້ອງຫຼັງຂອງຫົວ **ຂ** ເຮັດໃຫ້ເສຍຊີວິດນັ້ນ ບໍ່ໄດ້ໝາຍຄວາມວ່າ **ກ** ມີຄວາມຕ້ອງການ ຢາກໃຫ້ **ຂ** ເສຍຊີວິດ ແຕ່ຢ່າງໃດ ແລະ ການທີ່ **ກ** ໄດ້ດີກມີດໃສ່ **ຂ** ແມ່ນເພື່ອເຮັດຊູ່ຊື່ໆ ຊຶ່ງເປົ້າໝາຍໃນການດີກມີດ ແມ່ນແນ່ໃສ່ຂ້າງ **ຂ** ແຕ່ມັນບໍ່ໄປຕາມເປົ້າ ມີດກໍເລີຍໄປສຽບຖືກ ຂ ແລະ ກ່ອນເກີດເຫດ ກ ໄດ້ດື່ມເຫຼົ້າຂາວ ສາມ ຈອກ ແລ້ວຕອນເກີດເຫດ **ກ** ກັບ **ຂ** ກໍບໍ່ໄດ້ຢູ່ກັບທີ່ ທັງສອງແມ່ນຢູ່ໃນລະຫວ່າງເຄື່ອນທີ່ ຊຶ່ງມີຄວາມເປັນໄປໄດ້ ທີ່ການດີກມີດບໍ່ກົງກັບເປົ້າ. ດັ່ງນັ້ນ, ຈຶ່ງພິຈາລະນາໄດ້ວ່າ **ກ** ບໍ່ມີເຈດຕະນາຂ້າ **ຂ**.

ຕາມເຫດຜົນດັ່ງກ່າວ ເຖິງວ່າ ການກະທໍາຂອງ **ກ** ຈະບໍ່ເປັນ ການຄາດຕະກໍາກໍຕາມ ແຕ່ເຫັນວ່າການກະທໍາຂອງ **ກ** ນັ້ນ ແມ່ນເປັນເຈດຕະນາ ທໍາຮ້າຍຮ່າງກາຍ. ເນື່ອງຈາກວ່າ **ກ** ຮັບຮູ້ວ່າໃນມາດຕາ 14 ແມ່ນມີ 2 ຢ່າງຄື:

1. ຮັບຮູ້ວ່າຕົນເອງກໍາລັງເຮັດຫຍັງຢູ່ ແລະ ຄາດຄະເນໄດ້ເຖິງຜົນສະທ້ອນ ທີ່ມັນຈະເກີດຂຶ້ນ;
2. ຮັບຮູ້ວ່າມັນອັນຕະລາຍ ແຕ່ຈິງໃຈເຮັດ ຫຼື ຕ້ອງການເຮັດ.

ເມື່ອມາພິຈາລະນາ ທາງດ້ານທິດສະດີ " ອົງປະກອບຂອງເຈດຕະນາ " ໃນມາດຕາ 14 ແມ່ນບໍ່ໄດ້ເວົ້າເຖິງຄາດຕະກຳຢ່າງດຽວ ແຕ່ສາມາດເວົ້າເຖິງທຸກການກະທຳຜິດໂດຍເຈດຕະນາ.

ສຳລັບ ກໍລະນີ ທີ່ **ກ** ໄດ້ດຶກມີດໃສ່ **ຂ** ເຖິງບໍ່ສາມາດເວົ້າໄດ້ວ່າ ເປັນເຈດຕະນາ ຄາດຕະກຳ ກໍຕາມ ແຕ່ກໍສາມາດເວົ້າໄດ້ວ່າ ເປັນເຈດຕະນາ ທຳຮ້າຍຮ່າງກາຍ ຕາມປະມວນກົດໝາຍອາຍາ ມາດຕາ 194 ວັກ 3. ເນື່ອງຈາກວ່າ **ກ** ບໍ່ມີຈຸດປະສົງ ທີ່ຈະເຮັດໃຫ້ **ຂ** ເສັຍຊີວິດ ແຕ່ການກະທຳຂອງ **ກ** ແມ່ນໄດ້ສ້າງເງື່ອນໄຂ ໃຫ້ຜົນເສຍຫາຍນັ້ນເກີດຂຶ້ນ ແລະ ຜົນຂອງມັນ ກໍຄືເຮັດໃຫ້ **ຂ** ເສຍຊີວິດ. ດັ່ງນັ້ນ, ໃນການພິຈາລະນາກໍລະນີນີ້ ປະເດັນທີ່ຄວນເອົາໃຈໃສ່ ມີ:

**1) ກ່ອນການເກີດເຫດ:**

**ກ** ເປັນຄົນມັກດື່ມເຫຼົ້າ ແລະ ກ່ອນເກີດເຫດ **ກ** ໄດ້ດື່ມເຫຼົ້າຂາວປະມານ ສາມຈອກ ຈາກນັ້ນ **ກ** ໄດ້ຜິດຖຽງ ກັບ **ຂ** ທີ່ເວົ້າບໍ່ຟັງຄວາມ ບໍ່ມັກໄປໂຮງຮຽນ ມີແຕ່ໄປນອນຄ້າງຄືນຢູ່ເຮືອນໝູ່ ຊຶ່ງເຮັດໃຫ້ **ກ** ເກີດຄວາມຢາກຮ້າຍ ຈຶ່ງໄດ້ດຶກມີດໃສ່ ເພື່ອຕ້ອງການຢຸດເຊົາ ພຶດຕິກຳຂອງ **ຂ**.

**2) ໄລຍະເວລາກໍ່ເຫດ:**

- **ກ** ບໍ່ໄດ້ມີຄວາມຕ້ອງການ ຢາກໃຫ້ **ຂ** ເສຍຊີວິດ ແຕ່ການດຶກມີດໃສ່ **ຂ** ເປົ້າໝາຍແມ່ນ ແນ່ໃສ່ທາງຂ້າງຂອງ **ຂ** ເພື່ອເປັນການຂົ່ມຂູ່ເທົ່ານັ້ນ.
- **ກ** ກັບ **ຂ** ແມ່ນບໍ່ໄດ້ຢູ່ກັບທີ່ ຊຶ່ງທັງສອງແມ່ນຢູ່ໃນລະຫວ່າງກຳລັງເຄື່ອນທີ່ ແລະ ກ່ອນເກີດເຫດ **ກ** ດື່ມເຫຼົ້າຂາວ ສາມຈອກ ຊຶ່ງມີຄວາມເປັນໄປໄດ້ສູງ ທີ່ການດຶກມີດຂອງ **ກ** ນັ້ນ ແມ່ນບໍ່ໄປຕາມເປົ້າ ມີດຈຶ່ງໄປສຽບຖືກຫົວ **ຂ**.
- ອາວຸດທີ່ **ກ** ນຳໃຊ້ແມ່ນ ມີດທີ່ມີລວງຍາວ 13 ຊັງຕີແມັດ, ມີນ້ຳໜັກ 170 ກຣາມ ຊຶ່ງເປັນມີດທີ່ໃຊ້ໃນຄົວເຮືອນ ແລະ ຮ່ອງຮອຍຂອງບາດແຜ ແມ່ນບໍ່ໄດ້ເຂົ້າເລິກພໍປານໃດ ຊຶ່ງເຫັນມີດໄດ້ສຽບເຂົ້າຫົວ **ຂ** ແລ້ວກໍຫຼົ່ນລົງພື້ນ.

**3) ໄລຍະເວລາຫຼັງເກີດເຫດ:**

ຫຼັງຈາກມີດສຽບໃສ່ ເບື້ອງຫຼັງຂອງຫົວ ຂ ມີດກໍໄດ້ຫຼົ່ນລົງພື້ນ ແລ້ວ ຂ ກໍໄດ້ເອົາມືທັງສອງຈັບຫົວແລ້ວກໍແລ່ນໄປຫາເຮືອນໝູ່ ທີ່ຫ່າງອອກໄປປະມານ 100 ແມັດ. ເມື່ອເຫັນຄືແນວນັ້ນ ກ ຈຶ່ງບໍ່ໄດ້ນຳ ຂ ໄປ.

<u>**ສະຫຼຸບ:**</u>

ກ ບໍ່ມີຄວາມຕ້ອງການໃຫ້ ຂ ໄດ້ຮັບບາດເຈັບ ຫຼື ເສຍຊີວິດແຕ່ຢ່າງໃດ ໝາຍຄວາມວ່າ ກ ບໍ່ຕ້ອງການໃຫ້ເກີດຜົນເສຍຫາຍ ແຕ່ການກະທຳຂອງ ກ ແມ່ນໄດ້ສ້າງເງື່ອນໄຂ ໃຫ້ຜົນເສຍຫາຍນັ້ນ

ເກີດຂຶ້ນ ກໍຄືເຮັດໃຫ້ ຂ ເສຍຊີວິດ ນັ້ນກໍສາມາດສັນນິຖານໄດ້ວ່າ ການກະທຳ ຂອງ ກ ແມ່ນເປັນການທຳຮ້າຍຮ່າງກາຍ ພາໃຫ້ເສຍຊີວິດ ຕາມມາດຕາ 194 ວັກ 03 ຂອງປະມວນກົດໝາຍອາຍາ.

**V. ໃນກໍລະນີສຶກສານີ້ ມີປະເດັນທີ່ເຫັນວ່າຄວນມີການສືບສວນ-ສອບສວນເພີ່ມເຕີມ ຫຼື ບໍ່ ? ຖ້າມີ, ຈົ່ງອະທິບາຍປະເດັນດັ່ງກ່າວພ້ອມທັງໃຫ້ເຫດຜົນ ?**

ໃນກໍລະນີສຶກສານີ້ ມີບາງປະເດັນທີ່ເຫັນວ່າ ຍັງບໍ່ທັນຈະແຈ້ງ ແລະ ຄວນມີການສືບສວນ-ສອບສວນເພີ່ມເຕີມ ຄື:

ຕໍ່ກັບເຫດການທີ່ເກີດຂຶ້ນ ໃນຄະດີດັ່ງກ່າວນີ້ ແມ່ນມີຄວາມຈຳເປັນ ທີ່ຈະຕ້ອງສືບສວນ-ສອບສວນເພີ່ມເຕີມ ເພື່ອຈະຮວບຮວມບັນດາຫຼັກຖານ ທີ່ການສັນນິຖານ ເຖິງຄວາມເຈດຕະນາ ຄາດຕະກຳ ຫຼື ບໍ່ ແລະ ເພື່ອເຮັດໃຫ້ຄະດີມັນຈະແຈ້ງຂຶ້ນ ຊຶ່ງປະເດັນທີ່ຕ້ອງສືບສວນ-ສອບສວນເພີ່ມເຕີມ ນັ້ນມີ:

1. ຊັນນະສູດ ສະຖານທີ່ເກີດເຫດ ແລະ ເກັບກຳຂໍ້ມູນເພີ່ມເຕີມ ໃນສະຖານທີ່ເກີດເຫດ ເປັນຕົ້ນແມ່ນສະພາບໃນບ້ານ ແລະ ສວນ, ໄລຍະເສັ້ນທາງທີ່ ກ ແລະ ຂ ຍ່າງ, ໄລຍະທາງ ເຮືອນຂອງ ກ ກັບເຮືອນໝູ່ ຂ ໂດຍສ້າງແຜນຜັງບ່ອນເກີດເຫດຕົວຈິງ ແລະ ຖ່າຍຮູບບ່ອນເກີດເຫດ.
2. ທົດສອບຂໍ້ມູນຄືນໃໝ່ ເພື່ອກວດສອບສະພາບຕົວຈິງ ຂອງເຫດການທີ່ເກີດຂຶ້ນ ຄືນອີກ ກ່ຽວກັບຕຳ ແໜ່ງ, ທ່ວງທ່າ, ໄລຍະຫ່າງ ຂອງ ກ ກັບ ຂ ໃນຂະນະທີ່ ກ ດຶກມີດໃສ່ ຂ.
3. ຊັນນະສູດຊາກສົບ ເພື່ອກວດວິເຄາະ ໂດຍຜູ້ຊ່ຽວຊານ ທາງດ້ານນິຕິວິທະຍາ ເພື່ອໃຫ້ມີຄວາມຈະແຈ້ງ ແລະ ຊັດເຈນ ກ່ຽວກັບຕຳແໜ່ງ, ລະດັບ, ຮອຍຂອງບາດແຜ, ການຕາຍຂອງ ຂ ແລະ ອື່ນໆ.
4. ເອົາຄຳໃຫ້ການເມຍຂອງ ກ ໃນຖານະທີ່ເປັນພະຍານ ຜູ້ເຫັນເຫດການທີ່ເກີດຂຶ້ນ ກ່ຽວກັບ ພຶດຕິກຳຂອງ ກ ໃນໄລຍະກ່ອນເກີດເຫດ, ເວລາເກີດເຫດ ແລະ ຫຼັງເກີດເຫດເປັນແນວໃດ ເພື່ອສົມທຽບຄວາມສອດຄ່ອງ ກັບຄຳໃຫ້ການຂອງ ກ.
5. ເອົາຄຳໃຫ້ການໝູ່ ຂອງ ຂ ຜູ້ທີ່ ຂ ໄດ້ແລ່ນໄປຫາ ຕອນທີ່ໄດ້ຮັບບາດເຈັບ ເພື່ອປຽບທຽບ ກັບຄຳໃຫ້ການຂອງ ກ ວ່າສອດຄ່ອງກັນບໍ່ ກ່ຽວກັບ ເຫດການທີ່ເກີດຂຶ້ນ ແລະ ສອບຖາມ ກ່ຽວກັບ ພຶດຕິກຳຂອງ ກ ພາຍຫຼັງເກີດເຫດວ່າ ຜູ້ກ່ຽວມີຄວາມເປັນຫ່ວງເປັນໄຍ ຕໍ່ກັບ ຂ ບໍ່.

***<u>ໝາຍເຫດ:</u>*** *ຜົນການຄົ້ນຄວ້າໃນກໍລະນີສຶກສານີ້ ບໍ່ໄດ້ຈຳກັດເນື້ອໃນພຽງແຕ່ເທົ່ານີ້ ຜູ້ທີ່ຈະນຳໃຊ້ເຂົ້າໃນການຮຽນ-ການສອນ, ການຝຶກອົບຮົມ ແລະ ການຄົ້ນຄວ້າວິໄຈ ສາມາດໝູນໃຊ້ໄດ້ຕາມຄວາມເໝາະສົມ ຂອງແຕ່ລະຂົງເຂດ.*

# <u>ເອກະສານຊ້ອນທ້າຍ</u>


ຂໍ້ເທັດຈິງ
ຫຼັກຖານທາງກົງ
ຫຼັກຖານອື່ນ ທີ່ນໍາມາ ສະໜັບສະໜູນ
ຫຼັກຖານອື່ນ ທີ່ນໍາມາ ສະໜັບສະໜູນ
ຫຼັກຖານອື່ນ ທີ່ນໍາມາ ສະໜັບສະໜູນ
ຫຼັກຖານອື່ນ ທີ່ນໍາມາ ສະໜັບສະໜູນ


ຂໍ້ເທັດຈິງ
ການ ສັນນິຖານ
ຫຼັກຖານ ທາງອ້ອມ
ຫຼັກຖານ ທາງອ້ອມ
ຫຼັກຖານ ທາງອ້ອມ
ຫຼັກຖານ ທາງອ້ອມ

**ຈັດພິມເພື່ອແຈກຢາຍ ຫ້າມ ຊື້ - ຂາຍ**

**ສະໜັບສະໜູນການພິມໂດຍ**

ໂຄງການສົ່ງເສີມການພັດທະນາ ແລະ ສ້າງຄວາມເຂັ້ມແຂງລັດທີ່ປົກຄອງດ້ວຍກົດໝາຍໃນຂົງເຂດຍຸຕິທຳ

JICA

JICA Project for Promoting Development and Strengthening of the Rule of Law

J•ROL

<u>ພິມຄັ້ງທີ I:</u> ຈຳນວນ 3.500 ຫົວ, ທີ່ ໂຮງພິມ ປານຄຳ ຈຳປາ.